<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ</u>

Copyright © 2003 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2003

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 4-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-7
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 11-14
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-14
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ເພື່ອຕົວເຈົ້າເອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ ຂ:4-16

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ ບົດທີ 1 ແລະ ຂ

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາກໍເຫມືອນກັນກັບຄົນອິສຣາເອນສມັຍເດີມ, ຄວນເອົາໃຈໃສ່ກ່ຽວກັບຄວາມບາບ, ຄວາມບໍ່ເປັນທັມຂອງຕົວເອງ ຫລາຍກວ່າຈະເຫັນຂອງຄົນອື່ນ.

**ຄຳຖາມເພື່ອສຳຣວດ:** ພຣະເຈົ້າມີພຣະປະສົງຢາກໃຫ້ເຮົາເນັ້ນຫນັກໃສ່ຄວາມບາບຂອງໃຜຫລາຍກວ່າອື່ນໃດຫມົດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ເຮົາເຫັນວ່າ ຄວນຈະເນັ້ນຫນັກໃສ່ຄວາມບາບຂອງຕົວເອງ ແລະເປັນພາກສ່ວນໃນການແກ້ໃຂຄວາມອະທັມໃນສັງຄົມ.

## ຄຳນຳ

ທ່ານເຄີຍໄດ້ເບິ່ງ ກາຕູນ ທີ່ມີຊື່ວ່າ ປຸບ ແບ ຫລືບໍ່? ມີມື້ນຶ່ງ ປຸບແບ ໄດ້ໄປຢ້ຽມໃນເຮືອນຂອງກະຕ່າຍ, ກະຕ່າຍກໍຖາມຂຶ້ນວ່າ: ທ່ານຕ້ອງການນົມຂຸ້ນບໍ່ ຫລືວ່າເຂົ້າຈີ່ ຫລືວ່ານ້ຳເຜີ້ງ? ປຸບແບ ຕອບວ່າ ບໍ່ຕ້ອງເອົາເຂົ້າຈີ່ດອກ ຂໍແຕ່ນ້ຳເຜີ້ງກໍພໍແລ້ວ. ນ້ຳເຜີ້ງເປັນອາຫານທີ່ ຫມີ ມັກຫລາຍທີ່ສຸດ ພໍໄດ້ນ້ຳເຜີ້ງມາແລ້ວກໍກົ້ມຫນ້າກິນທ່າດຽວ. ນ້ຳເຜີ້ງໃຫທີນຶ່ງກໍຫມົດໄປ ກະຕ່າຍນ້ອຍກໍຍໍໄຫທີສອງມາໃຫ້ ຕໍໄປເລື້ອຍໆ ຈົນນ້ຳເຜີ້ງຂອງກະຕ່າຍຫມົດ.

ເມື່ອກິນນ້ຳເຜີ້ງຫລາຍເກີນໄປ ກໍເຮັດໃຫ້ທ້ອງຂອງຫມີ ນັ້ນໃຫຍ່, ລາວພະຍາຍາມທີ່ຈະອອກຈາກຮູຂອງກະຕ່າຍ ແຕ່ອອກໄດ້ແຕ່ຫົວ ຫມີຈຶ່ງເວົ້າວ່າ ຂ້ອຍອອກຮູບໍ່ໄດ້ແລ້ວ. ກະຕ່າຍຈຶ່ງຊ່ວຍຍູ້ກົ້ນແຕ່ກໍບໍ່ເປັນປໂຍດຫຍັງ. ເມື່ອເປັນດັ່ງນັ້ນ ຈຳເປັນຕ້ອງໄດ້ຊອກຫາຜູ້ຊ່ຽວຊານ, ນົກເຄົ້າເວົ້າ. ຕົວກະຮອກນ້ອຍ ຊ້ຳພັດຜິວປາກ ຮ້ອງອອກໄປຢ່າງດັງວ່າ: ມີໃຜພໍຈະຊ່ວຍໄດ້ແດ່ບໍ່? ໃນທີ່ສຸດ ຄຣິສໂຕເຟີ ກໍມາເຖິງ ແລະກໍໄດ້ອະທິບາຍວ່າ ໂອ ດຽວນີ້ລາວຫາກໍກິນອີ່ມໃຫມ່ໆ ຕ້ອງໃຫ້ລາວເຊົາກິນເສັຍກ່ອນເພື່ອທ້ອງຂອງລາວຈະແວບລົງ.

ມື້ວັນຜ່ານໄປ, ຕົວກະຮອກນ້ອຍກໍນຳຖົງອາຫານມາກິນ. ຕົວປຸບແບ ເຫັນກໍອົດຖາມບໍ່ໄດ້. ມີຫຍັງແດ່ຢູ່ໃນຖົງຫັ້ນ? ຫລາຍຢ່າງ, ກະຮອກຕອບ. ມີນ້ຳເຜີ້ງແດ່ບໍ່? ປຸບແບຖາມ. ກະຕ່າຍກໍແຊກສຽງຂຶ້ນວ່າ: ຢ່າເດີ້, ຢ່າກິນອີກເດີ້, ກະຕ່າຍບໍ່ຢາກໃຫ້ ປຸບແບ ຢູ່ໃນນັ້ນດົນເກີນໄປ.

ສິ່ງທີ່ຫນ້າສົນໃຈຫລາຍກໍຄື ຕົວກະຮອກນ້ອຍຜິວປາກ ຮ້ອງອອກໄປ ວ່າຕົວ ປຸບແບ ກິນຫລາຍ ແຕ່ປາກຂອງຕົວເອງ ກໍຫຍ້ຳ ກິນຢູ່ບໍ່ເຊົາຈັກເທື່ອ. ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າ ເຮົາເຫັນຄວາມບາບຂອງຄົນອື່ນຢ່າງຈະແຈ້ງ ແຕ່ບາບຂອງຕົວເອງບໍ່ເຫັນເລີຍ. ມື້ນີ້ພວກເຮົາຈະມາເວົ້າເຖິງເຣື່ອງບາບຂອງປະຊາຊາດທັງຫລາຍໃຫ້ເຫັນຢ່າງຈະແຈ້ງ.

<u>ຄຳສັ່ງສອນຕໍ່ສູ້ຄວາມບາບເຈັດຢ່າງຂອງປະຊາຊາດ</u> (1:1-2:5)

ຖ້າຈະເວົ້າເຖິງເຣື່ອງຂອງອາໂມດແລ້ວ ຍັງມີຫລາຍຢ່າງທີ່ເຮົາບໍ່ຮູ້ກ່ຽວກັບລາວ ເຮົາຮູ້ພຽງວ່າ ລາວເປັນຄົນມາຈາກເມືອງ ເຕກວາ ຊຶ່ງເປັນເມືອງນ້ອຍຂອງຊາວຢູດາ ໃຕ້ກຸງເຢຣູຊາເລັມ ປະມານ 10 ໄມລ໌. ພຣະຄຳພີຍັງບອກພວກເຮົາອີກວ່າ ລາວເປັນຜູ້ນຶ່ງທີ່ຢູ່ໃນພວກເຝົ້າຝູງແກະ. ແຕ່ບໍ່ຮູ້ວ່າ ລາວແຕ່ງງານແລ້ວຫລືຍັງ, ແລະມີລູກຈັກຄົນ. ເຮົາຮູ້ຄັກແນ່ວ່າ ລາວຖືກພຣະເຈົ້າເອີ້ນ ເພື່ອນຳພຣະຄຳ ໄປສູ່ປະຊາຊາດຕ່າງໆ. ອາໂມດເລີ້ມປະກາດ ປະມານປີ 760 ກ່ອນຄຣິສຕະສັກຣາດ. ສມັຍນັ້ນ ຄົນຂອງພຣະເຈົ້າຖືກແບ່ງອອກເປັນສອງປະເທດ. ການປະກາດ ໃນຄາວ ອິສຣາເອນຮຸ່ງເຮືອງເຫລືອງເຫລື້ອມ ສມັຍ ກະສັດ ເຢໂຣໂບອາມ ທີ 2 (786-746 ກຄ, ເບິ່ງ 2 ພົງກະສັດ 14:23-30; ໂຮເຊຍາ 1:1) ກະສັດອຸດຊີຍາ ເປັນຜູ້ປົກຄອງ ອານາຈັກພາກໃຕ້ ໃນເຢຣູຊາເລັມ (783-742 ກຄ, ເບິ່ງໃນ 2ພົງສາວະດານ 26; ເອຊາຍາ 1:1; 6:1; ໂຮເຊຍາ 1:1.)

ໃນປະວັດສາດຂອງອິສຣາເອນເວລານັ້ນ, ຫລາຍທ່ານກໍສັນນິຖານວ່າ ຊາວອິສຣາເອນມີຄວາມຍິນດີໃນພຣະພອນຂອງພຣະເຈົ້າ. ພຣະເຈົ້າກໍພະຍາຍາມຈະຕີວົງລ້ອມຮັກສາຄົນຂອງພຣະອົງໄວ້. ອາໂມດປ່າວປະກາດຕາມເຂດຊາຍແດນ ຄື ດາມັສກັດ, ກາຊາ, ໄທຣະ, ເອໂດມ, ອັມໂມນ, ໂມອາບ ແລະ ຢູດາ.

ໃນທັງຫມົດນີ້ ເຮົາຂໍເອົາຢູດາ ມາເປັນຕົວຢ່າງ. ຢູດາໄດ້ລະເມີດ ສາມຄັ້ງແລະສີ່ຄັ້ງ, ພວກເຂົາຫລົງລືມພຣະບັນຍັດ ຂອງພຣະເຈົ້າ , ພວກເຂົາບໍ່ຮັກສາກົດເກນຂອງພຣະເຈົ້າ. ຄົນຢູດາຍັງປະຕິເສດ ກົດບັນຍັດຂອງໂມເຊອີກດ້ວຍ.

ພວກເຂົາຈະຕ້ອງໄດ້ຮັບການລົງໂທດຢ່າງແນ່ນອນ. ບໍ່ແມ່ນແຕ່ຄົນຊົນຊາດອື່ນເທົ່ານັ້ນ, ຄົນຂອງພຣະເຈົ້າກໍເຊັ່ນດຽວກັນ ການບໍ່ນັບຖືຄຳຫມັ້ນສັນຍາ ຫລື ປະໄວ້ໂດຍບໍ່ຄຳນຶງເຖິງນັ້ນກໍແມ່ນຄວາມບາບ ເຫມືອນກັນກັບການຄ້າຂາຍມະນຸດ.

<u>ຄຳສັ່ງສອນຕໍ່ສູ້ການກະທຳບາບຂອງຄົນພຣະເຈົ້າ</u> (2:6-8)

ເຮົາເຫັນແລ້ວວ່າ ອາໂມດ ໄດ້ຂີດເສັ້ນໃຫ້ເຫັນຄວາມບາບຂອງສັດຕຣູຂອງອິສຣາເອນ, ຜູ້ຟັງເທສນາທັງຫຼາຍມີຄວາມດີໃຈຫລາຍ. ເວລາບົດເທສນາບົດທີ 7 ຈົບລົງໄປ ປະຊາຊົນກໍຖືວ່າຄົບຖ້ວນ ແລະພຽງພໍ. ເພາະວ່າເລກ 7 ແມ່ນເລກທີ່ຫມາຍເຖິງການຄົບຖ້ວນ. ກະຮອກນ້ອຍເຫັນ ການກິນຫລາຍຂອງ ປຸບ ແບ ແຕ່ບໍ່ເຫັນຕົວເອງ. ເຊັ່ນດຽວກັນກັບຄົນອິສຣາເອນ ເຫັນຄວາມບາບຂອງຜູ້ອື່ນ ແຕ່ບໍ່ເຫັນຄວາມບາບຂອງຕົວເອງ. ເມື່ອອາໂມດສັ່ງສອນເຖິງເຈັດຊົນຊາດແລ້ວ ທຸກຄົນກໍດີໃຈ. ແຕ່ວ່າ ອາໂມດຍັງຈະເທດບົດທີ 8 ອີກ. ຈະເວົ້າໃຫ້ຊົນຊາດໃດອີກ. ເວລາອາໂມດກ່າວຄຳວ່າ ອິສຣາເອນ ຊຶ່ງເປັນຊື່ຂອງພວກທີ່ກຳລັງຟັງລາວເວົ້າຢູ່. ຊ່າງຫນັກຫນ່ວງຫລາຍແທ້ເດ, ພໍປານກັບຟ້າຜ່າ. ຄົນອິສຣາເອນ ໄດ້ເຈາະຈົງໃສ່ບາບຂອງຄົນອື່ນ, ຊົນຊາດອື່ນ ແລະ ກໍບໍ່ເຄີຍຄິດວ່າ ຕົວເອງໄດ້ເຮັດບາບເລີຍ ເພາະຕົວເອງມານະມັສການ, ມາຮ້ອງເພງ, ມາສຶກສາ, ມາຖວາຍຊັບສິນແລະອື່ນໆອີກ. ພວກເຂົາຄິດວ່າຈະກັບບ້ານແລ້ວ. ອາໂມດຍັງມາເພີ້ມຄຳສອນຕໍ່ໄປອີກ (2:6) ການກ່າວໂທດສະເພາະເຈາະຈົງແມ່ນຢູ່ໃນ 2:6-8. ໂດຍໃຊ້ສູດດຽວກັນກັບການກ່າວໂທດຂອງພວກຕ່າງຊາດ, ເພາະຄົນອິສຣາເອນກໍບໍ່ແຕກຕ່າງຫຍັງກັນກັບພວກຕ່າງຊາດ.

ພວກເຮົາອາດເດົາໄດ້ວ່າ ເວລາ ອາໂມດກ່າວສິ້ນສຸດລົງຄຳວ່າ ອາແມນ ຄົງຈະບໍ່ມີ ຄົນເວົ້າວ່າ ໂອະໂອ....

ພວກເຮົາເປັນຈັ່ງໃດກັນແທ້. ອາໂມດກ່າວວ່າ ພຣະເຈົ້າເປັນພຣະເຈົ້າຂອງຄົນທົ່ວໄປ ພຣະອົງເປັນພຣະເຈົ້າຂອງທຸກຊົນຊາດ, ພຣະເຈົ້າເປັນພຣະເຈົ້າຂອງທຸກຢ່າງ, ອານາຈັກພາກເໜືອຂອງພຣະອົງກໍເປັນຂອງພຣະເຈົ້າດ້ວຍ.ພຣະເຈົ້າໄດ້ຮຽກຮ້ອງໃຫ້ຄົນຂອງພຣະອົງເອົາຈິງເອົາຈັງໃນຄວາມບາບຂອງຕົນດ້ວຍ. ເມື່ອເຮົາອ່ານຂໍ້ 6,7, ແລະ 8 ພວກເຮົາຈະເຫັນ ຄວາມບໍ່ເປັນທັມ, ແລະກໍຍັງເຫັນຄຸນຄ່າຂອງມະນຸດຫລຸດລົງຕ່ຳຫລາຍ. ການລ່ວງປະເວນີ ແລະການກະທຳອະນາຈານຕ່າງໆ ພວກເຂົາໄດ້ເຮັດໃຫ້ພຣະນາມຂອງພຣະເຈົ້າເສື່ອມເສັຍ. ບໍ່ພໍທໍ່ນັ້ນພວກເຂົາຍັງໄດ້ດື່ມເຫລົ້າ ໃນພຣະວິຫານຂອງພຣະເຈົ້າ.

**<u>ຄວາມດີຂອງພຣະເຈົ້າຕໍ່ຄົນອິສຣາເອນ</u>** (2:9-12)

ໃຜກໍຕາມທີ່ກົດຂີ່ຂົ່ມເຫັງຄົນທຸກ ຄົນຈົນ ພຣະເຈົ້າກໍຈະທຳງານກັບຄົນນັ້ນ ບໍ່ໄວກໍຊ້າ. ຄົນອິສຣາເອນ ເປັນຊົນຊາດທີ່ພຣະເຈົ້າຊົງເລືອກ ພຣະເຈົ້າຍັງເມດຕາປານີຢູ່. ພຣະອົງໄດ້ເຮັດໃຫ້ອິສຣາເອນຮວມກັນເປັນຊົນຊາດ. ພຣະອົງກໍມັກຈະໃຊ້ຄຳວ່າ "ເຮົາ" ຊຶ່ງເຫັນໃນຂໍ້ 10 ແລະ 11 ເລື້ອຍໆ.

ຄົນ ອາໂມໄຣ (ຊຶ່ງເປັນຄົນປາແລສໄຕ) ເຂົາເປັນຄົນໃຫຍ່ ແລະແຂງແຮງ (ຈົດບັນຊີ 13:28, 31-32). ເຖິງແມ່ນວ່າ ພວກເຂົາຈະໃຫຍ່ປານຕົ້ນໄມ້ ແລະແຂງດັ່ງຕົ້ນກໍ່ກໍຕາມ ພຣະອົງກໍຈະເຮັດໃຫ້ພວກເຂົາໝົດໄປ. ພຣະເຈົ້າກ່າວວ່າ ພຣະອົງຈະທຳລາຍຈົນເຖິງຮາກ ແລະຈົນໃຫ້ພວກເຂົາສິ້ນໄປ.

ອາໂມດຍັງໄດ້ທວນຄືນຊີວິດເບື້ອງຫລັງ ຕອນເວລາທີ່ພຣະອົງນຳພວກເຂົາອອກມາຈາກປະເທດອີຢິບ, 40 ປີທີ່ພຣະອົງນຳພວກເຂົາ, ພຣະອົງໄດ້ມອບຜູ້ນຳໃຫ້ພວກເຂົາ, ພຣະອົງໄດ້ມອບພື້ນແຜ່ນດິນອັນອຸດົມສົມບູນໃຫ້ພວກເຂົາ ແລະຍັງໃຫ້ຜາບແພ້ຂ້າເສິກສັດຕຣູທຸກຢ່າງ. ປານນັ້ນພວກເຈົ້າກໍຍັງ ເຮັດໃຫ້ ຄົນນາຊາລີ (ຄົນນາຊາລີ ແມ່ນພວກທີ່ດຳລົງຊີວິດບໍຣິສຸດເປັນຕົວຢ່າງ, ພວກນີ້ສາມາດຕິດຕໍ່ກັບຄົນທີ່ຕາຍໄປແລ້ວໄດ້.) ພວກເຈົ້າບໍ່ໄດ້ປົກປ້ອງພວກເຂົາເລີຍ.

**<u>ພຣະເຈົ້າຕອບແທນການກະບົດຂອງອິສຣາເອນ</u>** (2:14-16)

ອານາຈັກຝ່າຍເໜືອ ຫວັງວ່າ ເວລາພຣະເຈົ້າສະເດັດມາພຣະອົງກໍຈະພໍພຣະທັຍນຳພວກເຂົາ. ແລະພຣະອົງກໍຈະລົງໂທດ ພວກທີ່ເປັນສັດຕຣູຂອງອິສຣາເອນ. ແຕ່ໃນຂະນະເວລາລໍຖ້ານີ້ ພວກເຂົາກໍໄດ້ຮຽນຮູ້ເຖິງຄວາມຈິງ ໃນວິທີການທຳລາຍຂອງພຣະອົງ, ຄື ບໍ່ແມ່ນແຕ່ຄົນຕ່າງຊາດເທົ່ານັ້ນ ຮວມທັງຄົນອິສຣາເອນດ້ວຍ. ພວກເຂົາພາກັນຕົກໃຈ. ວັນນັ້ນຈະເປັນຢ່າງໃດ (ອາໂມດ 5:18-20) ການແລ່ນຂອງອິສຣາເອນຈະໄປບໍ່ພົ້ນ ເຣື່ອແຮງຂອງເຈົ້າຈະບໍ່ພຽງພໍ ໃນວັນນັ້ນ. ຄົນທີ່ມີກຳລັງກໍຈະແລ່ນໄປຕົວເປົ່າ, ພວກເຂົາຈະວາງອາວຸດແລ້ວກໍປົບໜີ.

## <u>ຄຳແນະນຳສຳລັບວັນນີ້</u>

ຄົນອິສຣາເອນ ຖືກກວດໄປເປັນຊະເລີຍກໍເພາະວ່າ ພວກເຂົາຫຍຸ້ງຍາກໃນການຊອກເບິ່ງຄວາມບາບຂອງຄົນອື່ນ ລືມເບິ່ງຄວາມບາບຂອງຕົວເອງ ແລະບໍ່ເຫັນການກະທຳຂອງຕົວເອງ. ພື້ນງານ ແລະວັດຖຸສິ່ງຂອງມັນໄດ້ຄວບຄຸມຈິດໃຈຂອງພວກເຂົາໆ ຈຶ່ງລືມຮອດຄົນທຸກ ຄົນຍາກ.
ພວກເຮົາກໍເປັນເຊັ່ນກັນ ບັນຊີຄວາມບາບຂອງຕົວເອງບໍ່ມີ ແຕ່ບັນຊີຄວາມບາບຂອງຄົນອື່ນຍາວຢຽດ.

ໃຫ້ເຮົາຫັນມາສຳຣວດຕົວເອງໃຫ້ຫລາຍທີ່ສຸດ ບາບນັ້ນອາດຈະຢູ່ກາງເຮືອນ ຫລື ກາງບ້ານຂອງພວກ
ເຮົາ ຫລືຢູ່ຫລັງບ້ານ. ຖ້າພວກເຮົາຫາກບໍ່ເຮັດດັ່ງນັ້ນ ລະວັງພວກເຮົາຈະເປັນເຫມືອນຄົນອິສຣາເອນ ທີ່
ພຣະເຈົ້າລົງໂທດພວກເຂົານັ້ນ.

<u>ຄຳຖາມ:</u>

1. ເປັນຫຍັງພວກເຮົາຈຶ່ງເຫັນແຕ່ຄວາມບາບຂອງຄົນອື່ນ ທັ້ງໆທີ່ຄວາມບາບຂອງຕົວເອງກໍຫລາຍພໍຢູ່ແລ້ວ?

2. ພວກເຮົາລືມຄວາມຮຽກຮ້ອງຕ້ອງການຂອງຄົນອື່ນ ໃນເວລາໃດແດ່?

3. ເປັນຫຍັງອາໂມດຈຶ່ງໃຊ້ສູດດຽວກັນຣະຫວ່າງຄົນຕ່າງຊາດ ແລະຄົນອິສຣາເອນ?

4. ຖ້າອາໂມດມາເທສນາໃຫ້ຄົນອະເມຣິກາທົ່ວປະເທດ ເພິ່ນຈະວ່າຢ່າງໃດແດ່?

# ບົດຮຽນທີ 2
# ການຕັດສິນຄວາມອະທັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ 3:9-4:3; 5:10-15; 6:4-7; 8:4-6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 3:1--4:3; 5:1-17; 6:1-14; 8:4-14

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງທຳລາຍດ້ານເສຖກິດ ການເງິນ ຕໍ່ຜູ້ທີ່ ກົດຂີ່ຂົ່ມເຫັງຄົນທຸກ ແລະບີບເຄັ້ງ ຄົນທີ່ມີກຳລັງນ້ອຍກວ່າຕົນ.

**ຄຳຖາມເພື່ອສຳຣວດ:** ພຣະເຈົ້າຊົງເປັນຫ່ວງເປັນໃຍໃນດ້ານເສຖກິດ ການເງິນ ຫລືບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ເຮົາເຫັນວ່າ ການກົດຂີ່ຂົ່ມເຫັງ ແມ່ນສິ່ງທີ່ພຣະເຈົ້າ ບໍ່ຊົງພໍພຣະທັຍ ພຣະອົງຈະທຳລາຍຢ່າງແນ່ນອນ, ຈະນຳມາເປັນບົດຮຽນຢ່າງໃດ ໃນຊີວິດປະຈຳວັນປັດຈຸບັນ?

## ຄຳນຳ

ຈອນ ແລະ ນາງໂຣແບກ້ຕາ ພາກັນຍ່າງເລາະອ້ອມ ເຮືອນຫລັງໃຫມ່ຂອງພວກເຂົາ. ນາງໂຣແບກ້ຕາ ໄດ້ຈ່າຍຄ່າເຮືອນດ້ວຍເງິນທີ່ລາວທຳງານເອງ. ລາວເວົ້າກັບຈອນກ່ຽວກັບເຣື່ອງນີ້ຢູ່ເລື້ອຍໆ. ເມື່ອຍ່າງໄປທົ່ວທຸກຫ້ອງແລ້ວ ລາວກໍເວົ້າກັບ ຈອນວ່າ: "ຈອນ, ຄັນບໍ່ແມ່ນຍ້ອນເງິນຂອງຂ້ອຍ ພວກເຮົາຄົງຈະບໍ່ໄດ້ມາຢູ່ທີ່ນີ້" ຈອນ ບໍ່ເວົ້າຫຍັງຈັກຄຳ.

ພໍເຖິງຕອນບ່າຍ ຣົຖບັນທຸກຄັນໃຫຍ່ ກໍແກ່ເຄື່ອງເຮືອນໃຫມ່ໆມາ-- ຊຶ່ງນາງໂຣແບກ້ຕາໄດ້ຈ່າຍໄວ້ແລ້ວດ້ວຍເງິນຂອງລາວເອງ. ເມື່ອເຄື່ອງເຮືອນໃຫມ່ໆເຂົ້າປະຈຳທີ່ເປັນທີ່ຮຽບຮ້ອຍແລ້ວ ພວກເຂົາກໍມາເບິ່ງເຄື່ອງເຫລົ່ານັ້ນ ເຫັນວ່າງາມຫລາຍ ແລະກໍຈັດແຈງໄດ້ດີຫລາຍ. ນາງຈຶ່ງເວົ້າກັບ ຈອນອີກວ່າ: "ຈອນ, ຄັນບໍ່ແມ່ນຍ້ອນເງິນຂອງຂ້ອຍ ເຄື່ອງເຮືອນເຫລົ່ານີ້ ຄົງຈະບໍ່ມາຢູ່ທີ່ນີ້. ອີກເທື່ອນຶ່ງ ຈອນກໍຍັງມິດຢູ່.

ພໍຄ້າຍແລງອີກ ຣົຖ ກະບະຄັນນຶ່ງກໍແກ່ ເຄື່ອງເອເລັກໂທຣນິກ ຣະບົບພິເສດມາ. ພວກເຂົາກໍມາຈັດວາງ ທີວີ ວີຊີອາ ເທັບ ແລະອື່ນໆອີກ...ເມື່ອທຸກຢ່າງຮຽບຮ້ອຍແລ້ວ ນາງ ໂຣແບັກ້ຕາກໍເວົ້າກັບ ຈອນອີກວ່າ: " ຈອນ, ຄັນຖ້າບໍ່ແມ່ນຍ້ອນເງິນຂອງຂ້ອຍ ເຄື່ອງຫລິ້ນຕ່າງໆນີ້ຄົງບໍ່ມາຢູ່ທີ່ນີ້"

ໃນທີ່ສຸດ ຈອນກໍອົດບໍ່ໄດ້: " ທີ່ຮັກ, ຂ້ອຍບໍ່ຢາກໃຫ້ເຈົ້າເສັຍໃຈ, ຖ້າບໍ່ຍ້ອນເງິນເຈົ້າ ຂ້ອຍເອງກໍຄົງຈະບໍ່ມາຢູ່ທີ່ນີ້ເຫມືອນກັນ."

ເງິນ- ເຖິງແມ່ນວ່າເຮົາຈະມີຫລືບໍ່ມີກໍຕາມ- ມັນກໍຈະມີອິດທິພົນຕໍ່ຊີວິດຂອງພວກເຮົາສເມີ. ໃນການສຶກສາພຣະຄັມພີ ວັນນີ້ ພວກເຮົາຈະເຫັນວ່າພຣະເຈົ້າບໍ່ພໍພຣະທັຍ ນຳຜູ້ທີ່ຮັ່ງມີຢູ່ເຫນືອຄວາມທຸກຂອງຄົນອື່ນ. ອາໂມດໄດ້ດຶງອອກມາເປັນຈຸດໆ ທີ່ພວກເຮົາຈະໄດ້ເຫັນ.

**ຄວາມຫມັ້ນໃຈທີ່ຜິດພາດ** (3:9-4:3)

ອາໂມດໄດ້ຮຽກຮ້ອງໃຫ້ພິຈາຣະນາເບິ່ງ ການອົນລະວົນວຸ້ນວາຍໃນ ຊາມາເຣັຽ (3:9-15) ຊາວອິສຣາເອນ

ຈະຕ້ອງ ຖືກພິຈາຣະນາເໝືອນກັບຄຳພະຍານ ທີ່ໃຫ້ແກ່ ດ່ານອັຊະໂດດ ແລະ ດ່ານອີຢີບ. (ອັຊະໂດດ ແມ່ນເມືອງນຶ່ງຂອງ ຟີລິສຕິນ)

ຄົນຮັ່ງມີ ມັກສ້າງຄວາມວິຣະກັມ ໃນການກິນທີ່ວຄົນທຸກ ສ້າງຄວາມມັ້ງຄັ້ງ ເທິງຄວາມທຸກ ຂອງຄົນອື່ນ. ດັ່ງນັ້ນລະ ພຣະເຈົ້າຈຶ່ງຊົງກ່າວວ່າ ຄົນຮັ່ງມີ ບໍ່ຮູ້ຈັກໄຈ້ແຍກອອກໄດ້ວ່າ ອັນໃດຜິດ ອັນໃດຖືກ. ອິສຣາເອນມີຄວາມອວດອົ່ງ ຈອງຫອງໃນຕົວເອງ. ຄິດວ່າຕົວເອງປອດພັຍ ແລະມີອຳນາດ ແລະຍັງຄິດວ່າສິ່ງເຫລົ່ານີ້ຈະເປັນພື້ນຖານທີ່ໝັ້ນຄົງຂອງຕົວເອງຕລອດໄປ. ພວກເຂົາທັງຫລາຍຄິດຜິດໄປແລ້ວ. ອາໂມດ 3:11-15

ໃນ 4:1-3 ອາໂມດປະກາດແກ່ບັນດາຜູ້ຍິງທີ່ໜ່ວນລ້ອມດ້ວຍຄຳຫວານ ເພື່ອໃຫ້ສາມີຂອງຕົນ ກວາດເອົາວັດຖຸສິ່ງຂອງຈາກຜູ້ທີ່ຍາກຈົນ ວ່າເມື່ອວັນນັ້ນມາເຖິງແລ້ວ ຈະມີເບັດມາເກາະໄປ ຈົນເຖິງຄົນສຸດທ້າຍ ແລະຈະຖືກຖິ້ມອອກໄປ.

ໃນ 6:1-7 ການຢືນຢັນຂອງອາໂມດຍັງກ່າວດ້ວຍຄວາມໝັ້ນໃຈວ່າ ຜູ້ໃດດຳລົງຕົວຢູ່ເທິງຄວາມທຸກຈົນຂອງຄົນອື່ນ ຈະຕ້ອງໄດ້ຖືກອອກຈາກບ່ອນທີ່ຕົນເຫັນວ່າປອດພັຍແລ້ວ. ອາໂມດກ່າວອີກວ່າສິ່ງທີ່ທ່ານກຳລັງມີຢູ່ນີ້ ມັນບໍ່ເປັນຂອງແນ່ນອນ.

<u>ການບໍ່ມີຄວາມເປັນທັມຕໍ່ຜູ້ທີ່ທຸກຍາກ</u> (5:10-15)

ການແບ່ງແຍກລະຫວ່າງມີ ແລະ ບໍ່ມີ ໃນອິສຣາເອນ ແມ່ນຜົນທີ່ເຮັດໃຫ້ເກີດມີການ ແຂ່ງຂັນກັນສ້າງ ອະທັມຕໍ່ສູ້ຄົນທຸກ. ຂໍ້ 10-13, ອາໂມດໄດ້ກ່າວເຖິງຊື່ ທີ່ເຮັດໃຫ້ລ້ຳລວຍ ຄື:

1. ປົດເປືອນຄວາມຈິງ, ສໍ້ໂກງຈາກຄົນຈົນແລະສ້າງບ່ອນພັກພາ ອາສັຍສຳລັບຕົວເອງ (5:10,12)
2. ຂົ່ມເຫງໃຈຄົນຊອບທັມ ແລະຂັບໄລ່ເຂົາອອກຈາກປະຕູເມືອງ ແລະໃຫ້ຄົນມີປັນຍາມິດງຽບຢູ່. (5:13)

ອາໂມດ ເຕືອນໃຫ້ ສແວງຫາຄວາມດີ ຈົ່ງກຽດຊັງສິ່ງທີ່ຊົ່ວ ພຣະເຈົ້າເປັນພຣະເຈົ້າທີ່ມີຄວາມຮັກບາງທີ່ພຣະເຈົ້າຈະຊົງເມດຕາປານີ ເໝືອນກັບພົງພັນຂອງໂຢເຊບທີ່ເຫລືອຢູ່ໃນຄາວນັ້ນ. (5:14-15)

## <u>ຍິ່ງທະວີການແບ່ງແຍກ</u> (6:4-7)

ການແບ່ງຊັ້ນວັນນະ ມີຂື້ນລະຫວ່າງການດຳລົງຊີວິດຂອງຜູ້ຮັ່ງມີ ແລະ ຜູ້ທຸກຍາກ. ອາໂມດເປັນຜູ້ເຜີຍພຣະວະຈະນະຂອງພຣະເຈົ້າ ທີ່ກ້າຫານ. ຈຳໄດ້ບໍ່ ການປະກາດຂອງລາວເລີ້ມຕົ້ນ ປີ 760 ກ່ອນຄຣິສຕສັກຣາດ. ສມັຍຂອງກະສັດ ເຢໂຣໂບອາມ 2, ຊຶ່ງເປັນສມັຍທີ່ມັ້ງຄັ້ງສົມບູນຫລາຍທີ່ສຸດ ຂອງອານາຈັກພາກເໜືອ. ປະຊາຊົນທັງຫລາຍເຂົ້າໃຈວ່າ ແມ່ນພຣະພອນທີ່ມາຈາກພຣະເຈົ້າ ເຂົາມີຊີວິດຢູ່ແບບເຫລືອເຟືອ ແລະໃຊ້ຊີວິດຢ່າງຟູມເຟືອຍ.

ຄວາມຈະແຈ້ງຂອງຄວາມທຸກແລະຮັ່ງມີເຫັນໄດ້ເດັ່ນຊັດຫລາຍທີ່ສຸດ. (6:4-7) ຂໍ້<u>ທຳອິດ</u>ກໍຄືວ່າ ພວກຮັ່ງມີນອນຢູ່ເທິງຕຽງທີ່ອ່ອນນຸ້ມ ແລະ ຄົນທຸກນອນທີ່ສາດຂາດ ຫ້ຽນ ແລະ ບາງຄົນ ກໍບໍ່ສາມາດຈະມີຮອດສາດຫ້ຽນ. ພຣະຄຳຕອນນີ້ມາເຖິງຜູ້ທີ່ ນອນຢູ່ເທິງຕຽງງາຊ້າງ ທີ່ອ່ອນນຸ້ມ ແລະຜູ້ທີ່ນັ່ງຢຽດຕົວ ເທິງເກົ້າອີ້ຍາວຊຶ່ງໝາຍເຖິງພວກທີ່ ດື່ມເຫລົ້າອະງຸ່ນ ແລະຂີ້ຄ້ານທັ້ງຫລາຍ. <u>ສອງ</u> ຕາມທັມດາແລ້ວ ປະຊາຊົນຈະກິນຊີ້ນ

ປີລະ ສອງຫລື ສາມຄັ້ງ ແຕ່ພວກທີ່ຮັ່ງມີຈະກິນເປັນປະຈຳ ແລະ ເລືອກເອົາແຕ່ສ່ວນທີ່ດີໄປກິນສຳລັບຕົນ ແລະຄອບຄົວ. ສາມ ພວກຮັ່ງມີຈະຮ້ອງເພັງທີ່ຕົນຂຽນຂຶ້ນມາ ແລະຮ້ອງ--ສົມມຸດວ່າຕົວເອງເປັນເຫມືອນ ກະສັດດາວິດ (ເປັນກະສັດນ້ອຍອົງນຶ່ງ) (6:5). ສີ່ ພວກຮັ່ງມີຈະມີນົມ ເນີຍ ສຳລັບນວດ, ທາຊະໂລມ ຮ່າງກາຍ.

"ໂຢເຊບ" ຊື່ງຫມາຍເຖິງ ອິສຣາເອນ, ປະເທດຊາດຈະຫລົ້ມຈົມຢູ່ແລ້ວ ເພາະພວກເຂົາເຫັນແກ່ຕົວເກີນໄປ. ບໍ່ແມ່ນແຕ່ອິສຣາເອນເທົ່ານັ້ນ, ໃນສັຕວັດທີ 21 ນີ້ປະເທດສະຫະຣັດອະເມຣິກາກໍເຊັ່ນກັນເຮົາມາເບິ່ງຄວາມ ແຕກຕ່າງຂອງລາຍຮັບຂອງ ຊີອີໂອ (CEO) ໄດ້ຫລາຍກວ່າພະນັກງານທັມດາເຖິງ 400 ເທົ່າ. ໃນປີ 1980 ການຫລຸດລົ່ນມີພຽງ 40 ເທົ່າ. ໃນປະເທດ ຍີ່ປຸ່ນ ແລະ ປະເທດ ເຢັຣະມັນ ລົ່ນພຽງ 20 ເທົ່າ ເທົ່ານັ້ນ. ແມ່ນ ຫຍັງເຮັດໃຫ້ການຫລຸດລົ່ນນີ້ຫລາຍແທ້ ມີສິ່ງໃດຜິດພາດໃນລະບົບປົກຄອງຫລື.

ບໍ່ແມ່ນແຕ່ ພວກເຮົາບໍ່ມີເອກພາບໃນປະເທດເທົ່ານັ້ນ ພວກເຮົາລອງມາສົມທຽບກັບຕ່າງປະເທດເບິ່ງດູ ວ່າ ເປັນຢ່າງໃດ. ທົ່ວໄປແລ້ວ ປະຊາຊົນອະເມຣິກາ ແມ່ນຢູ່ດີກິນດີກວ່າປະເທດອື່ນໆໃນໂລກ. 4 ສ່ວນ 5 ຂອງປະຊ າຊົນທົ່ວໂລກຍັງທຸກຍາກກວ່າ ອະເມຣິກັນ ແລະຊາວຢູໂຣບ. ອະເມຣິກາ ຈະບໍຣິໂພກຫລາຍກວ່າ ແມັກຊິກັນ 5 ເທົ່າ, ຈະບໍຣິໂພກຫລາຍກວ່າ ຄົນຈີນ 10 ເທົ່າ ແລະ ຫລາຍກວ່າ ຄົນອິນເດັຍ 30 ເທົ່າ. ສຳ ລັບຄົນລາວທີ່ຢູ່ໃນປະເທດລາວປັດຈຸບັນ ອາດຈະເປັນ 500 ເທົ່າ. ຂໍໃຫ້ພວກເຮົາຄິດນຳກັນ.

<u>ຄົນຫນ້າໄຫວ້ຫລັງຫລອກໃນພຣະສາສນາ</u> (8:4-6)

ໃນຂະນະທີ່ພວກພໍ່ຄ້າຊາວອິສຣາເອນ ກຳລັງລຳພຶງລຳພັນເຖິງຜົນກຳໄລທີ່ຕົນຈະໄດ້ຮັບ ແລະວິທີທາງທີ່ຈະ ກົດຂີ່ ສໍ້ໂກງດ້ວຍວິທີໃດແດ່ຕໍ່ພວກທີ່ທຸກຍາກນີ້ ກົດຫມາຍຂອງພຣະເຈົ້າໄດ້ວາງໄວ້ໃນ ພຣະທັມ ອົພຍົບ 22: 21-27; ແລະ ພຣະບັນຍັດທີສອງ 16:11-14; 24:17-22 ອາໂມດ 8:5-6 ພວກເຂົາຈະບັງຄັບໃຫ້ຄົນຈົນຂາຍແມ້ກະທັ້ງ ຕົວຂອງເຂົາເອງໃຫ້ມາເປັນທາດ. ບໍ່ວ່າຈະດ້ວຍວິທີໃດກໍແລ້ວແຕ່.

## <u>ຄົນຂອງພຣະເຈົ້າທຸກຄົນ ແມ່ນຄົນທຸກ</u>

ເມື່ອເຮົາອ່ານໃນຜູ້ປະກາດພຣະທັມນ້ອຍ--ແລ້ວກໍມາສຶກສາ ອາໂມດ, ໂຮເຊຢາ ແລະ ມີກາ ພວກເຮົາຈະ ເຫັນວ່າ ພຣະເຈົ້າມີການພົວພັນພິເສດ ແລະ ມີກົດຫມາຍສຳລັບພວກທີ່ທຸກຍາກ, ຜູ້ທີ່ຖືກກົດຂີ່, ແມ່ຫມ້າຍ ແລະລູກກຳພ້າ. ພຣະເຢຊູກໍໄດ້ຊົງກ່າວເຖິງເຊັ່ນກັນ ໃນເວລາທີ່ພວກເຮົາມີຫລາຍສິ່ງຫລາຍຢ່າງ ແລະຈະ ກ້າວໄປສູ່ແຜ່ນດິນສວັນ. ພຣະອົງຊົງປຽບທຽບກັບການເອົາຕົວອູດລອດຮູເຂັມ (ມທ 17:24) ແລະພຣະອົງ ຍັງກ່າວອີກວ່າ: "ຜູ້ໃດທີ່ທຸກຈົນກໍເປັນສຸກ, ເພາະແຜ່ນດິນສວັນເປັນຂອງເຂົາແລ້ວ." ລກ. 6:20

## <u>ຄຳແນະນຳສຳລັບວັນນີ້</u>

ຢ່າເປັນເຫມືອນ ຄົນອິສຣາເອນສມັຍ ເດີມ, ຂໍພວກເຮົາຢ່າລືມຜູ້ທີ່ທຸກຍາກ ໃນນີ້ລວມໄປເຖິງຜູ້ທີ່ໄດ້ຮັບ ຄ່າຈ້າງຕ່ຳດ້ວຍ. ນາງພະຍາບານຄົນນຶ່ງຈຳໄດ້ບໍ່ລືມ ສມັຍນາງເປັນນັກຮຽນ ຄຣູເຄີຍເຮັດຂໍ້ສອບສັ້ນໆ ກ່ອນຈະເລີ້ມຫ້ອງຮຽນ. ຄຳຖາມຕ່າງໆ ລາວຕອບໄດ້ ມີຂໍ້ດຽວ ເປັນຂໍ້ສຸດທ້າຍ. ຄຣູຖາມວ່າ ຜູ້ຍິງປັດ ກວາດຄົນທີ່ພວກເຮົາເຫັນທຸກມື້ ຊື່ ລາວວ່າຢ່າງໃດ? ບໍ່ແມ່ນແຕ່ລາວທີ່ຕອບບໍ່ໄດ້ ທຸກຄົນຕອບບໍ່ໄດ້ເລີຍ.

ກ່ອນຈະຈົບຫ້ອງຮຽນ ຄຣູກ່າວວ່າ: " ໃນອາຊີບທີ່ທ່ານກຳລັງສຶກສາຢູ່ນີ້ ທ່ານຈະໄດ້ພົບພໍ້ກັບຄົນທຸກປະເພດ. ຈົ່ງຢ່າລືມວ່າ ທຸກຄົນມີຄຸນຄ່າ ແລະ ດີໜົດທຸກຄົນ. ພວກເຂົາເຈົ້າຕ້ອງການຄວາມສົນໃຈ ແລະການເອົາໃຈໃສ່ຈາກທ່ານ ຕລອດທັງຮອຍຍີ້ມແລະຄຳທັກທາຍຕ່າງໆ.

"ຂ້າພະເຈົ້າບໍ່ເຄີຍລືມຄຳສອນນີ້ຈັກເທື່ອ " ຊື່ລາວວ່າ ແມ່ປ້າ ບົວສີ. ອາໂມດໄດ້ກ່າວຕໍ່ຊາວຊາມາເຣັຽ.

<u>ຄຳຖາມ:</u>

1. ພວກເຮົາຈະຊ່ວຍຢ່າງໃດຕໍ່ຜູ້ທີ່ທຸກຍາກໃນເຂດທີ່ເຮົາກຳລັງອາສັຍຢູ່? ປະເທດທີ່ເຮົາອາສັຍຢູ່? ໂລກທີ່ເຮົາອາສັຍຢູ່?

໒. ອະທິບາຍຄວາມຮັ່ງມີ ແລະ ຄວາມບາບ

3. ທ່ານຈະເຮັດຢ່າງໃດ ເມື່ອທ່ານເຫັນຄົນທຸກມີຄວາມຈຳເປັນແທ້ງມາຫາທ່ານ?

4. ເປັນຫຍັງພຣະເຈົ້າຈຶ່ງເອົາຄົນທຸກໄວ້ທີ່ພິເສດຄືຫົວໃຈຂອງພຣະອົງ?

# ບົດຮຽນທີ 3
# ການຕັດສິນຜູ້ນັບຖືສາສນາປອມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ 4:4-5; 5:18-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 4:4-13; 5:18-27

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊີງກຽດຊັງ ພິທີກັມຕ່າງໆຂອງພວກນັບຖືສາສນາປອມ, ແທນທີ່ຈະມີຄວາມພົວພັນກັນດ້ວຍສິລທັມ.

**ຄຳຖາມເພື່ອສຳຣວດ:** ການນະມັສການເປັນໜ້າທີ່ອັນສຳຄັນໃນຄຣິສຕະຈັກບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຮົາເຫັນວ່າ ການນະມັສການແມ່ນການກະທຳເພື່ອພິທີກັມ ຫລື ເຮັດຕາມນ້ຳພຣະທັຍຂອງພຣະເຈົ້າ.

## ຄຳນຳ

ອາຈານສອນມະຫາວິທະຍາລັຍຄົນນຶ່ງ ກ່າວວ່າ ລາວເຄີຍມີນັກຮຽນທີ່ເຄີຍເປັນຄຣູສອນທີ່ໂຮງຮຽນເດັກນ້ອຍຄົນຫູໜວກ ອາຍຸປະມານ 8 ປີ. ໃນຫ້ອງຮຽນ ພວກເຂົາບໍ່ສາມາດຈະສົນທະນາກັນໄດ້ ຄຣູສອນຄົນນີ້ກໍເຫລືອໃຈ ກັບມາເຖິງບ້ານມື້ໃດກໍໄດ້ແຕ່ຮ້ອງໄຫ້.

ລາວກ່າວຕໍ່ໄປອີກວ່າ ມີປີນຶ່ງຫລັງຈາກ ບຸນໄກ່ງວງແລ້ວນ້ອຍນຶ່ງ, ລາວໄດ້ໄປຢ້ຽມ ນາງ ແຮດເຕີ້ (Heather) ນາງຄົນນີ້ມີອາຍຸ 7 ຂວບ. ໃນບ່ອນຫລິ້ນຂອງເດັກນ້ອຍ ຄຣູກໍຍ່າງເຂົ້າໄປຫາ ອູ້ມ ແລະກອດ ລາວ ແລະແລ້ວກໍຖາມລາວວ່າ ບຸນໄກ່ງວງປີນີ້ ໄດ້ກິນຫຍັງແດ່? ນາງນ້ອຍກໍຕອບທັນທີໂລດວ່າ: ເກີບຂອງຂ້ອຍສີແດງ. ຂ້ອຍກໍບໍ່ຈັກຈະວ່າແນວໃດ.

ອາຈານສອນເວົ້າວ່າ ຂ້ອຍກໍບໍ່ຈັກຈະວ່າແນວໃດຄືກັນ ແຕ່ເຈົ້າຈະມີປະສົບການທີ່ຄຣິສຕະຈັກ. ອາຈານກ່າວຕໍ່ໄປອີກວ່າ ມີເທື່ອນຶ່ງທີ່ໂບດເມືອງດາລັສ ດົນຕຣີ, ການອະທິຖານ, ພຣະຄຳຂອງພຣະເຈົ້າ, ການຮ້ອງເພັງ ກໍຮູ້ສຶກວ່າສອດຄ້ອງກັນດີ ແລະມີພຣະວິນຍານຊົງນຳອີ່ຫລີ. ອາຈານສອນຮູ້ສຶກວ່າຈະຍືນຈັກໜ້ອຍນຶ່ງຫລັງຈາກນະມັສການແລ້ວ.

ຄົນນຶ່ງທີ່ນັ່ງຕັ່ງທາງໜ້າລາວ ກໍອ່າຍໜ້າ ມາຖາມລາວວ່າ: ເຈົ້າຄິດວ່າ ທອມ ແລນດຣີ ຈະເປັນ ໂຄດສ໌ ຂອງທີມຄາວບອຍອີກປີນຶ່ງບໍ່?

ເຈົ້າຮູ້ບໍ່ວ່າ ຄົນນັ້ນວ່າຢ່າງໃດກັບຂ້ອຍ? ລາວເວົ້າວ່າ: "ເກີບຂອງຂ້ອຍສີແດງ" ຄົນອິສຣາເອນສມັຍເກົ່າກໍມັກ ເນັ້ນໃສ່ ເກີບສີແດງຄືກັນ. ພວກເຂົາເນັ້ນໃສ່ສິ່ງທີ່ຜິດ ໃນເວລານະມັສການພຣະເຈົ້າ. ພວກເຂົາບໍ່ເນັ້ນໃສ່ຄວາມຊອບທັມຂອງພຣະເຈົ້າ, ການຖວາຍກໍບໍ່ໄດ້ຖວາຍອອກມາຈາກຈິດໃຈແທ້, ແລະພວກເຂົາກໍມັກຫາເງິນມາສະສົມໄວ້ໃນຄັງ ບໍ່ໄດ້ນຳໄປຊ່ວຍເຫລືອຜູ້ທີ່ທຸກຍາກ.

**ການຮຽກຮ້ອງນະມັສການ (4:4-5)**

ພຣະເຈົ້າຊົງຮຽກເອີ້ນໃຫ້ນະມັສການໂດຍໃຊ້ ຄຳເວົ້າເຢີຍຫຍັນ ເພາະບອກຄັ້ງແລ້ວຄັ້ງອີກ ພວກອິສຣາເອນ ກໍບໍ່ຄ່ອຍຢາກຟັງ. ນັກບຸນກໍຮຽກຮ້ອງໃຫ້ຜູ້ມານະມັສການທັງຫລາຍ ເຂົ້າມາຫາທີ່ສັກສິດ ແລ້ວສແວງຫາ ພຣະເຈົ້າ. ກະສັດເຢໂຣໂບອາມ (931-910 ກ່ອນຄຣິສຕສັກຣາດ) ໄດ້ສ້າງຕັ້ງງົວຄຳທີ່ເບດເອນ ແລະດານ ເພື່ອໃຫ້ຄົນທັງຫລາຍນະມັສການ. (1ພົງກະສັດ 12:26-30). ໃນສມັຍຂອງອາໂມດ ກະສັດເຢໂຣໂບ ອາມ ທີ2 (782-753 ກ່ອນ ຄສ. ) ສະຖານທີ່ເຫລົ່ານີ້ ແມ່ນເປັນບ່ອນສັກສິດຫລາຍ. ກິນການ ກໍສັກສິດ ເໝືອນກັນ. ຕາມທີ່ຈິງແລ້ວບ່ອນນີ້ເປັນບ່ອນທີ່ນຶ່ງໃນແຜ່ນດິນຊົງສັນຍາ ແຕ່ວ່າອິສຣາເອນຫາກມາພາກັນ ຢຸດເຊົາ ກ່ອນສມັຍໂຢຊວຍປະມານສັຕວັດນຶ່ງ. (ໂຢຊວຍ 4:19-24 )

ພຣະເຈົ້າກ່າວວ່າ ມາແມ້ ມາກິນການ ແລ້ວມາພາກັນເຮັດບາບອີກ, ມາແມ້ ມາທີ່ເບດເອນ ແລ້ວພາກັນມາ ເຮັດບາບອີກ. ພາກັນນຳເງິນຄຳນຶ່ງສ່ວນສິບ, ແລະຂອງເຜົາຖວາຍມາພ້ອມ ເວລານະມັສການ ນຳມາອວດ ກັນທີ່ແທ່ນບູຊາ ດັ່ງນັ້ນການກະທຳຂອງພວກເຂົາຈຶ່ງບໍ່ເປັນທີ່ພໍພຣະທັຍຂອງພຣະເຈົ້າ (ພຣະບັນຍັດສອງ 14:22-29) ພວກເຂົາບໍ່ໄດ້ເຮັດໃຫ້ພໍພຣະທັຍຂອງພຣະເຈົ້າ ພວກເຂົາເຮັດຕາມໃຈຕົວເອງ.

ຫລັງຈາກທີ່ເຮົາ ສຶກສາ ພຣະທັມອາໂມດ ແລ້ວ ພວກເຮົາເຫັນວ່າອິສຣາເອນ ເຮັດມາເທິງຫລັງຜູ້ອື່ນ, ພວກ ເຂົາ ຂາຍຈິດວິນຍານເພື່ອແລກເອົາເກີບຄູ່ດຽວ. ເຂົາອາດຈະຖວາຍຫລາຍ ແຕ່ບໍ່ໄດ້ອອກມາຈາກຫົວໃຈທີ່ ແທ້ຈິງ. ເວລາພວກເຂົານະມັສການ ເຂົາເຫັນແຕ່ຕົວເຂົາເອງ ເຂົາບໍ່ເຫັນພຣະເຈົ້າ.

ພຣະເຈົ້າຊົງກ່າວວ່າ ຈົ່ງເຊົາເບິ່ງແຕ່ຕົວເອງ, ເບິ່ງຂອງຖວາຍ, ຈົ່ງເບິ່ງເຮົານີ້. ເຮົາບໍ່ໄດ້ຕ້ອງການສິ່ງເຫລົ່າ ນັ້ນຂອງເຈົ້າດອກ ເຮົາຕ້ອງການຫົວໃຈທີ່ບໍຣິສຸດຂອງເຈົ້າ ແລະຫົວໃຈທີ່ຖວາຍໃຫ້ກັບເຮົາ. ເວລາພວກເຮົາ ນະມັສການໃນວັນອາທິດກໍເຊັ່ນກັນ ຈົ່ງຕັ້ງໃຈໃສ່ພຣະອົງເຈົ້າພຽງຜູ້ດຽວ.

## ຄຳຕັກເຕືອນກ່ຽວກັບການຕັດສິນຂອງພຣະເຈົ້າ (5:18-20)

"ວັນຂອງພຣະເຈົ້າ" ເປັນວັນທີ່ຈະມາເຖິງສຳລັບຄົນອິສຣາເອນ. ພຣະເຈົ້າຈະມາຕັດສິນສັດຕຣູຂອງຄົນ ອິສຣາເອນ ເປັນຄວາມຫວັງຂອງພວກເຂົາຕລອດທຸກຣຸ່ນ. ອານາຈັກພາກເໜືອ ລໍຖ້າວັນສຸດທ້າຍ ແລະ ຕຽມພ້ອມທີ່ຈະຮັບອຳນາດຈາກພຣະເຈົ້າ. ແຕ່ອາໂມດກ່າວວ່າ ວັນທີ່ພຣະເຈົ້າຈະມານັ້ນ ເປັນວັນທີ່ມືດ ແລະເປັນວັນທີ່ຄວາມຫວັງຂອງອິສຣາເອນໝົດຫວັງ. ຄົນອິສຣາເອນຈະເປັນເໝືອນຄົນທີ່ຜ່າຍສິງ ແຕ່ ໄປພົບໝີ, ນີ້ໝາຍຄວາມວ່າພວກເຂົາຈະຫລີກຈາກອັນຕລາຍໄປບໍ່ໄດ້ເດັດຂາດ.

ພວກເຮົາແຕ່ລະຄົນຄວນທີ່ຈະນະມັສການພຣະເຈົ້າ ດ້ວຍການລະນຶກເຖິງຄຸນງາມຄວາມດີ ແລະ ການກະທຳ ທີ່ຜ່ານມາຂອງພຣະອົງ. ພວກເຮົາມີຫຍັງແດ່, ສັງເກດຄົນຣຸ້ນຕ່າງໆ ທີ່ຜ່ານມາ ພວກເຂົາເຮັດຫຍັງໄດ້ແດ່. ຜູ້ທີ່ມີຄຸນຄ່າຣາຄາທີ່ສຸດນັ້ນກໍຄືພຣະເຈົ້າ. ພວກເຮົາຈຳເປັນຕ້ອງນະມັສການພຣະເຈົ້າ ດ້ວຍຄວາມລະລຶກ ເຖິງພຣະອົງ. ພວກເຮົາທຸກຄົນຕ້ອງນະມັສການພຣະເຈົ້າ. ຫລາຍຄົນເຊື່ອພຣະເຈົ້າ ແຕ່ບໍ່ຢາກນະມັສການ ພຣະເຈົ້າ, ຄວາມເຊື່ອຂອງເຂົາຢູ່ໃສ. ການລະລຶກເຖິງພຣະເຈົ້າຢູ່ໃສ, ເຮັດຢ່າງໃດເຂົາຈຶ່ງຈະເຫັນເສັ້ນທາງ ທີ່ພຣະເຈົ້າຈັດຕຽມໄວ້ນັ້ນ.

## ການປະຕິເສດການນະມັສການພຣະເຈົ້າ (5:21-24)

ອາໂມດເລີ້ມເວົ້າເຣື່ອງການນະມັສການຂອງອິສຣາເອນ. ພວກເຂົານະມັສການແບບປະຕິເສດ, ຄືພວກເຂົາມານັ່ງເພື່ອໃຫ້ຄົນເຫັນ ແລະແລ້ວພວກເຂົາກໍລືມກັນ, ສົນທະນາກັນ ຫລືບໍ່ກໍຄິດໄປທາງອື່ນ. ພວກເຂົາຖວາຍກໍເພື່ອຢາກໃຫ້ຄົນອື່ນເຫັນ. ຜູ້ທີ່ກະທຳເຊັ່ນນັ້ນ ພຣະເຈົ້າຊົງກ່າວວ່າ "ເຮົາກຽດຊັງ" (5:21) ການນະມັສການຂອງພວກເຂົາກໍເປັນຍາມ ເປັນເວລາ. ພຣະເຈົ້າຊົງກ່າວວ່າ "ເຮົາບໍ່ມັກ" ເພາະການນະມັສການຈະຕ້ອງຢູ່ທຸກບ່ອນ, ທຸກເວລາ ແລະທຸກໂອກາດທີ່ເຮົາມີ. ອິສຣາເອນລືມເຖິງການດຳເນີນຊີວິດປະຈຳວັນ ວ່າຄວນຈະນະມັສການພຣະເຈົ້າຢ່າງໃດ.

ສາມຢ່າງໃນ 5:22 ທີ່ພຣະເຈົ້າຊົງກ່າວນີ້ ແມ່ນສິ່ງທີ່ຈຳເປັນທີ່ສຸດໃນການນະມັສການ ແຕ່ພຣະເຈົ້າກໍຊົງປະຕິເສດ ພຣະອົງກ່າວວ່າ "ເຮົາຈະບໍ່ຫລຽວເບິ່ງ" ແລະ "ເຮົາຈະບໍ່ຍອມຮັບເອົາ" ການກ່າວເຊັ່ນນີ້ ພວກເຮົາຈະເຫັນໄດ້ວ່າ ພຣະເຈົ້າຊົງຢາກໃຫ້ອິສຣາເອນຕັ້ງໃຈນະມັສການພຣະເຈົ້າຢ່າງແທ້ຈິງ.

ໃນຂໍ້ທີ 23 "ຈົ່ງນຳເອົາສຽງເພງຂອງເຈົ້າອອກໄປ, ເຮົາຈະບໍ່ຟັງສຽງພິນໃຫຍ່ຂອງເຈົ້າ" ຕາມທັມດາແລ້ວພຣະເຈົ້າຊົງພໍພຣະທັຍໃນສຽງເພງສັນລະເສີນ ແລະສຽງດົນຕຣີທີ່ມ່ວນແລະອອນຊອນ ໃນເວລານະມັສການ. ແຕ່ພຣະອົງ ຊົງອັດພຣະໂສດ (ຫູ) ຂອງພຣະອົງ.

ພວກເຮົາຄວນຄິດນຳກັນວ່າ ເປັນຫຍັງພຣະເຈົ້າຈຶ່ງປະຕິເສດ ການນະມັສການຂອງພວກອິສຣາເອນ, ພຣະເຈົ້າອາດຈະປະຕິເສດ ການນະມັສການ ຂອງພວກເຮົາເຊັ່ນດຽວກັນ. ລອງມາຊອກຫາເຫດຜົນນຳກັນລອງເບິ່ງ:

ທຳອິດ, ພຣະເຈົ້າຈະປະຕິເສດ ເວລາພວກເຮົາເນັ້ນຫນັກ ແຕ່ພິທີທາງສາສນາເທົ່ານັ້ນ ແທນທີ່ຈະເນັ້ນຫນັກໄປໃນທາງຊອບທັມຂອງພຣະເຈົ້າ. (5:21-23) ຫລາຍໂບດພະຍາຍາມຊື້ເຄື່ອງດົນຕຣີ ຣາຄາແພງ ຫານັກຮ້ອງສຽງດີໆ ນັ້ນເປັນການດີ ແຕ່ສຳຄັນທີ່ແທ້ຈິງແມ່ນຈິດໃຈ. ບໍ່ແມ່ນຈັງຫວະ, ເຄື່ອງດົນຕຣີ ຫລືສຽງດີແຕ່ຢ່າງໃດ.

ພຣະເຈົ້າຟັງດົນຕຣີບໍ່ເຫມືອນເຮົາຟັງ. ພວກເຮົາອາດຟັງສຽງອອນຊອນມ່ວນຊື່ນ ແຕ່ວ່າເວລາສຽງຂອງນັກຮ້ອງຄົນນັ້ນໄປເຖິງສວັນແລ້ວ ຈະຍັງມ່ວນເຫມືອນເດີມບໍ່. ສຽງອາດຈະບໍ່ມ່ວນສຳລັບພຣະເຈົ້າ ເພາະວ່າມືຂອງລາວບໍ່ສະອາດ, ໃຈຂອງລາວຍັງມີບາບຢູ່, ລາວຍັງຜິດກັບຄົນຂ້າງບ້ານຢູ່.......ຫລືອີກຢ່າງນຶ່ງກໍຄືລາວຍັງຂາດຄວາມຊອບທັມຈາກພຣະເຈົ້າ. ແຕກຕ່າງຈາກອີກຄົນນຶ່ງທີ່ຮ້ອງບໍ່ຖືກດົນຕຣີ, ສຽງກໍແຫບໆ, ຂາດກິດຂາດຖ່ອງ, ແຕ່ເວລາໄປເຖິງພຣະເຈົ້າແລ້ວກັບເປັນທີ່ອອນຊອນແລະພໍພຣະທັຍຂອງພຣະເຈົ້າ ເພາະຈິດໃຈລາວບໍຣິສຸດ ລາວມີຄວາມຊອບທັມຂອງພຣະເຈົ້າ, ແລະບໍ່ໄດ້ຜິດບ້ານພານເມືອງເລີຍ. ຢ່າລືມວ່າຫົວໃຈຂອງເຮົາຖືກຕ້ອງຕາມທຳນອງທີ່ພຣະເຈົ້າມັກບໍ່?

ສອງ, ພຣະເຈົ້າຊົງປະຕິເສດ ເວລາເຮົາບໍ່ທ່ຽງທັມ, ບໍ່ຍຸດຕິທັມ. (5:24) ຈົ່ງໃຫ້ຄວາມຊອບທັມແລະຄວາມສັດຊື່ໄຫລຢູ່ເຫມືອນສາຍນ້ຳ. ແຕ່ຄົນອິສຣາເອນກັບຫລອກລວງ ຄົນທຸກຍາກຕລອດອາທິດ ແຕ່ມາທຳທ່າເປັນຄົນດີຄົນຊອບທັມໃນວັນດຽວ.

ບໍ່ມີຫຍັງທີ່ໜ້າກຽດໜ້າຊັງຫລາຍກວ່າ ທີ່ເຫັນສະມາຊິກຂອງໂບດກະທໍາແບບໜ້າຫວ້າຍຫລັງຫລອກ ຫລື ນັບຖືສາສນາແບບຈອມປອມ, ເຮັດໃຫ້ໂບດເປັນບ່ອນຄ້າຂາຍ, ເປັນບ່ອນແລກປ່ຽນເງິນ.... ເຮົາຄວນ ໃຫ້ຄວາມສໍາຄັນຕໍ່ຊີວິດຄຣິສຕຽນບໍ່ວ່າຈະຢູ່ໃນ ຫ້ອງຮຽນ, ໃນງານສັງສັນ, ໃນໂຮງພະຍາບານ, ແລະ ບ່ອນໃດກໍແລ້ວແຕ່, ເຮົາຕ້ອງເກັບກໍາສິ່ງທີ່ຄຣູສອນ ແລະອາຈານເທສນາ ໃຫ້ຕິດຕົວໄປຕລອດອາທິດ.

## <u>ຄໍາແນະນໍາສໍາລັບວັນນີ້</u>

ການນະມັສການຂອງພວກເຮົາເປັນຢ່າງໃດ? ກະທໍາໄປດ້ວຍມືອັນຂາວສະອາດແລະຫົວໃຈທີ່ບໍຣິສຸດຫລືບໍ່? ດ້ວຍຄວາມຕ້ອງການຝ່າຍຈິດວິນຍານ ຫລືດ້ວຍຫົວໃຈທີ່ບອບຊໍ້າຫລືບໍ່? ດ້ວຍຄວາມປາຖນາດີແລະຈະ ແຈ້ງດ້ວຍຄວາມຈິງຫລືບໍ່?

ຢ່າລືມວ່າ ພຣະເຈົ້າບໍ່ໄດ້ເບິ່ງທາງນອກ ແຕ່ພຣະອົງຊົງເບິ່ງທາງໃນ !!!!!!!

## <u>ຄໍາຖາມ:</u>

1. ທ່ານຄິດວ່າຈະນະມັສການຢ່າງໃດ ພຣະເຈົ້າຈຶ່ງຈະພໍພຣະທັຍ?

໒. ແມ່ນຫຍັງສໍາຄັນກວ່າກັນ ໃນການນະມັສການ ລະຫວ່າງ ການນໍາຄົນມາມອບໃຫ້ແດ່ພຣະເຈົ້າ ແລະ ການຖວາຍເພື່ອເຮັດໃຫ້ພຣະເຈົ້າພໍພຣະທັຍ?

3. ຈະຫລີກລ້ຽງຈາກການນະມັສການແບບຈອມປອມຢ່າງໃດ?

4. ເປັນຫຍັງຄົນອິສຣາເອນຈຶ່ງຈະຕື່ນຕົກໃຈໃນວັນຂອງພຣະເຈົ້າ? ແລະພວກເຮົາເດຈະບໍ່ຕື່ນຕົກໃຈແດ່ບໍ່?

# <u>ບົດຮຽນທີ 4</u>
# <u>ຂ່າວສານຂອງພຣະເຈົ້າຖືກປະຕິເສດ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນ:</u>** ອາໂມດ 7:7-17

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u>** ອາໂມດ 7:1-8:3

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ກ່ອນອື່ນຫມົດແມ່ນເຊື່ອຟັງພຣະເຈົ້າ

**<u>ຄໍາຖາມເພື່ອການສໍາຫລວດ:</u>** ຈະມີຫຍັງເກີດຂຶ້ນເມື່ອສາສນາໄປພົວພັນກັບການປົກຄອງ?

**<u>ຈຸດປະສົງຂອງບົດຮຽນນີ້</u>** ເພື່ອແຈກແຍກໃຫ້ເຫັນການຟັງແລະການຂັບຕາມພຣະຄໍາຂອງພຣະເຈົ້າໃນທ່າມກາງວັທນະທັມສມັຍນີ້.

## <u>ບົດຮຽນ</u>

### <u>ຄໍານໍາ</u>

ຊົນຊາດອິສຣາເອນໄດ້ລ່ວງລະເມີດຄໍາຫມັ້ນສັນຍາຂອງອົງພຣະຜູ້ເປັນເຈົ້າ ແລະພຣະພິໂຣດຂອງພຣະອົງຊົງຕົກໃສ່ພວກເຂົາໃນສະຖານທີ່ນະມັສການແລະຣາຊບັນລັງຂອງກະສັດເຢໂຣໂບອາມທີສອງ. ອາມາຊີອາປະໂລຫິດແລະເປັນຜູ້ປະກາດພຣະທັມອາຊີບທີ່ປະກາດໃນສິ່ງທີ່ຖືກຫູຂອງກະສັດ. ສາສນາແລະຣັຖບານຫາກສົມຮູ້ຮ່ວມຄິດກັນແລ້ວເມື່ອນັ້ນຜູ້ປະກາດພຣະທັມກໍບໍ່ມີປະສິດທິພາບໃນການປະກາດ.

### <u>ນິມິດຂອງອາໂມດ</u> (7:1-9)

ພຣະທັມອາໂມດໄດ້ແບ່ງອອກເປັນສອງພາກ. ພາກທີ່ນຶ່ງແມ່ນ "ຄໍາເວົ້າຂອງອາໂມດ" ຈະພົບໄດ້ໃນບົດທີ 1-6 ແລະພາກທີສອງແມ່ນ "ນິມິດຂອງອາໂມດ" ຈະພົບໄດ້ໃນບົດທີ 7-9. ພຣະຜູ້ເປັນເຈົ້າໄດ້ສະແດງໃຫ້ລາວເຫັນນິມິດ 5 ຢ່າງໃນບົດຮຽນດັ່ງກ່າວນີ້. ບົດຮຽນຂອງພວກເຮົາແມ່ນເນັ້ນໃສ່ບົດທີ 7:7-9 ຄືນິມິດທີ 3.

ນິມິດທີ 1 (7:1-3) ແມ່ນຕັກແຕນທໍາຮ້າຍພືລປູກຂອງຊາວອິສຣາເອນ. ອາໂມດຮ້ອງຂໍພຣະຜູ້ເປັນເຈົ້າຢ່າໄດ້ທໍາຮ້າຍພວກເຂົາ ແລະພຣະອົງປ່ຽນໃຈແລ້ວເຫດຮ້າຍນັ້ນບໍ່ໄດ້ເກີດຂຶ້ນ. ໃຫ້ສັງເກດເບິ່ງຂໍ້ຄວາມດັ່ງກ່າວນີ້: " ຕໍ່ມາພຣະຜູ້ເປັນເຈົ້າຊົງປ່ຽນພຣະທັຍແລະຊົງກ່າວວ່າ "ສິ່ງທີ່ເຈົ້າໄດ້ເຫັນນັ້ນຈະບໍ່ບັງເກີດຂຶ້ນມາ" (7:3). ຄໍາອ້ອນວອນຂອງຄົນດຽວອາໂມດ, ເຮັດໃຫ້ມີການປ່ຽນແປງໄດ້.

ນິມິດທີ 2 ແມ່ນໄຟ (7:4-6), ນິມິດນີ້ແມ່ນຫລັງຈາກລາວໄດ້ເຫັນຕັກແຕນ. ອາໂມດໄດ້ທູນຂໍພຣະຜູ້ເປັນເຈົ້າອີກ: " ຂໍຊົງໂຜດໃຫ້ເຫດການນີ້ຍຸດຕິລົງເຖີດ ພວກໄພ່ພົນຂອງພຣະອົງຈະສືບຊີວິດຕໍ່ໄປໄດ້ຢ່າງໃດ?" (7:5). ພຣະອົງປ່ຽນໃຈອີກເປັນເທື່ອທີສອງ (7:6).

ນິມິດທີ 3 ແມ່ນບົດຮຽນຂອງພວກເຮົາຈະໄດ້ສຶກສາກັນ, ພຣະຜູ້ເປັນເຈົ້າຊົງຖາມອາໂມດວ່າ (7:8): "ອາໂມດເອີຍເຈົ້າເຫັນຫຍັງແດ່?" ແລະລາວຕອບວ່າ, "ເຫັນສາຍເນັ່ງ" (7:8). ພຣະຜູ້ເປັນເຈົ້າກໍາລັງເວົ້າກັບອາໂມດວ່າ, <u>ເຮົາເປັນຫົວຫນ້ານາຍຊ່າງກໍ່ສ້າງ. ເຮົາກໍາລັງໃຊ້ສາຍເນັ່ງ ເພື່ອຈະວັດແທກເບິ່ງວ່າໄພ່ພົນຂອງເຮົາຢູ່ໃນລະດັບມາຕຖານຕາມທີ່ເຮົາວາງໄວ້ຫລືບໍ່</u> (7:8, ຄໍາຂຍາຍຄວາມຂອງຜູ້ຂຽນ). "ໄພ່ພົນຂອງເຮົາ" ອ້າງອີງເຖິງຊົນຊາດອິສຣາເອນທີ່ໄດ້ທໍາຄໍາຫມັ້ນສັນຍາກັບອົງພຣະຜູ້ເປັນເຈົ້າ. ໃນວັກສຸດທ້າຍຂອງຂໍ້ທີ 8 ພາສາລາວໃຊ້ຄໍາວ່າ "ເຮົາຈະບໍ່ປ່ຽນໃຈໃນ

ການລົງໂທດພວກເຂົາ." ຈະເບິ່ງຄວາມຫມາຍໃນພາສາເຮັບເຣີອີກກໍ່ຈະເຫັນຄວາມເວົ້າໄດ້ຢ່າງນີ້: ເຮົາຈະບໍ່ໃຫ້ພວກເຂົາຫວິດ, ຫມາຍຄວາມວ່າ ເນື່ອງຈາກຄວາມບາບຂອງພວກເຂົາ ເຮົາຈະບໍ່ໃຫ້ພວກເຂົາຫວິດຈາກການລົງໂທດເທື່ອນີ້. ການລົງໂທດຈາກພຣະຜູ້ເປັນເຈົ້າຈະບໍ່ຊັກຊ້າ.

ພຣະພິໂຣດ ຫລືຄວາມໂກດຮ້າຍຂອງອົງພຣະຜູ້ເປັນເຈົ້າໄດ້ຕົກໃສ່ທີ່ນະມັສການຕ່າງໆແລະຣາຊບັນລັງຂອງກະສັດເຢໂຣໂບອາມທີສອງ (ປົກຄອງ ໃນປີ 782-753 ກ່ອນຄຣິສຕະສັກຣາດ). ສະຖານທີ່ນະມັສການໄດ້ຖືກທຳຮ້າຍ. ສະຖານທີ່ຖືກທຳຮ້າຍເຊັ່ນ ຫໍທີ່ມີຮູບໂຄຣົບຕ່າງໆ, ສານເຈົ້າທີ່ພູສູງ, ແລະສະຖານທີ່ນະມັສການອັນສັກສິດທີ່ເມືອງເບັດເອນ ແລະເມືອງດ່ານຂອງອານາຈັກພາກເຫນືອທີ່ນັບຖືກັນວ່າເປັນບ່ອນສັກສິດເຫມືອນກັບກຸງເຢຣູຊາເລັມ. ສະຖານທີ່ ທີສອງກໍຄື ພະຣາຊບັນລັງແລະກະສັດເຢໂຣໂບອາມຈະຖືກທຳຮ້າຍ (7:9). ພຣະຜູ້ເປັນເຈົ້າຊົງກ່າວວ່າ "ເຮົາຈະໃຫ້ເສິກເກີດຂຶ້ນ ຕໍ່ສູ້ຄອບຄົວຂອງເຈົ້າຊີວິດເຢໂຣໂບອາມ."

ຈົ່ງສັງເກດເບິ່ງນິມິດທີສາມນີ້ ບໍ່ເຫມືອນນິມິດກ່ຽວກັບຕັກແຕນແລະນິມິດກ່ຽວກັບໄຟ. ເທື່ອນີ້ບໍ່ເຫັນອາໂມດອ້ອນວອນຮ້ອງຂໍເພື່ອໄພ່ພົນຂອງພຣະເຈົ້າ. ລາວມິດງຽບຢູ່. ຫລັງຈາກນິມິດນີ້ແລ້ວ ພຣະຜູ້ເປັນເຈົ້າບໍ່ປ່ຽນໃຈພຣະອົງອີກ. "ເຮົາຈະບໍ່ປ່ຽນໃຈໃນການລົງໂທດພວກເຂົາ" (7:8).

ພວກເຮົາຕ່າງຄົນມີອຳນາດໃນການຕັດສິນໃຈທີ່ໃຫ້ມີການປ່ຽນແປງໃນຊີວິດຂອງພວກເຮົາ. ບາງຄັ້ງການຕັດສິນໃຈຂອງພວກເຮົາໄດ້ນຳຄວາມເຈັບປວດ, ຄວາມຈິບຫາຍ, ແລະແມ່ນແຕ່ກະທັ້ງຄວາມຕາຍມາສູ່ຕົວຂອງພວກເຮົາເອງ. ບາງຄັ້ງການຕັດສິນໃຈຂອງພວກເຮົາໄດ້ນຳຊີວິດ, ຄວາມຫວັງ, ແລະຄວາມສຸກມາໃຫ້ພວກເຮົາ. ຈົ່ງອ້ອນວອນຂໍຢ່າໃຫ້ທ່ານໄດ້ຍິນຄຳເວົ້າອອກຈາກພຣະເຈົ້າວ່າ ເຮົາຈະບໍ່ປ່ຽນໃຈ.

**ຜູ້ປະກາດຮັບຈ້າງ** (7:10-17)

ຜູ້ປະກາດພຣະທັມຈະຕ້ອງລະມັດລະວັງ ເພື່ອບໍ່ໃຫ້ເປັນເຫມືອນຮຸ່ນເທົ່ານັ້ນ. ປະກາດແຕ່ສິ່ງທີ່ຖືກຫູຂອງກະສັດ. ຕາມຄວາມຈິງແລ້ວ ອາມາຊີອາ ປະໂລຫິດແລະເປັນຜູ້ປະກາດພຣະທັມກໍເປັນຢ່າງນັ້ນ. ເມື່ອລາວໄດ້ຮັບປະທານອາຫານຮ່ວມໂຕະກັບກະສັດ ເຢໂບໂຣອາມຫລາຍເທົ່າໃດ ລາວກໍຈະເປັນຄົນຂອງກະສັດຫລາຍເທົ່ານັ້ນ. ໃນທີ່ສຸດ ສິ່ງໃດເປັນທີ່ພໍໃຈຂອງກະສັດລາວກໍຈະກ່າວແຕ່ສິ່ງນັ້ນ.

ໃນຂະນະນັ້ນ ຜູ້ປະກາດພຣະທັມ ອາໂມດ ມາຈາກອານາຈັກພາກໃຕ້ໄດ້ຂຶ້ນໄປປະກາດໃຫ້ແກ່ປະຊາຊົນອິສຣາເອນໃນອານາຈັກພາກເຫນືອ. ພວກເຂົາບໍ່ພໍໃຈໃນຄຳເວົ້າທີ່ອາໂມດໄດ້ປະກາດໄປ. ລາວໄດ້ປະກາດຕໍ່ພວກເຂົາວ່າ ພວກເຂົາໄດ້ຮັບຄວາມອຸດົມສົມບູນຢູ່ໃຕ້ການປົກຄອງຂອງກະສັດເຢໂຣໂບອາມ ເພາະວ່າພວກເຂົາກົດຂີ່ຂົ່ມເຫັງຄົນທຸກຍາກແລະຄ້າຂາຍມີການສໍ້ໂກງກັນ. ພວກເຂົາບໍ່ໃຫ້ຄວາມເປັນທັມແກ່ຜູ້ສາມັນຕໍ່າຕ້ອຍ.

ເມື່ອອາມາຊີອາປະໂລຫິດຂອງເມືອງເບັດເອນຟັງແລ້ວເກີດຄວາມບໍ່ພໍໃຈ. ລາວໄດ້ຢູ່ໄດ້ກິນກໍເພາະລາວເປັນປະໂລຫິດໃຫ້ແກ່ກະສັດເຢໂຣໂບອາມ. ລາວຈຶ່ງໄປຟ້ອງກະສັດເຢໂຣໂບອາມວ່າ "ອາໂມດກຳລັງມີແຜນອຸບາຍກະບົດຕໍ່ສູ້ພະອົງຢູ່ໃນອິສຣາເອນ ຄຳເວົ້າຂອງລາວຈະທຳຮ້າຍປະເທດນີ້". ກະສັດເຢໂຣໂບອາມຈະຕ້ອງຕາຍໃນສນາມຣົບແລະປະຊາຊົນອິສຣາເອນຈະຖືກນຳໄປເປັນຊະເລີຍໃນຕ່າງປະເທດ (7:11).

ອາມາຊີອາບອກໃຫ້ອາໂມດກັບເມືອອານາຈັກພາກໃຕ້ ຣາຊອານາຈັກຢູດາ. ລາວບອກອາໂມດໃຫ້ໄປຫາລ້ຽງຊີບດ້ວຍການປະກາດພຣະທັມໃນຂົງເຂດນັ້ນ ຢ່າໄດ້ຂຶ້ນມາປະກາດພຣະທັມໃນເມືອງເບັດເອນ ເພາະວ່າເປັນບ່ອນເຈົ້າຊີວິດ

ນະມັສການແລະເປັນພຣະວິຫານຂອງປະຊາຊາດຂອງອານາຈັກພາກເຫນືອ ຣາຊອານາຈັກອິສຣາເອນ (7:12-13).

ອາໂມດຕອບອາມາຊີອາຄືນວ່າ ພຣະຜູ້ເປັນເຈົ້າຊົງຮ້ອງໃຫ້ລາວມາປະກາດພຣະທັມໃຫ້ເປັນການເຕືອນຊາວອິສຣາເອນ. ລາວກ່າວຕໍ່ໄປວ່າ ອາຊີບຂອງລາວບໍ່ແມ່ນເປັນຜູ້ປະກາດພຣະທັມ. ລາວເປັນຄົນລ້ຽງສັດແລະປູກຫມາກເດື່ອເທດ. ເພາະວ່າ ພຣະຜູ້ເປັນເຈົ້າຊົງຮ້ອງໃຫ້ລາວປະທຸກສິ່ງທຸກຢ່າງທີ່ລາວເຮັດຢູ່ ໃຫ້ມາປະກາດຕໍ່ຊາວອິສຣາເອນໄພ່ພົນຂອງພຣະເຈົ້າຕາງພຣະອົງ (7:14-15).

ຄໍາທໍານວາຍຂອງອາໂມດຕໍ່ອາມາຊີອາເປັນຄໍາເວົ້າອັນຮຸນແຮງ: "ອາມາຊີອາເອີຍ ຍ້ອນເຈົ້າໄດ້ເວົ້າດັ່ງນັ້ນພັຣຍາຂອງເຈົ້າຈະກາຍເປັນຍິງໂສເພນີໃນເມືອງນີ້ ລູກຊາຍຍິງຂອງເຈົ້າຈະຖືກຂ້າຢູ່ໃນສົງຄາມ ແລະຜືນແຜ່ນດິນຂອງເຈົ້າຈະຖືກແບ່ງປັນໃຫ້ຄົນອື່ນ ແລ້ວເຈົ້າຈະຕາຍຢູ່ໃນແຜ່ນດິນຄົນນອກສາສນາ ຝ່າຍປະຊາຊົນອິສຣາເອນຈະຖືກເນຣະເທດອອກຈາກແຜ່ນດິນຂອງພວກເຂົາ" (7:17).

## <u>ພຣະເຈົ້າ (ສາສນາ) ແລະຣັຖບານ</u>

ອາມາຊີອາບໍ່ເປັນພຽງແຕ່ເປັນຜູ້ປະກາດພຣະທັມອາຊີບ ແຕ່ວ່າລາວຍັງຖືກຈ້າງໃຫ້ເປັນຜູ້ປະກາດພຣະທັມຂອງຣັຖອີກດ້ວຍ. ພວກເຮົາຈະຕ້ອງລະມັດຣະວັງໃຫ້ດີ ກ່ຽວກັບລະຫວ່າງນໍາສາສນາເຂົ້າໄປພົວພັນກັບຣັຖບານ. ໃນປະວັດສາດໄດ້ບົ່ງບອກໃຫ້ຮູ້ວ່າ ຊາວແບັບຕິສເປັນຄຣິສຕຽນກຸ່ມນຶ່ງທີ່ປະກາດວ່າ <u>ຄຣິສຕະຈັກຂອງຂ້າພະເຈົ້າແລະຣັຖບານຂອງຂ້າພະເຈົ້າຈະຕ້ອງແຍກຈາກກັນ. ຂ້າພະເຈົ້າຮັກປະເທດຂອງຂ້າພະເຈົ້າ ແລະຂ້າພະເຈົ້າຍອມຮັບໃຊ້ປະເທດຊາດຂອງຂ້າພະເຈົ້າ, ແຕ່ວ່າການຮັບໃຊ້ທັງສອງສະຖາບັນນີ້ຈະຕ້ອງແຕກຕ່າງກັນ. ຂ້າພະເຈົ້າຈົ່ງຮັກພັກດີຕໍ່ປະເທດຊາດຂອງຂ້າພະເຈົ້າ, ແຕ່ວ່າຄວາມຈົ່ງຮັກພັກດີຕໍ່ປະເທດຊາດແລະຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າຂອງຂ້າພະເຈົ້າຈະເຈືອປົນກັນບໍ່ໄດ້.</u>

ບໍ່ວ່າຍາມໃດກໍຕາມ ຖ້າຫາກຄຣິສຕະຈັກ (ສາສນາ)ແລະຣັຖບານຮ່ວມຫົວກັນແລ້ວ ຜົນທີ່ຕາມມາກໍຄືຄວາມຫາຍະນະຕັ້ງແຕ່ສມັຍຂອງຈັກກະພັດ ຄອນສະແທນທິນ (Constantine) ຂອງໂຣມັນມາຈົນເຖິງຈອມຜະເດັດການຮິດເລີ (Hitler) ຂອງເຢີຣະມັນ, ສາສນາແລະຣັຖບານຮ່ວມຫົວກັນຍາມໃດ ຜົນທີ່ຕາມມາກໍຄືຄວາມເສັຽໃຈຫາທີ່ປຽບບໍ່ໄດ້. ບັນພະບຸຣຸດຂອງແບັບຕິສຈຶ່ງຢືນຢັດຢູ່ສເມີໃນນະໂຍບາຍນີ້ ເພື່ອໃຫ້ອະເມຣິກາເປັນປະເທດທີ່ມີເສຣີພາບໃນການນັບຖືສາສນາຕາມຄວາມຕ້ອງການຂອງໃຜຂອງລາວ. ພວກເຮົາປະກາດວ່າ ຣັຖບານບໍ່ມີອໍານາດຈະອອກຄໍາສັ່ງບອກວິທີການອ້ອນວອນ, ອ້ອນວອນຫາພຣະອົງໃດ, ຫລືບອກໃຫ້ຜູ້ປະກາດພຣະທັມປະກາດຕາມແນວທາງຂອງຣັຖ. ອາມາຊີອາກາຍເປັນຜູ້ປະກາດພຣະທັມອາຊີບແລະລາວເຂົ້າພົວພັນກັບຣັຖ ລາວຈຶ່ງເປັນຜູ້ປະກາດພຣະທັມຂອງຣັຖບານ.

ຄວາມຮັກຊາດແລະສາສນາຈໍາເປັນຈະຕ້ອງແຈກແຍກອອກໃຫ້ເຫັນຄວາມແຕກຕ່າງກັນ. ເມື່ອໃດຄໍາວ່າ "ພຣະເຈົ້າ (ສາສນາ) ແລະ ປະເທດ (ຣັຖບານ)" ຫາກເຂົ້າເປັນປໂຍກດຽວກັນແນບນຽນສອດຄ່ອງກັນແລ້ວ, ໃຫ້ຕຽມຕົວລະວັງ. ປະວັດສາດໄດ້ສອນພວກເຮົາວ່າ ທີ່ຜ່ານມາທຸກໆຊົນຊາດ ເມື່ອປະໃຫ້ສອງສະຖາບັນນີ້ເຂົ້າເປັນອັນດຽວກັນແລ້ວໄພ່ພົນຂອງພຣະເຈົ້າກໍຈະສູນເສັຽຄວາມເປັນໄພ່ພົນຂອງພຣະເຈົ້າ. ຄວາມຫມາຍກໍຄືວ່າ ເມື່ອສາສນາສົມສູ່ກັບຣັຖບານໄພ່ພົນຂອງພຣະເຈົ້າກໍຈະບໍ່ເຫັນຄວາມບາບຂອງສັງຄົມ. ຜູ້ປະກາດພຣະທັມຂອງພຣະເຈົ້າກໍຈະບໍ່ມີເສຣີພາບໃນການປະກາດຕໍ່ສູ້ກັບຄວາມບາບໃນສັງຄົມເຮົາອີກຕໍ່ໄປ.

## <u>ຂໍ້ຄວາມທີ່ນໍາໄປໃຊ້ປະຈໍາວັນ</u>

ເມື່ອບໍ່ມີຜູ້ໃດເຫັນຄວາມສຳຄັນຂອງເສຣີພາບຂອງຄຣິສຕະຈັກ, ພວກເຮົາແບັບຕິສຈະຕ້ອງສ້າງກຳແພງນີ້ໄວ້ ເພື່ອຈະເປັນສິ່ງທີ່ແຍກສາສນາ (ຄຣິສຕະຈັກ) ອອກຈາກຣັຖບານ.

## ຄຳຖາມ

1. ເວລາໃດພຣະຜູ້ເປັນເຈົ້າຊົງປ່ຽນໃຈ? ທ່ານຄິດເຫັນໃນພຣະຄັມພີຕອນໃດພຣະເຈົ້າຊົງປ່ຽນໃຈຂອງພຣະອົງ?
2. ຜູ້ປະກາດພຣະທັມອາຊີບຈະຮັກສາການປະກາດຂອງລາວບໍຣິສຸດ ຫລືວ່າບໍ່ໂອນອ່ຽງໄດ້ຢ່າງໃດ?
3. ເປັນຫຍັງຕາມປະວັດສາດແລ້ວ ແບັບຕິສຈຶ່ງຢຶດຖືນະໂຍບາຍໃຫ້ມີການແຈກແຍກລະຫວ່າງສາສນາແລະຣັຖ?
4. ເມື່ອຄຣິສຕະຈັກຫລືອົງການສາສນາໄດ້ຮັບເງິນ ຫລືການຊ່ອຍເຫລືອຈາກຣັຖບານຈະມີພັຍອັນຕະລາຍຢ່າງໃດ?

## ໂທມາສ ແຮລວິສ

ແບັບຕິສໄດ້ຮັບຄວາມລຳບາກຍ້ອນວ່າພວກເຮົາຮັກສາໃຫ້ສາສນາມີເສຣີພາບຈາກອຳນາດຂອງຣັຖເຂົ້າຄວບຄຸມ. ໂທມາສ ແຮລວິສ (Thomas Helwys). ລາວເປັນແບັບຕິສໃນສມັຍແລກທີ່ມີຄວາມກ້າຫານໃນການສົ່ງເສີມນະໂຍບາຍ ໃຫ້ມີການແຈກແຍກລະຫວ່າງສາສນາແລະຣັຖບໍ່ໃຫ້ພົວພັນກັນ. ລາວສົ່ງຂໍ້ຄວາມໄປໃຫ້ ກະສັດ ເຈັມ (James) ທີ່ນຶ່ງຊຶ່ງເປັນຜູ້ປົກຄອງທັງສາສນາແລະພຣະເຈົ້າແຜ່ນດິນດ້ວຍຂອງອັງກິດ. ຂໍ້ຄວາມມີດັ່ງນີ້ວ່າ:

> ກະສັດເປັນມະນຸດບໍ່ແມ່ນພຣະເຈົ້າ, ສະນັ້ນກະສັດຈະບໍ່ມີອຳນາດເຫນືອຈິດວິນຍານຂອງປະຊາຊາດ ແລະບໍ່ມີອຳນາດ ອອກກົດຫມາຍແລະຄຳສັ່ງບັນຊາຈິດວິນຍານຂອງພວກເຂົາ, ແລະກະສັດຈະເປັນເຈົ້ານາຍຂອງຈິດວິນຍານເຫລົ່ານັ້ນບໍ່ໄດ້.

ເພາະວ່າໂທມາສໄດ້ທ້າທາຍສິດອຳນາດຂອງກະສັດ, ລາວຈຶ່ງຖືກຈຳຄຸກແລະເສັຽຊີວິດໃນລະຫວ່າງປີ 1616.

## ເຣື່ອງທີ່ນຳມາສຶກສາ

ທ່ານເຫັນພ້ອມບໍ່ໃຫ້ມີການອ້ອນວອນໃນນາມຂອງພຣະເຈົ້າໃນຫ້ອງຮຽນຂອງໂຮງຮຽນຫລວງ? ໃນຖານະທ່ານເປັນຄຣິສຕຽນ ພວກເຮົາບາງຄັ້ງຕົກຢູ່ໃນບ້ວງແຮ້ວຊຶ່ງຜັກດັນຄວາມເຊື່ອຂອງພວກເຮົາໃຫ້ຄົນອື່ນຮັບເອົາໂດຍໃຊ້ອຳນາດຂອງຣັຖ. ມີຫຍັງຜິດບໍ່ໃຫ້ຄຣູນຳພາໃນການອ້ອນວອນໃນຫ້ອງຮຽນຂອງໂຮງຮຽນຫລວງ? ສົມມຸດວ່າທ່ານຍ້າຍໄປຢູ່ເມືອງສໍ່ເລກ (Salt Lake City) ຣັຖ ຢູທາ (Utah) ແລ້ວລູກຂອງທ່ານໄປໂຮງຮຽນຫລວງນາຍຄຣູໃນ ຫ້ອງຮຽນອ່ານພຣະຄັມພີຂອງຄະນະມໍມອນ (Mormon) ແລະນຳພາໃນການອ້ອນວອນຂອງຄະນະມໍມອນອີກດ້ວຍ ທ່ານຈະເຮັດຢ່າງໃດ? ທ່ານຍັງຈະໃຫ້ຣັຖເປັນຜູ້ບົງການເຣື່ອງການເຕີບໂຕທາງຝ່າຍຈິດວິນຍານຂອງລູກທ່ານຢູ່ບໍ? ພວກເຮົາຈະສ້າງແລະຮັກສາກຳແພງແຍກລະຫວ່າງສາສນາແລະຣັຖຢ່າງໃດ?

# ບົດຮຽນທີ 5

## ການພິພາກສາແລະຄວາມຫວັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ອາໂມດ 9

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 9

**ຈຸດສຳຄັນຂອງບົດຮຽນນີ້:** ການຕັດສິນຂອງພຣະເຈົ້າຈະຕ້ອງມີຕໍ່ຄວາມບາບຢ່າງແນ່ນອນ, ໃນຂນະດຽວກັນ ພຣະອົງກໍຈະຊົງສ້າງໄພ່ພົນຂອງພຣະອົງຂຶ້ນໃຫມ່.

**ຄຳຖາມເພື່ອການສຳຫລວດ:** ມີຫຍັງແດ່ທີ່ພວກເຮົາສາມາດຈະເພິ່ງພາໃຫ້ພຣະເຈົ້າກະທຳ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຂ້າພະເຈົ້າມີການຕຶກຕອງກ່ຽວກັບພຣະທັມເຣື່ອງການຕັດສິນແລະການຊົງສ້າງຂຶ້ນໃຫມ່.

## ບົດຮຽນ

### ຄຳນຳ

ອາໂມດປະກາດຢ່າງແຈ່ມແຈ້ງວ່າຊົນຊາດອິສຣາເອນຈະຫລີກຈາກການພິພາກສາຂອງພຣະເຈົ້າບໍ່ໄດ້. ຄວາມສັມພັນໃນພຣະສັນຍາລະຫວ່າງພວກເຂົາແລະພຣະເຈົ້າຈະບໍ່ມີການຍົກເວັ້ນໃຫ້ພວກເຂົາຈາກການຕັດສິນຂອງພຣະອົງ. ພວກເຂົາຈະຖືກຕັດສິນເຫມືອນຊົນຊາດອື່ນໆ. ອາໂມດໄດ້ມ້ວນທ້າຍດ້ວຍຂໍ້ຄວາມວ່າ ເຖິງຢ່າງໃດກໍຕາມພຣະຄຸນຂອງພຣະເຈົ້າເທົ່ານັ້ນຈະປິ່ນປົວບາດແຜຂອງພວກເຂົາ.

### ແນ່ນອນຈາກການພິພາກສາ (9:1-8 ກ)

ໃນພຣະທັມອາໂມດບົດທີ 9 ຂອງຂໍ້ 1-4 ພວກເຮົາຈະເຫັນວ່າພຣະຜູ້ເປັນເຈົ້າຊົງຕັດສິນຊົນຊາດອິສຣາເອນ, ພວກເຂົາບໍ່ມີບ່ອນຫລີກລີ້ໄດ້ເລີຍ. ໃນນິມິດຂອງອາໂມດ ລາວເຫັນພຣະຜູ້ເປັນເຈົ້າຊົງຢືນຢູ່ຂ້າງແທ່ນບູຊາ. ອາດຈະເປັນແທ່ນບູຊາໃນເມືອງເບັດເອນກໍໄດ້ ໃນເມື່ອລາວໄດ້ປະກາດຕໍ່ຕ້ານການກະທຳພິທີທາງສາສນາຂອງພວກເຂົາ. ແທ່ນບູຊາເປັນບ່ອນພຣະຜູ້ເປັນເຈົ້າຊົງຮັບເຄື່ອງບູຊາຈາກໄພ່ພົນຂອງພຣະອົງ. ແທນທີ່ພຣະເຈົ້າຈະຮັບເຄື່ອງບູຊາຂອງພວກເຂົາ, ພຣະອົງກັບກ່າວວ່າ " ຈົ່ງທຸບຕີຍອດເສົາວິຫານ." ຄຳບັນລະຍາຍຈາກພາບພົດຕອນນີ້ແມ່ນແຜ່ນດິນຫວັ່ນໄຫວ.

ສະຖານທີ່ເຄີຍເປັນບ່ອນນະມັສການຂອງຊົນຊາດອິສຣາເອນຈະເພພັງທະລາຍລົງ. ປະຊາຊົນຈະໄດ້ຮັບຄວາມທົນທຸກລຳບາກ, ແລະບໍ່ມີຜູ້ໃດຈະປົບຫນີໄປໄດ້. ຕຶກຈະເພພັງລົງທັບພວກເຂົາໃຫ້ຕາຍ ແລະສ່ວນທີ່ເຫລືອນັ້ນ ພຣະຜູ້ເປັນເຈົ້າຈະທຳລາຍພວກເຂົາໃນສນາມຮົບ ຫມາຍຄວາມວ່າພວກເຂົາຈະຖືກຊົນຊາດອື່ນຂ້າພວກເຂົາ.

ອາໂມດກ່າວວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງ. ສະນັ້ນພວກເຂົາຈະໄປໃສກໍບໍ່ພົ້ນຈາກພຣະພິໂຣດຂອງພຣະອົງ. ພວກເຂົາຈະແລ່ນຫນີ ຫລືວ່າພວກເຂົາຈະລີ້ຊ້ອນຢູ່ທີ່ໃດກໍຕາມ, ແຕ່ວ່າພຣະຜູ້ເປັນເຈົ້າຊົງຢູ່ທີ່ນັ້ນ.

ພວກເຂົາຈະໄປເຖິງສຸດຂອບຟ້າຂຶ້ນໄປເຖິງສວັນຫລືວ່າຈະລົງໄປແດນພິພົບຂອງຄົນຕາຍ. ພຣະເຈົ້າກໍຈະຄົ້ນຫາພວກເຂົາໃຫ້ພົບ (9:2). ບໍ່ພຽງແຕ່ວ່າພວກເຂົາບໍ່ສາມາດລີ້ຢູ່ໃນໂລກອັນມີຂອບເຂດຈຳກັດນີ້, ພວກເຂົາຈະບໍ່ສາມາດລີ້ຢູ່ໃນຈັກກະວານອັນຈຳກັດນີ້ອີກດ້ວຍ. ພຣະຜູ້ເປັນເຈົ້າຊົງກ່າວວ່າ (9:3), " ເຖິງຖ້າວ່າພວກເຂົາຈະລີ້ຢູ່ເທິງຍອດພູກາເມນ

ເຮົາກໍຈະຄົ້ນຫາແລະຈັບເອົາເຂົາມາ ເຖິງຖ້າວ່າພວກເຂົາລີ້ເຮົາຢູ່ພື້ນນ້ຳທະເລ ເຮົາກໍຈະສັ່ງນາກ (serpent) (ງູໃຫຍ່)
ໃນທະເລກັດກິນເຂົາ" (ໃຫ້ອ່ານ ອາໂມດ 5:19). ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປອີກວ່າ, "ຖ້າວ່າພວກເຂົາເປັນຊະເລີຍເສິກຂອງສັດຕຣູ ເຮົາກໍຈະອອກຄຳສັ່ງໃຫ້ສັດຕຣູຂ້າເຂົາ" (9:4).

ຄຳເວົ້າຂອງອາໂມດໃນບົດທີ 9:1-4 ນີ້ ມີການສົມທຽບໃຫ້ເຫັນຄວາມແຕກຕ່າງກັນກັບຄຳເວົ້າຂອງໂປໂລ ເຊັ່ນວ່າ ຄວາມຕາຍຫລືຊີວິດ, ຄວາມສູງຫລືຄວາມເລິກກໍດີ ກໍຈະບໍ່ສາມາດເຮັດໃຫ້ມະນຸດຂາດຈາກຄວາມຮັກຂອງພຣະເຈົ້າຊຶ່ງມີຢູ່ໃນພຣະເຢຊູຄຣິດ (ໂຣມ 8:38-39). ຜູ້ທີ່ຢູ່ໃນພຣະຄຣິດຈະບໍ່ຖືກແຍກອອກຈາກຄວາມຮັກຂອງພຣະເຈົ້າ, ແຕ່ວ່າ ຜູ້ທີ່ຢູ່ໃຕ້ພຣະພິໂຣດຂອງພຣະເຈົ້າກໍບໍ່ສາມາດຈະລີ້ພຣະອົງ.

ຂໍ້ທີ 5-6 ໄດ້ກ່າວວ່າ: <u>ຢ່າລືມຣິດທານຸພາບຂອງອົງພຣະຜູ້ເປັນເຈົ້າ.</u> ເພງສັຣເສີນຈາກບູຮານອາການໄດ້ບັນລະຍາຍເຖິງພະລັງອຳນາດຂອງພຣະອົງ, ການຊົງສ້າງຂອງພຣະອົງ, ແລະພຣະອົງຊົງຄຸ້ມຄອງຢູ່ຕລອດມາ. ພຣະຜູ້ເປັນເຈົ້າຊົງມີອຳນາດຄວບຄຸມນ້ຳຝົນ, ແຕະຕ້ອງແຜ່ນດິນແລະໃຫ້ມັນເຈື່ອນເພພັງລົງ. ພຣະອົງຊົງສະຖິດຢູ່ເທິງສວັນແລະຢູ່ເທິງແຜ່ນດິນໂລກ, ຖ້າຈະປົບໜີຈາກພຣະອົງແລ້ວກໍໄຮ້ປໂຍດ.

ໃນຂໍ້ທີ 7-8 ກ, ພວກເຮົາຈະເຫັນວ່າ ໃນຖານະຊົນຊາດອິສຣາເອນໄດ້ເຂົ້າຮ່ວມໃນພຣະສັນຍາແລ້ວ ພວກເຂົາຍັງບໍ່ມີເງື່ອນໄຂພຽງພໍເທື່ອ. ຊົນຊາດອິສຣາເອນຄິດວ່າພວກຕົນເປັນຊົນຊາດທີ່ຖືກເລືອກໄວ້ນັ້ນຈະຖືກຍົກເວັ້ນໃຫ້ເປັນພິເສດ, ຕາມຄວາມຈິງແລ້ວ, ພວກເຂົາຈະຕ້ອງມີການຮັບຜິດຊອບ. ພວກເຂົາຄຶດຜິດໄປແລ້ວວ່າ ໃນອາດີດພຣະເຈົ້າເຄີຍສ້າງຄວາມສັມພັນກັບພວກເຂົາ ແລ້ວພຣະອົງຈະປົກປ້ອງພວກເຂົາຢູ່ສເມີແລະຈະທຳແຕ່ສິ່ງທີ່ດີຕໍ່ພວກເຂົາ. ໃນພຣະທັມອາໂມດ 3:1-2, ພຣະຜູ້ເປັນເຈົ້າຊົງກ່າວວ່າ ເຖິງແມ່ນວ່າພຣະອົງຊົງເລືອກເອົາຊົນຊາດອິສຣາເອນກໍຈິງ, ແຕ່ພຣະອົງຈະຊົງລົງໂທດໃນການເຮັດບາບຂອງພວກເຂົາ.

ບໍ່ມີທາງເລີຍ ຊົນຊາດອິສຣາເອນຈະໄດ້ຮັບໂທດໜ້ອຍກວ່າຊົນຊາດອື່ນໆ (9:7). ອາໂມດໄດ້ເຮັດໃຫ້ຜູ້ຟັງລາວຕົກໃຈ. ລາວໄດ້ແນໃສ່ຈຸດກາງຂອງປະສົບການໃນຫລັກຄວາມເຊື່ອຂອງພວກເຂົາ ຄື ພຣະຜູ້ເປັນເຈົ້າຊົງໄຖ່ບັນພະບຣຸດຂອງພວກເຂົາອອກຈາກເອຢິບ ແລະພັນກັບມາຕໍ່ວ່າພວກເຂົາ. ບໍ່ມີອັນໃດຈະມາຍັບຍັ້ງ ພຣະຜູ້ເປັນເຈົ້າໄດ້ໃນການລົງໂທດຍ້ອນການເຮັດບາບ.

ພຣະຜູ້ເປັນເຈົ້າຊົງພົວພັນກັບການເຄື່ອນໄຫວຂອງມະນຸດຕລອດມາ. ພຣະອົງຊົງກ່າວຕໍ່ຊົນຊາດອິສຣາເອນວ່າ, "ຊາວອິສຣາເອນເອີຍ ເຮົາໄດ້ປະຕິບັດຕໍ່ພວກເຈົ້າດັ່ງໄດ້ປະຕິບັດຕໍ່ພວກເອທິໂອເປັຽ ເຮົາໄດ້ພາພວກຟີລິສຕິນອອກຈາກເກາະຄັບໂຕ ແລະພາພວກຊີເຣັຽອອກຈາກເມືອງກີເຣ ດັ່ງດຽວກັນກັບທີ່ເຮົາໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ" (9:7). ປະສົບການຂອງການເປັນອົບພະຍົບຂອງຊາວຟີລິສຕິນແລະຊາວຊີເຣັຽໄດ້ຮັບການຍົກເວັ້ນຈາກການລົງໂທດຫລືບໍ່? ຄຳຕອບກໍຄືວ່າ ບໍ່ເລີຍ. ສາຍພຣະເນດຂອງອົງພຣະຜູ້ເປັນເຈົ້າຊົງຈ້ອງມອງເບິ່ງຣາຊອານາຈັກທີ່ເຕັມໄປດ້ວຍຄວາມບາບຂອງຊົນຊາດອິສຣາເອນ. ຣາຊອານາຈັກທີ່ເຕັມໄປດ້ວຍຄວາມບາບມີຜູ້ນຳທາງສາສນາແລະຜູ້ນຳປະເທດເຂົ້າຮ່ວມຫົວສົມຮູ້ຮ່ວມຄິດນຳກັນເຊິ່ງປະກອບດ້ວຍ: ຄົນຮັ່ງມີ, ພວກປະໂລຫິດ, ຜູ້ຕັດສິນ, ຜູ້ນຳ, ແລະພ້ອມທັງກະສັດດ້ວຍ. ຜູ້ທີ່ຖືກຂົ່ມເຫງແລະຜູ້ທຸກຍາກຢູ່ໃນທາງຊອບທັມບໍ່ໄດ້ເປັນພາກສ່ວນຂອງຣາຊອານາຈັກທີ່ເຕັມໄປດ້ວຍຄວາມຜິດບາບ.

ເຫດການທີ່ເກີດຂຶ້ນກັບຊົນຊາດອິສຣາເອນຈະເປັນສິ່ງທີ່ຕັກເຕືອນໃຫ້ແກ່ຄຣິສຕະຈັກທັງຫລາຍ. ມີຫລາຍຄົນໄດ້ປອບ

ໃຈຕົວເອງວ່າ ພຣະເຈົ້າຊົງປົກປັກຮັກສາພວກເຂົາດ້ວຍປະສົບການທາງສາສນາໃນອະດີດ. ກໍບໍ່ຕ່າງຫຍັງເລີຍກັບຊົນຊາດອິສຣາເອນ ພວກເຮົາຈະອາສັຍແຕ່ປະສົບການທີ່ຜ່ານມາວ່າ ພຣະເຈົ້າໄດ້ກະທຳແຕ່ສິ່ງທີ່ດີຕໍ່ພວກເຮົາແລະນຶກວ່າພຣະເຈົ້າເຂົ້າຂ້າງພວກເຮົາຢູ່ສເມີ. ພວກເຮົາບໍ່ສາມາດຈະເບິ່ງເອົາແຕ່ປະສົບການໃນອະດີດແລະປະຕິເສດສະພາບຊີວິດອັນແທ້ຈິງໃນປະຈຸບັນ. ຢູ່ເພື່ອພຣະຄຣິດ ບໍ່ແມ່ນປະສົບການຄັ້ງດຽວໃນເມື່ອໄດ້ຮັບເຊື່ອວ່າພົ້ນແລ້ວ ຫລັງຈາກຮັບບັບຕິສມາແລ້ວ ຢາກຈະໃຊ້ຊີວິດຢ່າງໃດກໍຕາມໃຈຊອບ. ແທນທີ່ຈະເປັນຢ່າງນັ້ນ ພວກເຮົາຈະຕ້ອງແບກໄມ້ກາງແຂນຂອງພວກເຮົາເດີນຕາມພຣະອົງທຸກວັນ (ມັດທາຍ 10:38; ລູກາ 9:23).

## ແນ່ນອນໃນຄວາມຫວັງ (9:8 ຂ-15)

ເບິ່ງເຫມືອນກັບວ່າຣາຊອານາຈັກອິສຣາເອນທີ່ເຕັມໄປດ້ວຍຄວາມບາບຈະຖືກທຳລາຍ (9:8 ກ) ແຕ່ວ່າບາງສ່ວນຈະຖືກຮັກສາໄວ້ (9:8 ຂ). ປະຊາຊົນບາງສ່ວນຈະລອດພົ້ນຈາກຄວາມຕາຍ. ຄົນທຸກຍາກແລະຄົນມີຄວາມຕ້ອງການ, ພວກເຂົາຖືກຄົນຮັ່ງມີແລະເຈົ້ານາຍບຽດບຽນແລະຂົ່ມເຫງ. ຄົນພວກນີ້ບໍ່ໄດ້ຖືກສາບແຊ່ງ. ພຣະຜູ້ເປັນເຈົ້າຈະຮ່ອນພວກອິສຣາເອນເຫມືອນກັນກັບເມັດເຂົ້າປຽກຢູ່ໃນກະດົ້ງເຂິງ, ພວກເຂົາຈະສະທ້ານຫວັ່ນໄຫວຢູ່ໃນທ່າມກາງຊົນຊາດອື່ນໆ.ເມັດເຂົ້າຈະຖືກເກັບໄວ້ແລະເປືອກເຂົ້າຖືກໂຍນຖິ້ມເສັຽ (9:9).

ປະຊາຊົນຂອງອິສຣາເອນຍັງຄິດວ່າຄວາມຈິບຫາຍຈະບໍ່ເກີດຂຶ້ນກັບພວກເຂົາ (9:10). ເປັນຄວາມຄິດທີ່ໂງ່ຫລາຍໂດຍອາສັຍປະສົບການທີ່ໄດ້ຮັບຄວາມປົກປ້ອງໃນອາດີດເຫມືອນດັ່ງຊົນຊາດອິສຣາເອນ. ພວກເຂົາມອບຄວາມປົກປັກຮັກສາໃນປະຈຸບັນດ້ວຍປະສົບການໃນອະດີດທີ່ເຄີຍເປັນອົບພະຍົບຈາກເອຢິບ.

ເຖິງຢ່າງໃດກໍຕາມ ພຣະຜູ້ເປັນເຈົ້າຊົງກ່າວວ່າ ພຣະອົງຈະສ້າງຄອບຄົວຂອງກະສັດດາວິດທີ່ເປັນເຫມືອນເຮືອນທີ່ຮ້າງແລະເພພັງຂຶ້ນໃຫມ່ (9:11-12). ຣາຊວົງຂອງກະສັດດາວິດຈະບໍ່ໄດ້ບັນລະຍາຍວ່າເປັນຄອບຄົວ (2 ຊາມູເອນ 7:11,27) ແຕ່ຈະເປັນເຮືອນຫລືທີ່ຊັ້ນ. ແນ່ນອນ ເມື່ອພຣະເມຊີອານສະເດັດມາພຣະສັນຍາໄດ້ສຳເຣັດໃນຣາຊວົງຂອງກະສັດດາວິດ (ເອຊາຢາ 9:6-7; 16:5; ເຢຣາມີຢາ 23:5; 33:15-17; ເອເຊກຽນ 34:23-24; 37:24-25; ໂຮເຊອາ 3:5; ມີກາ 5:2).

ຜູ້ປົກຄອງຄົນໃຫມ່ຈາກຣາຊວົງຂອງກະສັດດາວິດຈະໄດ້ຮວບຮວມເອົາພວກທີ່ເຫລືອຢູ່ໃນປະເທດເອໂດມ ແລະຊົນຊາດອື່ນໆທີ່ເປັນຝ່າຍຂອງພຣະເຈົ້າມາກ່ອນນັ້ນ. "ໄພ່ພົນຂອງພຣະເຈົ້າ" ບໍ່ໄດ້ເຈາະຈົງໃສ່ແຕ່ຊົນຊາດດຽວເທົ່ານັ້ນ. ແທນທີ່ຈະເປັນຢ່າງນັ້ນ ແມ່ນປະຊາຊົນຜູ້ທີ່ຢຳເກງພຣະເຈົ້າຈາກທຸກໆຊົນຊາດມາຮວມກັນເຂົ້າເປັນໄພ່ພົນຂອງພຣະອົງ. ໃນກິຈການ ບົດທີ 11 ທາງຄຣິສຕະຈັກຍອມຮັບຮູ້ວ່າ ພຣະວິນຍານບໍຣິສຸດຊົງສະເດັດລົງມາເທິງຊາວອິສຣາເອນ, ແລະພຣະວິນຍານບໍຣິສຸດອົງດຽວກັນນັ້ນແຫລະຊົງສະເດັດລົງມາເທິງຄອບຄົວຂອງໂຄນີເລໂອ ຄົນຕ່າງຊາດເຊັ່ນກັນ.

ທ້າຍສຸດນີ້ ພຣະຜູ້ເປັນເຈົ້າຊົງສັນຍາໃຫ້ຄວາມອຸດົມສົມບູນ (ອາໂມດ 9:13-14). ພຣະຜູ້ເປັນເຈົ້າຈະທ້ອນໂຮມຊົນຊາດອິສຣາເອນ. ພຣະອົງຊົງກ່າວວ່າ ພວກເຂົາຈະປູກຫມາກອະງຸ່ນແລະຈະໄດ້ຮັບຜົນຂອງມັນຢ່າງລົ້ນເຫລືອ. ພວກເຂົາຈະເຮັດສວນແລະໄດ້ກິນຜົລປູກນັ້ນ. ພຣະອົງຊົງກ່າວຕໍ່ອີກວ່າ, " ເຮົາຈະປູກພວກເຂົາໄວ້ໃນແຜ່ນດິນທີ່ເຮົາໃຫ້ແກ່ເຂົາ ແລະພວກເຂົາຈະບໍ່ຖືກຫລົກອອກອີກຈັກເທື່ອ ພຣະຜູ້ເປັນເຈົ້າຂອງພວກເຈົ້າຊົງກ່າວດັ່ງນີ້ແຫລະ" (15).

## ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ

ຈະເປັນໄປໄດ້ຢ່າງໃດໃນພຣະທັມຂອງອາໂມດມີທັງການຕັດສິນ, ພຣະພິໂຣດ, ທີ່ມາຈາກພຣະຜູ້ເປັນເຈົ້າຮ່ວມທັງພຣະ

ຄຸນແລະການຫ້ອມໂຮມຂອງພຣະເຈົ້າ? ບໍ່ມີພາບພົດອັນໃດເລີຍຈະບັນລະຍາຍເຖິງພຣະພິໂຣດແລະພຣະຄຸນຂອງພຣະເຈົ້າໄດ້ນອກເໜືອໄປຈາກໄມ້ກາງແຂນແລ້ວ. ຢູ່ເທິງໄມ້ກາງແຂນ ພຣະພິໂຣດຂອງພຣະເຈົ້າຊົງປາກົດຕໍ່ສູ້ພຣະບຸດຂອງພຣະອົງຍ້ອນຄວາມບາບຂອງພວກເຮົາ. ໂດຍການເປັນມາຂອງພຣະຜູ້ເປັນເຈົ້າ ພຣະອົງຊົງບໍຣິສຸດແລະສິນທັມ. ສະນັ້ນແລ້ວ ພຣະເຈົ້າບໍ່ສາມາດເບິ່ງຂ້າມຄວາມບາບໄດ້. ເພື່ອເປັນໄປຕາມຄວາມຈິງຂອງພຣະເຈົ້າ, ເພື່ອເປັນໄປຕາມຄວາມຈິງຂອງຄວາມຊອບທັມຂອງພຣະອົງ, ພຣະອົງຈະຕ້ອງຕໍ່ສູ້ກັບຄວາມບາບ (ໂຣມ 1:18).

## ຄໍາຖາມ

1. ທ່ານມີຄວາມຮູ້ສຶກຢ່າງໃດເມື່ອໄດ້ສຶກສາພຣະທັມກ່ຽວກັບເຣື່ອງພຣະພິໂຣດຂອງພຣະເຈົ້າ? ພຣະທັມຕອນນີ້ມີຄວາມໝາຍວ່າຢ່າງໃດສໍາລັບສມັຍນີ້?

2. ເປັນຫຍັງແບັບຕິສຈຶ່ງສັນນິຖານວ່າປະສົບການຈາກຄວາມລອດພົ້ນໃນອະດີດຈະຊ່ອຍໃຫ້ພົ້ນໄດ້ຢູ່ສເມີ? ມີແນວຄິດກັນວ່າ "ເຄີຍໄດ້ຮັບຄວາມລອດພົ້ນເທື່ອດຽວແລ້ວ ກໍໄດ້ພົ້ນຕລອດໄປ" ຈະມີການພົວພັນຢ່າງໃດກັບພຣະທັມອາໂມດ ບົດທີ 9 ຊຶ່ງເຕືອນວ່າບໍ່ໃຫ້ເມີນເສີຍໃນຄວາມສັມພັນກັບພຣະເຈົ້າໂດຍອ້າງວ່າເຄີຍໄດ້ຮັບພຣະພອນຈາກພຣະເຈົ້າໃນອະດີດ?

3. ພຣະຜູ້ເປັນເຈົ້າທັງເກີດພຣະພິໂຣດແລະມີຄວາມຮັກໄດ້ຢ່າງໃດ?

4. ທ່ານມີປະສົບການກັບພຣະຄຸນຂອງພຣະເຈົ້າເມື່ອໃດໃນອະດີດທີ່ຜ່ານມາ?

## ເຣື່ອງທີ່ນໍາມາສຶກສາ

ຄອບຄົວຂອງທ້າວແຟຣງມີຄວາມຮູ້ສຶກວ່າລາວໄດ້ຖວາຍຊີວິດຂອງລາວໃຫ້ກັບພຣະຄຣິດໃນການຟື້ນຟູຂອງຊາວໜຸ່ມໃນປີ 1964. ລາວໄດ້ຮັບບັບຕິສະມາຫລັງຈາກການຟື້ນຟູ. ລາວໄປໂບດເປັນປະຈໍາເມື່ອລາວຍັງຢູ່ກັບພໍ່ແມ່ຂອງລາວ. ຫລັງຈາກລາວຍ້າຍອອກຈາກບ້ານໄປຢູ່ບ່ອນອື່ນ ລາວກໍຫ່າງເຫີນຈາກພຣະເຈົ້າ. ແຟຣງບໍ່ມີຄວາມສົນໃຈກັບໂບດແລະເຣື່ອງຝ່າຍວິນຍານເປັນເວລາສາມສິບຫ້າປີ. ໃນຖານະເປັນແບັບຕິດ, ລາວເຊື່ອໝັ້ນໃນຫລັກຄໍາສອນວ່າ "ເຄີຍໄດ້ຮັບຄວາມລອດພົ້ນເທື່ອດຽວແລ້ວ ກໍໄດ້ພົ້ນຕລອດໄປ." ອາໂມດຈະວ່າຢ່າງໃດກັບຊີວິດຝ່າຍວິນຍານຂອງແຟຣງ? ສໍາລັບທ່ານເດ ທ່ານຈະວ່າຢ່າງໃດ? ທ່ານຄິດວ່າພຣະເຈົ້າຈະຊົງກ່າວຢ່າງໃດ?

# ບົດຮຽນທີ 6
# ບັນຫາໃນຄອບຄົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ໂຮເຊອາ 1:1-9
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຮເຊອາ 1:1-9
**ຈຸດສຳຄັນຂອງບົດຮຽນນີ້:** ບໍ່ສັດຊື່ຕໍ່ພຣະເຈົ້ານຳໄປສູ່ການປະຕິເສດຂອງພຣະອົງ
**ຄຳຖາມເພື່ອການສຳຫລວດ:** ພຣະຜູ້ເປັນເຈົ້າຊົງລົງໂທດບາບບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເຣື່ອງຄວາມສັມພັນໃນຄອບຄົວຂອງໂຮເຊອາມີຄວາມຫມາຍນຳໄປເປັນການປະກາດຂອງອົງພຣະຜູ້ເປັນເຈົ້າເຖິງການຕັດສິນຊົນຊາດອິສຣາເອນແລະມີຄວາມຫມາຍນຳມາໃຊ້ໃນຊີວິດປະຈຳວັນອີກດ້ວຍ.

## ບົດຮຽນ

### ຄຳນຳ

ເມື່ອນາງເອມເມີລີໄດ້ບອກຍາດຕິພີ່ນ້ອງແລະເພື່ອນຝູງວ່າ ລາວໄດ້ຫມັ້ນກັນກັບທ້າວໂຈ. ທຸກຄົນທີ່ຮູ້ຈັກກັບລາວໄດ້ບອກລາວວ່າ ລາວຕັດສິນໃຈຜິດແລ້ວ. ລາວບໍ່ຟັງໃຜເລີຍ. ລາວຕື່ນເຕັ້ນແລະດີໃຈຫລາຍ. ລາວວາງແຜນຕ່າງໆ ເພື່ອຕຽມພ້ອມໃນວັນແຕ່ງງານ. ທຸກສິ່ງທຸກຢ່າງກໍພ້ອມຫມົດແລ້ວ. ສອງສາມວັນກ່ອນວັນແຕ່ງງານ ຊຶ່ງຈະເປັນວັນສຳຄັນທີ່ສຸດໃນຊີວິດຂອງລາວ. ເມື່ອລາວຮູ້ວ່າທ້າວໂຈພົວພັນກັບຍິງຄົນອື່ນ ປຽບເຫມືອນກັນກັບວ່າ ຟ້າໂຢດລົງມາທັບລາວ ທ່ານຄິດວ່າເອເມີລີຈະເຮັດຢ່າງໃດ? ຖ້າຖືກທ່ານເດ ທ່ານຈະເຮັດຢ່າງໃດ?

ຖ້າຫາກທ່ານເຄີຍຖືກຜູ້ທີ່ທ່ານຮັກນອກໃຈທ່ານ, ໄດ້ຮັບຄວາມເຈັບປວດທາງຈິດໃຈແລ້ວ ທ່ານຈະເຂົ້າໃຈຜູ້ປະກາດພຣະທັມໂຮເຊອາ. ລາວເຈັບປວດເນື່ອງຈາກນາງໂກເມ ພັລຍາຂອງລາວນອກໃຈລາວ. ໃນຂນະທີ່ທ່ານສຶກສາພຣະທັມໂຮເຊອາ ທ່ານຈະເຂົ້າໃຈເນື້ອເຣື່ອງການປະກາດຂອງລາວຊຶ່ງມີຂໍ້ຄວາມກ່າວເຖິງລະຫວ່າງຄວາມສັມພັນຂອງພຣະເຈົ້າແລະໄພ່ພົນຂອງພຣະອົງ.

### ເຣື່ອງລາວເບື້ອງຫລັງຂອງພຣະທັມ

ເຣື່ອງລາວຂອງໂຮເຊອາແລະນາງໂກເມເປັນເຣື່ອງຄວາມຮັກແລະຄວາມເສົ້າ. ເຣື່ອງລາວຂອງລາວໄດ້ເປີດເຜີຍໃຫ້ເຫັນຫົວໃຈຂອງພຣະເຈົ້າທີ່ມີຄວາມຮັກໃນຄວາມສັມພັນຕໍ່ໄພ່ພົນຂອງພຣະອົງ. ເລີ້ມຕົ້ນຂັ້ນພື້ນຖານເປັນເຣື່ອງຊີວິດຂອງລາວ, ແຕ່ເມື່ອລົງເລິກໄປກວ່ານັ້ນ ແມ່ນກ່ຽວພັນກັບຫລັກສາສນາສາດເປັນເວລາຫລາຍສັຕວັດ.

ຫລັງຈາກອາໂມດປະກາດໄປແລ້ວ ຕໍ່ມາກໍແມ່ນໂຮເຊອາ. ຜູ້ປະກາດພຣະທັມທັງສອງນີ້ເປັນຜູ້ເລີ້ມແລກໃນການຂຽນບັນທຶກພຣະຄັມຂອງຕົນ. ຂໍ້ຄວາມຂອງໂຮເຊອາມີຄວາມແຕກຕ່າງກັນກັບຂໍ້ຄວາມຂອງອາໂມດ. ຄວາມເວົ້າຂອງອາໂມດເປັນຄວາມເວົ້າແຂງ, ແຕ່ກົງກັນຂ້າມ ຄວາມເວົ້າຂອງໂຮເຊອາມີຄວາມສົງສານແລະຄວາມຮັກ. ລາວບໍ່ໃຊ້ຄວາມເວົ້າປະທະຜູ້ຟັງຢ່າງແຮງ, ແຕ່ລາວກໍທ້າທາຍຊົນຊາດອິສຣາເອນໃນຄວາມບໍ່ສັດຊື່ຂອງພວກເຂົາທີ່ມີຕໍ່ພຣະຜູ້ເປັນເຈົ້າ. ຂໍ້ຄວາມຂອງອາໂມດຈະເນັ້ນໃຫ້ເຫັນພາກປະຕິບັດພາຍນອກ ຫລືການວາງຕົວທີ່ບໍ່ມີຄວາມສິນທັມຂອງຊົນຊາດອິສຣາເອນ. ໂຮເຊອາຈະເນັ້ນໃຫ້ເຫັນສ່ວນເລິກພາຍໃນຈິດໃຈຂອງພວກເຂົາທີ່ບໍ່ມີຄວາມສັດຊື່. ລາວຫມູນໃຈໃຫ້ພວກເຂົາມີຄວາມສັດຊື່ກັບພຣະເຈົ້າ ແລະໃນທຳນອງດຽວກັນ ລາວກ່າວເຖິງຄວາມບໍ່ສັດຊື່ຂອງພວກເຂົາ.

ພຣະທັມໂຮເຊອາເລີ້ມດ້ວຍຊື່ຂອງກະສັດຫລາຍອົງທີ່ໄດ້ຄອງຣາຊບັນລັງ ໃນເວລາສຸດທ້າຍຂອງຣາຊອານາຈັກພາກເຫນືອ (1:1). ສມັຍຂອງກະສັດຊາອູນ, ດາວິດ, ແລະໂຊໂລໂມນ ຊົນຊາດອິສຣາເອນມີຄວາມແຂງແຮງແລະຈະເຣີນຮຸ່ງເຮືອງ. ຫລັງຈາກກະສັດໂຊໂລໂມນສວັນນະຄົດແຜ່ນດິນຂອງສິບສອງຕະກູນໄດ້ແບ່ງແຍກອອກເປັນສອງ ໃນປີກ່ອນຄຣິສຕະສັດຣາດ 922. ມີຣາຊອານາຈັກພາກເຫນືອ (ອິສຣາເອນ) ແລະຣາຊອານາຈັກພາກໃຕ້ (ຢູດາ). ຫລັງຈາກນັ້ນ ເກີດການນອງເລືອດແລະຂ້າຟັນລັນແທງກັນ ຊຶ່ງເປັນສມັຍທີ່ເຕັມໄປດ້ວຍຄວາມເສົ້າສລົດໃຈ. ໃນສມັຍຂອງໂຮເຊອາເປັນຜູ້ປະກາດພຣະທັມນັ້ນ ຣາຊອານາຈັກພາກໃຕ້ມີກະສັດອຸດສີຢາເປັນຜູ້ປົກຄອງຈາກ (ກ່ອນ ຄ. ສ. 783-742), ກະສັດໂຢທາມປົກຄອງຈາກ (ກ່ອນ ຄ. ສ. 742-735), ກະສັດອາຣາດປົກຄອງຈາກ (ກ່ອນ ຄ. ສ. 735-715). ກະສັດເຮເສກີຢາ ປົກຄອງຈາກ(ກ່ອນ ຄ. ສ. 715-687). ຣາຊອານາຈັກພາກເຫນືອ ກະສັດໂຢໂຣໂບອາມທີສອງ ປົກຄອງຈາກ (ກ່ອນ ຄ. ສ. 786-746) ຫລັງຈາກກະສັດໂຢໂຣໂບອາມແລ້ວມີກະສັດທັງຫມົດຫົກອົງໄດ້ປົກຄອງຣາຊອານາຈັກພາກເຫນືອພາຍໃນຊາວຫ້າປີ. ໃນຈຳນວນຫົກອົງມີຫ້າອົງຖືກລອບສັງຫານ ( ອ່ານ ປະຫວັດກະສັດທີສອງ 14:29-17:41).

ໂຮເຊອາໄດ້ປະກາດພຣະທັມສີ່ສິບຫາສີ່ສິບຫ້າປີ, ຈາກເຄິ່ງນຶ່ງຂອງສັຕວັດທີແປດກ່ອນຄຣິສຕະສັຣາຊຈົນເຖິງຣາຊອານາຈັກອິສຣາເອນລົ້ມ ໃນປີ ກ່ອນ ຄ.ສ. 722. ລາວຈຶ່ງໄດ້ເປັນທີ່ຮູ້ກັນວ່າເປັນຜູ້ປະກາດພຣະທັມໃນສມັຍຣາຊອານາຈັກພາກເຫນືອກຳລັງເຈື່ອນລົງຈົນໃນທີ່ສຸດກໍລົ້ມ. ຊີວິດຂອງຊົນຊາດອິສຣາເອນໃນສມັຍນັ້ນແຍກອອກໄດ້ວ່າເປັນສັງຄົມຂາດຄວາມສິນທັມ, ສໍ້ຣາດບັງຫລວງ, ສັງຄົມເປື່ອຍເຍື່ອຍ, ການເມືອງມີການຕົວະ. ຄອບຄົວເສື່ອມໂຊມ. ຊີວິດຂອງສັງຄົມລະດັບກາງຊຶ່ງເປັນຫົວໃຈສຳຄັນຂອງສັງຄົມເກືອບຈະບໍ່ມີເລີຍ. ຫມາຍຄວາມວ່າຄົນທຸກກໍທຸກຈົນເກືອບບໍ່ມີກິນ ແລະຄົນຮັ່ງມີກໍມີຈົນເຫລືອຍລົ້ນ. ຜູ້ນຳທາງສາສນາກໍບໍ່ສົນໃຈຫຍັງ ພວກເຂົາເປັນພຽງແຕ່ຜູ້ນຳພິທີຕ່າງໆທາງສາສນາເທົ່ານັ້ນ ພວກເຂົາຫລີກລ້ຽງແກ່ນແທ້ຂອງເຣື່ອງຈິດວິນຍານ. ຜູ້ຕັດສິນກໍບໍ່ສັດຊື່ ແລະການຂ້າຟັນເກີດຂຶ້ນໃນແຜ່ນດິນ. ທີ່ກ່າວມານີ້ຄຸ້ນຫູບໍ່? ດ້ວຍເຫດການດັ່ງກ່າວ ໂຮເຊອາຈຶ່ງສເນີການຊົງຮ້ອງທີ່ປະກອບດ້ວຍຄວາມສົງສານຊຶ່ງມາຈາກອົງພຣະຜູ້ເປັນເຈົ້າ ຜູ້ຊົງມີຄວາມຮັກ, ແລະມີຄວາມສິນທັມ.

## <u>ພຣະຄຳຂອງພຣະເຈົ້າ</u> (1:1)

ຜູ້ມີບົດບາດໃນພຣະທັມໂຮເຊອາບໍ່ແມ່ນລາວເອງ. ພວກເຮົາບໍ່ຮູ້ຫຍັງຫລາຍເລີຍກ່ຽວກັບພື້ນຖານການເປັນມາຂອງລາວ. ໃນຂໍ້ 1-2 ພຣະທັມຂອງພຣະເຈົ້າໄດ້ແນະນຳໃຫ້ຮູ້ຊື່ຂອງລາວ ແລ້ວກໍສັ່ງໃຫ້ລາວໄປກະທຳຕາມ. ພຣະຜູ້ເປັນເຈົ້າເອັງຊົງມີບົດບາດອັນສຳຄັນໃນພຣະທັມເຫລັ້ມນີ້.

ພຣະທັມເຫລັ້ມນີ້ໄດ້ເລີ້ມດ້ວຍຂໍ້ຄວາມດັ່ງນີ້ " ຫນັງສືສະບັບນີ້ບັນຈຸພຣະຄຳຊຶ່ງພຣະເຈົ້າໄດ້ປະທານໃຫ້ແກ່ໂຮເຊອາ" ຈຶ່ງເປັນການປະກາດຂໍ້ຄວາມທີ່ສຳຄັນ. ຂໍ້ຄວາມນີ້ມີອຳນາດອັນສູງສຸດເພື່ອຜູ້ທີ່ອ່ານ. ໂຮເຊອາບໍ່ໄດ້ຕັດສິນໃຈເປັນຜູ້ປະກາດພຣະທັມ. ແມ່ນພຣະຄຳຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານແກ່ໂຮເຊອາ.

## <u>ເມື່ອພຣະຄຳຂອງພຣະເຈົ້າເຂົ້າຕັດຜ່າກາງການເປັນຢູ່ຂອງມະນຸດ</u> (1:2)

ພວກເຮົາບໍ່ຮູ້ວ່າພຣະຜູ້ເປັນເຈົ້າເລີ້ມກ່າວຕໍ່ໂຮເຊອາເມື່ອໃດ "ຈົ່ງໄປແຕ່ງງານກັບຍິງໂສເພນີ ແລ້ວເຮັດໃຫ້ນາງມີລູກ." ບາງທີ ພຣະເຈົ້າກ່າວຕໍ່ລາວແລະລາວເຊື່ອຟັງພຣະອົງ. ຫລືບາງທີ ລາວເຂົ້າໃຈພຣະຄຳຂອງພຣະເຈົ້າທີ່ສະທ້ອນໃຫ້ລາວເຫັນບັນຫາໃນຄອບຄົວຂອງລາວຕາມຫລັກຄຳສອນຂອງພຣະອົງ. ພວກເຮົາຮູ້ວ່າ ໂຮເຊອາໄດ້ຮຽນຮູ້ບົດຮຽນນີ້ກ່ຽວກັບຕົວຂອງລາວເອງ, ພຣະເຈົ້າ, ຄອບຄົວຂອງລາວ, ແລະຊົນຊາດຂອງລາວໂດຍເຂົ້າໃຈວ່າ ພຣະຄຳຂອງພຣະເຈົ້າເຂົ້າຕັດຜ່າກາງຊີວິດຂອງລາວ. ພຣະຄຳຂອງພຣະເຈົ້າເຂົ້າຜ່າກາງຊີວິດຂອງລາວເມື່ອລາວໄດ້ຮັບເອົານາງໂກເມ

ມາເປັນພັລຍາຂອງລາວ.

ການທີ່ໂຮເຊອາໄປແຕ່ງງານກັບນາງໂກເມ ຍິງໂສເພນີນັ້ນ ແມ່ນລາວໄດ້ກະທຳຕາມຄຳສັ່ງຂອງພຣະເຈົ້າ. ນາງໂກເມ ເປັນຍິງໂສເພນີປະຈຳຢູ່ໃນສານເຈົ້າຊຶ່ງເປັນບ່ອນນະມັສການພຣະບາອານ. ພວກເຂົາໄດ້ຕັ້ງສານເຈົ້າພຣະບາອານໄວ້ ຕາມຈຸດຕ່າງໆທົ່ວຣາຊອານາຈັກອິສຣາເອນ (ອານາຈັກພາກເໜືອ). ຜູ້ຊາຍທີ່ໄປນະມັສການພຣະບາອານຈະມີການ ຮ່ວມເພດກັບຍິງໂສເພນີປະຈຳຢູ່ສານເຈົ້າ ຊຶ່ງເປັນພິທີທາງສາສນາ. ພຣະບາອານເປັນພຣະທີ່ເຊື່ອຖືກັນວ່າເປັນພຣະທີ່ ປະທານໃຫ້ເຄື່ອງປູກຂອງຝັງຈະເຣີນງອກງາມ. ບໍ່ຕ່າງຫຍັງກັບຜີຕາແຮກທີ່ປະຈຳຢູ່ຕາມໄຮ່ນາຕາກ້າ.

ໃນບົດບາດຕາມເຣື່ອງລາວໃນພຣະທັມຕອນນີ້ ນາງໂກເມເປັນຕົວແທນຂອງຊົນຊາດອິສຣາເອນ. ພວກເຂົາໄດ້ຂາຍຕົວ ໄປເປັນໂສເພນີໂດຍການນະມັສການພຣະບາອານ. ໂຮເຊອາເປັນຕົວແທນຂອງພຣະເຈົ້າ ຄືຜູ້ເປັນສາມີ. ໃນຂນະທີ່ນາງ ໂກເມບໍ່ສັດຊື່ຕໍ່ໂຮເຊອາຜູ້ເປັນສາມີ, ຊົນຊາດອິສຣາເອນກໍບໍ່ສັດຊື່ຕໍ່ພຣະເຈົ້າ. ເມື່ອໂຮເຊອາເລືອກເອົານາງມາເປັນ ພັລຍາ ລາວຮູ້ດີວ່າ ນາງເປັນຍິງໂສເພນີ, ແຕ່ວ່າລາວມີຄວາມຮັກນາງ. ເມື່ອພຣະຜູ້ເປັນເຈົ້າຊົງເລືອກເອົາມະນຸດນັ້ນ ພຣະອົງຮູ້ດີວ່າ ພວກເຮົາມັກຈະກ້າວໄປເສັ້ນທາງບໍ່ສັດຊື່ຕໍ່ພຣະອົງ, ແຕ່ວ່າ ພຣະອົງຊົງມີຄວາມຮັກຕໍ່ພວກເຮົາຢູ່ສເມີ.

ຊົນຊາດອິສຣາເອນບໍ່ໄດ້ນະມັສການແຕ່ພຣະບາອານອົງດຽວເທົ່ານັ້ນ. ພວກເຂົານະມັສການພຣະຫລາຍອົງແລະພຣະ ຢາໂຮວາກໍເປັນອົງນຶ່ງໃນຈຳນວນຫລາຍໆອົງທີ່ພວກເຂົາຂາບໄຫວ້ບູຊາ. ການປະຕິບັດຢ່າງນີ້ ແມ່ນອນເປັນການບໍ່ ເຊື່ອຟັງພຣະບັນຍັດຂອງພຣະເຈົ້າຊຶ່ງຢູ່ໃນບັນຍັດຂອງໂມເຊ (ອົບພະຍົບ 20:3-4).

ພຣະບັນຍັດຂອງພຣະຜູ້ເປັນເຈົ້າໄດ້ປະທານໃຫ້ແກ່ໄພ່ພົນຂອງພຣະອົງ ໂດຍຜ່ານທາງໂມເຊແລະເນັ້ນໜັກໃຫ້ປະຊາ ຊົນໃນສມັຍໂຮເຊອາຂັບຕາມແລະຕໍ່ມາຈົນຮອດທຸກວັນນີ້. ພຣະຜູ້ເປັນເຈົ້າບໍ່ແມ່ນພຣະອົງນຶ່ງໃນຈຳນວນພຣະທັງ ຫລາຍທີ່ພວກເຮົານະມັສການ. ພຣະຜູ້ເປັນເຈົ້າເປັນພຣະເຈົ້າອົງດຽວເທົ່ານັ້ນທີ່ພວກເຮົາຈະຕ້ອງນະມັສການ. ໃນເວລານຶ່ງ ຜູ້ໃດຜູ້ນຶ່ງມີຄວາມສົນໃຈໃນເຣື່ອງຈິດວິນຍານ ແລະມີຄວາມສົນໃຈໃນເຣື່ອງນີ້ຫລາຍຂຶ້ນ. ສິ່ງສຳຄັນນັ້ນ ໃຫ້ຄົນນັ້ນຈຳໄວ້ວ່າສິ່ງທີ່ລາວຕ້ອງການອັນແທ້ຈິງນັ້ນ ແມ່ນພຣະຜູ້ເປັນເຈົ້າບໍ່ແມ່ນກ່ຽວກັບເຣື່ອງຈິດວິນຍານ. ໃນສັງຄົມນີ້ ມີຫລາຍຄົນສົນໃຈກ່ຽວກັບເຣື່ອງຈິດວິນຍານ ແຕ່ວ່າຈະພົບວິນຍານແທ້ກໍຕໍ່ເມື່ອເນັ້ນໜັກແນໃສ່ພຣະເຈົ້າ ອົງທ່ຽງແທ້ ພຣະຜູ້ຊົງພຣະຊົນຢູ່. ເຖິງຈະສຶກສາເຣື່ອງສາສນາສາດ ຫລືວ່າເຣື່ອງພຣະເຈົ້າ ແຕ່ບາງຄັ້ງຜູ້ກ່ຽວບໍ່ຮູ້ຈັກ ພຣະຜູ້ເປັນເຈົ້າກໍເປັນໄດ້ ເພາະວ່າພວກເຂົາສຶກສາຮຽນຮູ້ເຣື່ອງຂອງພຣະເຈົ້າເທົ່ານັ້ນ.

ກ່ອນພວກເຮົາຈະຕິຕຽນການປະຕິບັດແລະປມາດຊີວິດຂອງພວກເສດຖີແລະມີຊື່ສຽງ, ການບັນເທີງ, ພວກນັກຮ້ອງ ແລະພວກດາຣາໃຫ້ພວກເຮົາສັງເກດເບິ່ງຕົວຂອງພວກເຮົາເອງເສັຽກ່ອນ. ທ່ານເອົາພຣະເຈົ້າເປັນເອກໃນຊີວິດຂອງ ທ່ານຫລືບໍ່? ຫລືວ່າ ທ່ານໄປເພິ່ງໃນໂຊກຊາຕາ? ພຣະທັມອົບພະຍົບ 20:3-4 ເປັນຂອງທ່ານ.

ຈົ່ງເຝົ້າສັງເກດເບິ່ງຊີວິດຂອງຕົວທ່ານເອງ. ນີ້ແຫລະ ຈະເປັນທາງນຶ່ງທີ່ທ່ານຈະຮູ້ຈັກພາຍໃນຈິດໃຈຕົວທ່ານເອງ. ໃນ ຂນະທີ່ທ່ານຖາມຕົວເອງກ່ຽວກັບ ຊີວິດແລະຄວາມສັມພັນຂອງທ່ານກັບຄອບຄົວ ແລ້ວທ່ານຈະເຫັນສິ່ງທີ່ກ່ຽວພັນກັບ ຈິດໃຈແລະພຣະລັກສະນະຂອງພຣະເຈົ້າ, ເມື່ອນັ້ນແຫລະທ່ານຈະເຂົ້າໃຈຢ່າງເລິກຊຶ້ງເຖິງພຣະຄຳຂອງພຣະເຈົ້າເຂົ້າ ຕັດຜ່າກາງຊີວິດຂອງທ່ານ.

## <u>ເມື່ອຄົນເຮົາກາຍເປັນເໜືອກວ່າສັນຍາລັກໃນການໃຊ້ຊີວິດ</u> (1:2-9)

ການເປັນສາມີແລະພັລຍາລະຫວ່າງໂຮເຊອາແລະໂກເມ ແລະລູກສາມຄົນທີ່ເກີດຈາກນາງເປັນສັນຍາລັກເທົ່ານັ້ນບໍ,

ບໍ່ເລີຍ ພວກເຂົາເຫນືອໄປກວ່າສັນຍາລັກອີກ. ພວກເຂົາເປັນຕົວຢ່າງໃຫ້ເຫັນຄວາມສັມພັນລະຫວ່າງພຣະຜູ້ເປັນເຈົ້າ ແລະໄພ່ພົນຂອງພຣະອົງ.

ລູກທັງສາມຄົນທີ່ເກີດມາກັບນາງໂກເມນັ້ນເປັນລູກທີ່ນາງໄດ້ມາດ້ວຍຄວາມບໍ່ສັດຊື່ຕໍ່ໂຮເຊອາ (1:2). ລາວໄດ້ຍິນພຣະຄໍາຂອງພຣະເຈົ້າບອກລາວວ່າ ໃຫ້ລາວຕັ້ງຊື່ຂອງລູກແຕ່ລະຄົນນັ້ນ ເຈາະຈົງໃສ່ຕໍ່ເຫດການທີ່ເກີດຂຶ້ນກັບຊົນຊາດອິສຣາເອນ. ແຕ່ລະຊື່ໄດ້ບົ່ງບອກໃຫ້ເຫັນເຖິງການກະທໍາຂອງພວກເຂົາ ແລະການຊົງຕັດສິນຂອງອົງພຣະຜູ້ເປັນເຈົ້າຍ້ອນຄວາມບໍ່ສັດຊື່ຂອງພວກເຂົາຕໍ່ພຣະອົງ.

ຜົນແລກຂອງປະຊາຊົນບໍ່ສັດຊື່ຕໍ່ພຣະຜູ້ເປັນເຈົ້າ ພຣະອົງຊົງກ່າວຕໍ່ໂຮເຊອາໃຫ້ຕັ້ງຊື່ລູກຊາຍກົກນັ້ນວ່າ ອິສເຣເອນ. ອິສເຣເອນເປັນເມືອງນຶ່ງທີ່ຕັ້ງຢູ່ລະຫວ່າງກາງຂອງທະເລຄາລີເລແລະແຂວງຊາມາເຣັງແລະຢູ່ພາກເຫນືອຂອງຣາຊອານາຈັກອິສຣາເອນ. ປະຫວັດກະສັດທີສອງ ບົດທີ 9-10ໄດ້ກ່າວເຖິງເຣື່ອງເຢຮູນາຍທະຫານຄົນນຶ່ງ ເມື່ອລາວໄດ້ຖືກແຕ່ງຕັ້ງໃຫ້ເປັນກະສັດຂອງອິສຣາເອນ ລາວໄດ້ທໍາການກວດລ້າງເຊື້ອສາຍຂອງກະສັດອາຮາບ (ອາກາບ) ແລະຣາຊິນີເຢເສເບນຕາມທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້. ເຣື່ອງລາວນີ້ໄດ້ເກີດຂຶ້ນປະມານຮ້ອຍປີກ່ອນໂຮເຊອາໄດ້ຖືກຮ້ອງໃຫ້ເປັນຜູ້ປະກາດພຣະທັມ. ກະສັດອາຮາບແລະຣາຊິນີເຢເສເບນໄດ້ນໍາພາຊົນຊາດອິສຣາເອນໃຫ້ນະມັສການພຣະບາອານ. ເມືອງອິສຣາເອນເປັນສະຖານທີ່ກະສັດອາຮາບໄດ້ຍຶດເອົາສວນອະງຸ່ນຂອງນາໂບດ ແລ້ວກໍຂ້າລາວເສັຽ.(ອ່ານ ປະຫວັດກະສັດທີນຶ່ງ ບົດທີ 21). ຣາຊິນີເຢເສເບນກໍຖືກຂ້າໃນເມືອງອິສຣາເອນ. ເຢຮູໄດ້ນໍາໄປກວດລ້າງເຊື້ອສາຍຂອງກະສັດອາຮາບຈົນຫມົດ. ຊື່ຂອງລູກຊາຍກົກຂອງໂຮເຊອາ ອິສຣາເອນຈຶ່ງເຕືອນໃຫ້ເຫັນຄວາມບໍ່ສັດຊື່ຂອງຊົນຊາດອິສຣາເອນ ພວກເຂົາຈະໄດ້ຮັບໂທດຂອງການກະທໍານັ້ນ.

ຕໍ່ມາ ນາງໂກເມໄດ້ລູກຜູ້ທີສອງ, ລູກຄົນນີ້ໄດ້ມາຍ້ອນຄວາມບໍ່ສັດຊື່ຂອງນາງເຊັ່ນກັນ. ພຣະຜູ້ເປັນເຈົ້າບອກໂຮເຊອາໃຫ້ຕັ້ງຊື່ລູກນັ້ນວ່າ "ໂລຣຸຮາມາ". ໃນພາສາເຮັບເຣີ ຄໍາວ່າ "ຣຸຮາມາ" ມີຄວາມຫມາຍວ່າໄດ້ຮັບຄວາມສົງສານ, ຄໍາວ່າ "ໂລ" ມີຄວາມຫມາຍວ່າ "ບໍ່". ແຕ່ວ່າ ເມື່ອຕື່ມຄໍາວ່າ "ໂລ" ໃສ່ທາງຫນ້າຂອງຄໍາວ່າ "ຣຸຮາມາ" ຄວາມຫມາຍຂອງຄໍານັ້ນຈຶ່ງປ່ຽນແປງ. ຊື່ຂອງລູກສາວລາວຈຶ່ງມີຄວາມຫມາຍວ່າ ບໍ່ໄດ້ຮັບຄວາມສົງສານ. ຍ້ອນຄວາມບໍ່ສັດຊື່ຂອງຊົນຊາດອິສຣາເອນ, ພຣະຜູ້ເປັນເຈົ້າຈຶ່ງບໍ່ມີຄວາມສົງສານຕໍ່ພວກເຂົາອີກຕໍ່ໄປ.

ພາສາອັງກິດໃຊ້ຄໍາວ່າ <u>mercy</u> or <u>pity</u> ພາສາລາວໃຊ້ຄໍາວ່າ ຄວາມສົງສານ. ພຣະຄັມພີລາວສບັບພາສາຂອງຄົນທົ່ວໄປໃຊ້ຄໍາວ່າ "ຂາດຮັກ". ຖ້າຈະແປໃຫ້ຖືກແລ້ວຄວນຈະໃຊ້ຄໍາວ່າ ເມດຕາ, ເຫັນໃຈ, ຫລື ອະນຸເຄາະ. ຄວາມເມດຕານີ້ຈະຮຽກຮ້ອງເອົາບໍ່ໄດ້. ຄວາມເມດຕາເປັນຂອງປະທານເນື່ອງມາຈາກມີຄວາມສົງສານໃນຄວາມສັມພັນ. ເມື່ອໄພ່ພົນຂອງພຣະເຈົ້າຫາກເຫັນວ່າຄວາມເມດຕາເປັນສິ່ງທີ່ພວກເຂົາຮຽກຮ້ອງເອົາໄດ້ ການຕັດສິນໃຈທີ່ບໍ່ໃຊ້ຊີວິດອັນເດັດຂາດກັບພຣະເຈົ້າກໍຈະສະແດງອອກປາກົດໃຫ້ເຫັນ.

ນາງໂກເມບໍ່ສັດຊື່ຕໍ່ສາມີແລະໄປໄດ້ລູກຊາຍອີກເປັນຄົນທີສາມ. ພຣະຜູ້ເປັນເຈົ້າບອກໃຫ້ໂຮເຊອາໃສ່ຊື່ລູກຊາຍຄົນນີ້ວ່າ "ໂລອັມມີ". ຄໍາວ່າ "ອັມມີ" ມີຄວາມຫມາຍວ່າ "ໄພ່ພົນຂອງເຮົາ". ຄໍານີ້ໄດ້ມາຈາກຄວາມສັມພັນໃນພຣະສັນຍາລະຫວ່າງພຣະຜູ້ເປັນເຈົ້າແລະຊົນຊາດອິສຣາເອນ. ສະນັ້ນ ຄໍາວ່າ "ໂລອັມມີ" ຈຶ່ງມີຄວາມຫມາຍວ່າ "ບໍ່ແມ່ນໄພ່ພົນຂອງເຮົາ". ໃນຂນະທີ່ໂຮເຊອາປະກາດຕໍ່ຊົນຊາດອິສຣາເອນ ພວກເຂົາດໍາເນີນໃນຄວາມບໍ່ສັດຊື່ຢູ່ຕໍ່ໄປ. ພຣະຜູ້ເປັນເຈົ້າຈຶ່ງໄດ້ກ່າວວ່າ " ພວກເຈົ້າບໍ່ແມ່ນໄພ່ພົນຂອງເຮົາ."

ເມື່ອຫວນຄືນເບິ່ງຫລັກຄໍາສອນນີ້ ແລະຫລັກຄໍາສອນຂອງພຣະເຢຊູ. ແນ່ນອນ ຊີວິດແລະຫລັກຄໍາສອນຂອງພຣະອົງ

ຈະຊີ້ໃຫ້ເຫັນວ່າພຣະເຈົ້າມີຄວາມເມດຕາ.  ຖ້າຫາກວ່າພຣະເຈົ້າບໍ່ມີຄວາມເມດຕາຕໍ່ຄົນຜູ້ນັ້ນອີກ ລາວອາດຈະເປັນຄົນຊົ່ວຮ້າຍຫລາຍ. ແຕ່ວ່າ ຄຳທຳນວາຍຂອງໂຮເຊອາໄດ້ກ່າວໄວ້ວ່າ ພຣະເຈົ້າຈະບໍ່ມີຄວາມເມດຕາ ຖ້າຫາກບໍ່ມີຄວາມສັດຊື່ຕໍ່ພຣະອົງ. ແຕ່ຢ່າລືມໄປວ່າ ພຣະເຢຊູໄດ້ເຕືອນຢູ່ເລື້ອຍເຖິງການຕັດສິນຂອງພຣະເຈົ້າ. ພຣະຄຳຂອງພຣະເຢຊູບໍ່ຫວານຄືນ້ຳເຜິ້ງຢູ່ຕລອດໄປ.

## <u>ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ</u>

ສຳລັບໂຮເຊອາແລ້ວ, ຄອບຄົວຂອງລາວແລະການຊີວິດຮ້ອງໃຫ້ເປັນຜູ້ປະກາດພຣະທັມນັ້ນພົວພັນກັນ. ລາວເຂົ້າໃຈເຖິງຄວາມເຈັບປວດຂອງພຣະເຈົ້າຕໍ່ຊົນຊາດອິສຣາເອນ ເພາະວ່າ ລາວມີປະສົບການເຖິງຄວາມເຈັບປວດຍ້ອນພັລຍາຂອງລາວນອກໃຈລາວ. ເມື່ອຄອບຄົວມີບັນຫາ, ທຸກໆຄົນໃນຄອບຄົວຈະຕ້ອງມີພາກສ່ວນແກ້ບັນຫາຊ່ອຍກັນ. ເມື່ອຄອບຄົວຂອງພຣະເຈົ້າບໍ່ສັດຊື່ຕໍ່ພຣະເຈົ້າ, ຫົວໃຈຂອງພຣະເຈົ້າເກີດຄວາມເຈັບປວດ.

ພຣະທັມຂອງພຣະເຈົ້າໄດ້ປະກາດຜ່ານທາງຜູ້ປະກາດພຣະທັມໂຮເຊອາ ຊຶ່ງເຕືອນພວກເຮົາວ່າພຣະເຈົ້າຊົງເປັນຜູ້ຊີ້ຂາດ. ຕາບໃດເກີດມີຄວາມບໍ່ສັດຊື່, ພຣະຜູ້ເປັນເຈົ້າຊົງປະກາດການຕັດສິນລົງໂທດ.

ທ່ານໄດ້ຕັ້ງອົກຕັ້ງໃຈຕໍ່ຫລັກຄຳສອນຂອງພຣະເຈົ້າຫລືບໍ່? ທ່ານຮູ້ສຶກວ່າທ່ານນອກໃຈພຣະເຈົ້າແລະຕ້ອງການຈະກັບຕົວກັບໃຈແລະຊອກສແວງຫາພຣະເຈົ້າຫລືບໍ່? ຈົ່ງຈຳໄວ້ສເມີວ່າ ທ່ານເອງເປັນຜູ້ເລົ່າເຣື່ອງຊີວິດຂອງທ່ານເອງ, ພຣະເຈົ້າຊົງເປັນຜູ້ຊີ້ຂາດ. ພຣະເຈົ້າຊົງທຳງານຢູ່ທ່າມກາງບັນຫາໃນຄອບຄົວ.

## <u>ຄຳຖາມ</u>

1. ໃຫ້ບັນລະຍາຍເປັນຂໍ້ໆເຖິງຄວາມຮູ້ສຶກຂອງທ່ານເມື່ອຜູ້ໃດຜູ້ນຶ່ງນອກໃຈທ່ານ. ແຕ່ລະຂໍ້ຄວາມທີ່ທ່ານໄດ້ບັນລະຍາຍມານັ້ນຈະຊ່ອຍໃຫ້ທ່ານເຂົ້າໃຈຄວາມຮູ້ສຶກຂອງພຣະເຈົ້າມີຕໍ່ໄພ່ພົນທີ່ບໍ່ມີຄວາມສັດຊື່ຕໍ່ພຣະອົງຢ່າງໃດ?

2. ເປັນຫຍັງຄວາມຈະເຣີນຮຸ່ງເຮືອງເບິ່ງເຫມືອນກັບວ່າຈະນຳໄປສູ່ການຂາດຄວາມຮັບຜິດຊອບ ທ່ານຄິດວ່າຢ່າງໃດ ?

3. ທ່ານຈະຊ່ອຍໃຫ້ຄົນອື່ນເຂົ້າໃຈເຖິງຄວາມຊອບທັມຂອງພຣະເຈົ້າໂດຍທາງຄວາມຮັກແລະໃຫ້ເຫດແລະຜົນໄດ້ຢ່າງໃດ?

4. ທ່ານຈະໃຊ້ຄຳໃດມາບັນລະຍາຍລະຫວ່າງອາໂມດແລະໂຮເຊອາ ຜູ້ປະກາດພຣະທັມສອງຄົນນີ້? ທ່ານມັກທ່າທີຂອງຜູ້ໃດ ອາໂມດ ຫລື ໂຮເຊອາ ເພາະດ້ວຍເຫດໃດ?

5. ມີທາງໃດແດ່ທີ່ຄຣິສຕຽນລາວ ແລະອະເມຣິກາໄດ້ພະຍາຍາມນະມັສການທັງພຣະຜູ້ເປັນເຈົ້າແລະພຣະອື່ນໆອີກດ້ວຍ? ມີພຣະອົງໃດແດ່ທີ່ມາແຂ່ງກັບພຣະຜູ້ເປັນເຈົ້າເພື່ອມາຍາດເອົາຄວາມສັດທາຂອງໄພ່ພົນຂອງພຣະອົງ?

6. ທ່ານເຊື່ອວ່າຢ່າງໃດ ພຣະຜູ້ເປັນເຈົ້າຈະບໍ່ສົງສານຄຣິສຕະຈັກນັ້ນອີກຕໍ່ໄປຍ້ອນຄວາມບໍ່ສັດຊື່, ຫລືວ່າເຣື່ອງນີ້ຈະໄປຂັດກັບການຊົງປາກົດຂອງພຣະຜູ້ເປັນເຈົ້າທີ່ພວກເຮົາໄດ້ຮັບໃນອົງພຣະເຢຊູຄຣິດ?

# ບົດຮຽນທີ 7
# ສ້າງຄວາມສັມພັນຂຶ້ນໃຫມ່

---

**ຂໍ້ພຣະຄັມພີສໍາລັບບົດຮຽນ:** ໂຮເຊອາ 1:10-2:5,14-23; 3:1-5

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ໂຮເຊອາ 1:10-3:5

**ຈຸດສໍາຄັນຂອງບົດຮຽນນີ້:** ພຣະຜູ້ເປັນເຈົ້າຊົງສ້າງຄວາມສັມພັນຂຶ້ນໃຫມ່ກັບຜູ້ທີ່ຫ່າງເຫີນຈາກພຣະອົງ

**ຄໍາຖາມເພື່ອການສໍາຫລວດ:** ພຣະຜູ້ເປັນເຈົ້າຊົງຕອບສນອງຕໍ່ພວກເຮົາຢ່າງໃດໃນເມື່ອພວກເຮົາເຮັດບາບ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອນໍາໄປໃຫ້ເຫັນການພົວພັນລະຫວ່າງພຣະຜູ້ເປັນເຈົ້າແລະຊົນຊາດອິສຣາເອນ ຊຶ່ງໄດ້ສອນພວກເຮົາວ່າພຣະອົງມີພຣະປະສົງສ້າງຄວາມສັມພັນກັບພວກເຮົາ.

## ບົດຮຽນ

### ຄໍານໍາ

ຄວາມບາບບໍ່ພຽງແຕ່ຝ່າຝືນກົດບັນຍັດຂອງພຣະເຈົ້າເທົ່ານັ້ນ; ຄວາມບາບໄດ້ຝ່າຝືນຄວາມສັມພັນຂອງພຣະຜູ້ເປັນເຈົ້າທີ່ຈະສ້າງຂຶ້ນ.

ເຫດການໂສກເສົ້າໄດ້ເກີດຂຶ້ນກັບຊີວິດ ຈໍເຈີ ທຣູເອດ (George Truett) ໃນຂນະລາວໄປລ້າສັດກັບເພື່ອນຂອງລາວ. ໃນເວລາກ່ອນຈະຫມົດມື້ນັ້ນ ປືນຂອງລາວລັກລັ່ນໃສ່ຂາຂອງເພື່ອນລາວ. ບາດແຜເບິ່ງເຫມືອນກັບວ່າບໍ່ສາຫັດປານໃດ. ແຕ່ວ່າຫ້າມື້ຜ່ານມາເພື່ອນຂອງລາວເສັຽຊີວິດໄປ. ໃນເວລານັ້ນ ລາວກໍາລັງຮັບໃຊ້ໃຫມ່ເປັນສິດຍາພິບານຂອງເຟີສແບັບຕິດ ເມືອງດາລັດ.

ລາວອຶກຫັກ. ລາວເຊື່ອວ່າຍ້ອນຄວາມບໍ່ລະມັດລະວັງຂອງລາວເອງເພື່ອນຂອງລາວໄດ້ເສັຽຊີວິດໄປ. ຫລັງຈາກເພື່ອນຄົນນັ້ນຈາກໄປ ລາວຢູ່ກິນບໍ່ໄດ້. ລາວບໍ່ສາມາດນອນເປັນເວລານຶ່ງອາທິດ. ລາວບອກພັລຍາຂອງລາວວ່າ ລາວບໍ່ສາມາດຈະເທສນາຕໍ່ໄປໄດ້ອີກ. ຕໍ່ມາໃນຄືນນຶ່ງລາວນອນຫລັບແລະຝັນໄປວ່າ ພຣະເຢຊູໄດ້ມາປາກົດໃນຄວາມຝັນຂອງລາວດ້ວຍຂໍ້ຄວາມໃຫ້ກໍາລັງໃຈ. ຂ່າວຊ່າລືກັນໄປວ່າ ທຣູເອດຈະເທສນາໃນອາທິດຈະມາເຖິງນີ້. ມີຄົນຜູ້ນຶ່ງທີ່ໄດ້ຟັງລາວເທດ ແລ້ວກ່າວດ້ວຍຂໍ້ຄວາມດັ່ງກ່າວນີ້:

> ຫນ້າຂອງລາວຊູບໂຊມແລະຕາຂອງລາວເສົ້າ. ເມື່ອລາວລຸກຂຶ້ນມາເທສນາ, ລາວຍືນງຽບໄປເປັນເວລາດົນສົມຄວນ. ແມ່ນແຕ່ສຽງຂອງເຂັມທີ່ຕົກລົງໃສ່ພື້ນ ທ່ານກໍສາມາດໄດ້ຍິນ. ເມື່ອລາວເລີ້ມເປ່ງສຽງ, ຮູ້ສຶກວ່າສຽງຂອງລາວນັ້ນຕ່າງກ່ວາເກົ່າ. ສຽງຂອງລາວ! ຂ້າພະເຈົ້າບໍ່ເຄີຍລືມສຽງຂອງລາວໃນເຊົ້າວັນນັ້ນ, ເຫມືອນກັບວ່າເປັນຄັ້ງທໍາອິດສຽງທີ່ລໍາລຽງຄວາມໂສກເສົ້າແລະຫນ້າສົງສານທີ່ຕໍ່ມາໃນຊີວິດຂ້າພະເຈົ້າຮູ້ດີ. ເປັນເຫມືອນກັບວ່າສຽງແບກນໍ້າຫນັກຂອງຄວາມທຸກໂສກທັງຫມົດໃນໂລກນີ້.

ຫລັງຈາກເຫດຮ້າຍໄດ້ເກີດຂຶ້ນ, ທ່ານອາຈານ ຈໍເຈີ ທຣູເອດໄດ້ຮັບໃຊ້ທີ່ເຟີສແບັບຕິດ ເມືອງດາລັດ ສີ່ສິບຫ້າປີ, ຊີວິດຂອງທ່ານປ່ຽນແປງໃນປີ 1898. ປະສົບການຄວາມໂສກເສົ້າແລະຄວາມເສັຽໃຈທີ່ລາວໄດ້ຮັບໄດ້ປ່ຽນຊີວິດແລະຈິດໃຈຂອງລາວ. ສະນັ້ນ ລາວມີຄວາມຮູ້ສຶກຫລາຍທີ່ສຸດກັບຄົນອື່ນ ເມື່ອເຂົາປະເຊີນກັບບັນຫາ, ເຈັບປວດ, ທົນທຸກທໍຣະມານ, ແລະອຶກຫັກ.

**ພຣະເຈົ້າຜູ້ຊົງພຣະຊົນຢູ່ໄດ້ຫັນປ່ຽນຄວາມເປັນໄປໃຫ້ດີຂື້ນ** (1:10-2:1)
ຫລັງຈາກພຣະຜູ້ເປັນເຈົ້າໄດ້ປະກາດຊື່ຂອງອິສຣາເອນ, ໂລຣຸຮາມາ, ແລະໂລອັມມີ ຍ້ອນຄວາມບໍ່ສັດຊື່ຂອງຊົນຊາດອິສຣາເອນ, ພຣະອົງມີພຣະປະສົງສ້າງຄວາມສັມພັນກັບພວກເຂົາຂື້ນໃຫມ່.

ພຣະຜູ້ເປັນເຈົ້າຊົງຫັນປ່ຽນຄວາມເປັນໄປໃຫ້ດີຂື້ນ ນີ້ຄືພຣະລັກສະນະຂອງພຣະອົງ. ເຖິງແມ່ນວ່າຄວາມບໍ່ສັດຊື່ຮ້າຍແຮງປານໃດກໍຕາມ ພຣະຜູ້ເປັນເຈົ້າມີພຣະປະສົງສ້າງຄວາມສັມພັນຂື້ນໃຫມ່ຢູ່ສເມີ.

ຮູບຂອງພຣະບາອານທີ່ຕັ້ງໄວ້ໃຫ້ນະມັສການເປັນພຽງແຕ່ຮູບປັ້ນເທົ່ານັ້ນ, ບໍ່ແມ່ນພຣະເຈົ້າທີ່ຊົງພຣະຊົນຢູ່. ຮູບປັ້ນບໍ່ສາມາດຕັດສິນໃຈຫຍັງເລີຍ, ແຕ່ພຣະຜູ້ເປັນເຈົ້າຊົງມີພຣະທັຍກ້າວໄປຫາລູກທັງຫລາຍທີ່ຫ່າງເຫີນໄປ. ຮູບປັ້ນທີ່ບໍ່ມີຊີວິດບໍ່ມີຄວາມຮູ້ສຶກຄວາມຈົ່ງຮັກພັກດີຂອງຜູ້ນະມັສການ, ແຕ່ພຣະຜູ້ເປັນເຈົ້າຜູ້ຊົງພຣະຊົນຢູ່ສາມາດສ້າງຄວາມສັມພັນທີ່ແຕກດພັງໄປແລ້ວຄືນມາໃຫມ່ໄດ້.

ໃນສມັຍນີ້ ມີຫລາຍຄົນມີຄວາມຈົ່ງຮັກພັກດີຕໍ່ຊັບສົມບັດ, ອາຊີບ, ກິດລະບຽບ, ແລະສິ່ງພວກເຂົາໄຝ່ຝັນ. ເຫດການເຫລົ່ານີ້ມີຢູ່ເລື້ອຍໆ, ເຖິງຢ່າງໃດກໍຕາມ ຄວາມສັມພັນອັນແທ້ຈິງທີ່ຈະເກີດຂື້ນໄດ້ກໍຕໍ່ເມື່ອມີຄວາມສັມພັນກັບພຣະເຈົ້າຜູ້ຊົງພຣະຊົນຢູ່ເທົ່ານັ້ນ. ຄວາມສັມພັນດັ່ງກ່າວຈະຄົງຢູ່ຕລອດໄປເພາະວ່າພຣະອົງຊົງເປັນຜູ້ຍື່ນມືເຂົ້າຫາກ່ອນ. ເມື່ອມີຄວາມສັມພັນກັບພຣະອົງແລ້ວ ທຸກພາກສ່ວນໃນຊີວິດຈະເກີດຄວາມປິຕິຍິນດີ. ພຣະເຈົ້າຜູ້ຊົງພຣະຊົນຢູ່ໄດ້ຫັນປ່ຽນຄວາມເປັນໄປໃຫ້ດີຂື້ນ

**ຄວາມທໍຣະມານນຳໄປສູ່ຫລັກຊັຍ** (2:2-5)
ຜູ້ປະກາດພຣະທັມໂຮເຊອາຍຶດຫມັ້ນໃນຄວາມຫວັງໃນລູກຂອງນາງໂກເມ, ລາວປະກາດວ່າພຣະຜູ້ເປັນເຈົ້າຊົງຍຶດຫມັ້ນໃນຄວາມຫວັງໃນຊົນຊາດອິສຣາເອນ. ລາວປາຖນາຢາກໄດ້ນາງໂກເມຄືນມາ, ແລະພຣະຜູ້ເປັນເຈົ້າມີຄວາມປາຖນາຕ້ອງການໃຫ້ຊົນຊາດອິສຣາເອນກັບຄືນມາຫາພຣະອົງ. ລາວເວົ້າກັບລູກຂອງນາງໂກເມວ່າ, "ລູກເອີຍຈົ່ງຮ້ອງຂໍຕໍ່ແມ່ຂອງເຈົ້າ" (2:2). ຄຳຮ້ອງຂໍຂອງລາວໄດ້ບັນລະຍາຍໃຫ້ເຫັນຄວາມເຈັບປວດໃນໃຈ. ລາວຮ້ອງຂໍໃຫ້ລູກຊ່ອຍເວົ້າກັບແມ່ຂອງພວກເຂົາ. ໂຮເຊອາ ສາມີທີ່ຮັກດົ້ນລົນຢາກໄດ້ນາງກັບໃຈ.

ໃນຂນະໂຮເຊອາປາຖນາຢາກໄດ້ນາງໂກເມຄືນມາ, ແລະພຣະຜູ້ເປັນເຈົ້າປາຖນາຕ້ອງການຊົນຊາດອິສຣາເອນ. ຖ້າຈະສ້າງຄວາມສັມພັນຂື້ນໃຫມ່ກໍຈະຕ້ອງມີເງື່ອນໄຂຕົກລົງກັນ. ຄວາມບໍ່ສັດຊື່ຈະບໍ່ໃຫ້ມີອີກຕໍ່ໄປ. ການຕິດຕາມພຣະອື່ນໆຈະຕ້ອງຢຸດຕິ. ບໍ່ດັ່ງນັ້ນແລ້ວ ຖ້າຄວາມບໍ່ສັດຊື່ຍັງມີຢູ່, ຄວາມອັບອາຍໃນທີ່ສາທາຣະນະຈະເກີດຂື້ນ, ຈະໄດ້ຮັບຄວາມໂດດດ່ຽວ, ແລະຈະບໍ່ສົມຫວັງຫຍັງເລີຍໃນຊີວິດ. ພຣະທັມໂຮເຊອາ 2:6-13 ໄດ້ກ່າວເຖິງພຣະຜູ້ເປັນເຈົ້າຈະທຳການສັ່ງສອນພວກເຂົ້າ ເພື່ອໃຫ້ພວກເຂົາກັບຄືນມາຫາພຣະອົງ.

ການໃຊ້ຊີວິດຢູ່ໃນຄວາມບາບທະວີຂື້ນຢູ່ເລື່ອຍໆ. ຖ້າບໍ່ມີເຫດການດັ່ງກ່າວ, ຄົນທົ່ວໄປກໍຄົງຈະຫລີກລ້ຽງມັນເສັຽແລ້ວ. ແຕ່ວ່າ ການໃຊ້ຊີວິດນອກອອກໄປຈາກນ້ຳພຣະທັຍຂອງພຣະເຈົ້າແລ້ວ ຜົນຕາມມານັ້ນຄື ຊີວິດສັ້ນ ແລະປາສຈາກເປົ້າຫມາຍໃນຊີວິດ, ຊີວິດທີ່ວ່າງເປົ່າ, ແລະຫນ້າສັງເວດ.

ບຸກຄົນທີ່ບໍ່ສັດຊື່ຕໍ່ພຣະເຈົ້າ ພວກເຂົາອາດຈະມີຄວາມທໍຣະມານໃນການຮັບສາຣະພາບແລະກັບປ່ຽນຊີວິດໃຫມ່ຈາກການເຮັດບາບ. ເຖິງຢ່າງໃດກໍຕາມ ພວກເຂົາຈະຕ້ອງຮັບຜິດຊອບສ້າງຄວາມສັມພັນຂື້ນໃຫມ່ກັບພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງປາຖນາສ້າງຄວາມສັມພັນຂື້ນໃຫມ່ຢູ່ສເມີ, ແຕ່ວ່າ ພວກເຂົາຈະຕ້ອງມີຈິດໃຈຖ່ອມລົງແລະມີຈິດວິນຍານທີ່

ອ່ອນນ້ອມ. ບາງທີເສັ້ນທາງໄປສູ່ຫລັກຊັຍນັ້ນໄດ້ຮັບຄວາມທໍຣະມານຫລາຍ, ແຕ່ວ່າ ເມື່ອຊັ່ງຊາເບິ່ງແລ້ວກໍສົມກັບຄຸນຄ່າທີ່ໄດ້ສູ້ທົນໄປນັ້ນ.

## <u>ຕາເປົ່າຫລຽວບໍ່ເຫັນ</u> (2:14-23)

ບາງຄັ້ງຜູ້ທີ່ໃຫ້ອະພັຍຍາກທີ່ສຸດນັ້ນແມ່ນຕົວເຂົາເອງ. ເຣື່ອງລາວຂອງ ຈໍເຈີ ທຣູເອດ (George Truett) ໄດ້ສະແດງໃຫ້ພວກເຮົາເຫັນວ່າ ລາວຈະຕ້ອງປະເຣື່ອງຄວາມຜິດພາດແລະຄວາມເສັຽໃຈໄວ້ເບື້ອງຫລັງ ແລ້ວນ້ອມນອບເຂົ້າຫາພຣະເຈົ້າ ພຣະອົງຊົງວາແຂນອອກຕຽມພ້ອມຢູ່ສເມີ. ລາວຍອມຮັບຄວາມຜິດພາດ. ລາວອະພັຍໃຫ້ຕົວລາວເອງໃນຄວາມຜິດພາດທີ່ຜ່ານມາ. ລາວຈະຕ້ອງກ້າວມາສູ່ຈຸດທີ່ລາວມີຄວາມຮູ້ສຶກເຖິງຄຸນຄ່າຂອງຊີວິດແລະມີປໂຍດອີກຕໍ່ໄປ. ກ່ອນລາວຈະກ້າວມາສູ່ການສ້າງຄວາມສັມພັນຂຶ້ນໃຫມ່ກັບພຣະປະສົງຂອງພຣະເຈົ້າໃນຊີວິດຂອງລາວ, ລາວຈະຕ້ອງພ້ອມເພື່ອຮັບຟັງຄຳຫນູນໃຈຕ່າງໆ.

ເຖິງແມ່ນວ່າກ່ອນການຮູ້ສຶກວ່າພຣະເຈົ້າຊົງທຳການນັ້ນ, ພຣະອົງຊົງເປັນຜູ້ເຂົ້າຫາໄພ່ພົນຂອງພຣະອົງກ່ອນ. ໃນຂນະທີ່ພຣະເຈົ້າຊົງເລີ້ມສ້າງຄວາມສັມພັນຂຶ້ນໃຫມ່ໃນຄວາມສັດຊື່ກັບຊົນຊາດອິສຣາເອນ, ພຣະອົງຊົງກ່າວວ່າ, "ດ້ວຍເຫດນີ້ ເຮົາຈະເກັ້ຽກ່ອມນາງດ້ວຍຄຳອ່ອນຫວານ" (2:14). ເພື່ອຈະສ້າງຄວາມສັມພັນຂຶ້ນໃຫມ່ ພຣະເຈົ້າຊົງເກັ້ຽກ່ອມໄພ່ພົນຂອງພຣະອົງເສັຽກ່ອນ.

ເຖິງແມ່ນວ່າ ໃນຂນະທີ່ຈະຊັດເຊພະເນຈອນໄປຫມົດອາລັຍຍ້ອນຄວາມບາບ, ປະເຊີນກັບບັນຫາ, ຫລືໄດ້ຮັບຄວາມລຳບາກ, ພຣະຜູ້ເປັນເຈົ້າຊົງກະຊິບໃສ່ຫູດ້ວຍຄຳອ່ອນຫວານ ຊຶ່ງປະກອບດ້ວຍຄຳຫນູນນ້ຳໃຈ. ພຣະອົງຊົງຊອກຫາຄຳຕອບສນອງເພື່ອໃຫ້ມີການສ້າງຄວາມສັມພັນຂຶ້ນໃຫມ່ດ້ວຍຄວາມຮັກ.

ຜົນທີ່ຕາມມາ ໃນວັນທີ່ມີການຕັດສິນໃຈຢ່າງເດັດຂາດນັ້ນ, ຜູ້ທີ່ຖືກຮັກຈະສເນີຕໍ່ພຣະເຈົ້າວ່າເປັນ, "ຜົວຂອງນາງ" (2:16). ຜູ້ບໍ່ສັດຊື່ໄດ້ຖືກນຳຄືນມາໃຫ້ເປັນຜູ້ສັດຊື່ໃນຄວາມສັມພັນ (2:17). ຄວາມສັມພັນໃຫມ່ໄດ້ນຳສັນຕິສຸກມາສູ່ບ່ອນເຄີຍມີການຕໍ່ສູ້ກັນ, ນຳຄວາມປອດພັຍມາສູ່ບ່ອນເຄີຍເປັນສັດຕຣູກັນ (2:18). ຄວາມເປັນທັມ, ຄວາມຮັກ, ຄວາມກະຣຸນາ, ແລະຄວາມສັດຊື່ (2:19-23) ເປັນລັກສະນະຂອງຄວາມສັມພັນທີ່ຖືກສ້າງຂຶ້ນໃຫມ່.

ເຖິງແມ່ນວ່າໃນປະຈຸບັນນີ້ ໃນຊີວິດຂອງທ່ານແລະຊີວິດຂອງຜູ້ທີ່ທ່ານຮັກ, ພຣະເຈົ້າຊົງທຳງານຢູ່, ຕາເປົ່າຫລຽວບໍ່ເຫັນ.

## <u>ຄວາມຮັກທີ່ບໍ່ມີການຢຸດຢັ້ງ</u> (3:1-2)

ເມື່ອອ່ານປື້ມພຣະທັມໂຮເຊອາ ຜູ້ອ່ານໄດ້ຮັບການທ້າທາຍ. ພຣະທັມເຫລັ້ມນີ້ບໍ່ໄດ້ລຽບລຽງເຫດການທີ່ເກີດຂຶ້ນຕາມລຳດັບເຫມືອນກັບຜູ້ອ່ານຄາດຫມາຍໄວ້. ໃນລະຫວ່າງບົດທີ 1 ແລະບົດທີ 3 ຜູ້ອ່ານບໍ່ຮູ້ເລີຍວ່າເວລານັ້ນລ່ວງໄປດົນປານໃດ. ໃນພຣະທັມຕອນນີ້ໄດ້ບອກໃຫ້ໂຮເຊອາໄປຕິດຕໍ່ຮັກໄຄ່ກັບນາງໂກເມຕໍ່ໄປ ບໍ່ວ່ານາງເປັນຢ່າງໃດກໍຕາມ. ພຣະຜູ້ເປັນເຈົ້າສັ່ງໃຫ້ລາວໄປໄຖ່ເອົານາງຄືນມາຈາກການເປັນທາດ. ປາກົດໄດ້ຢ່າງແຈ່ມແຈ້ງວ່າ ຫລາຍປີທີ່ນາງເປັນໂສເພນີ, ຄວາມສວຍງາມແລະສເນ່ຂອງນາງຈືດຈາງໄປ. ໃນລະຍະນັ້ນ ນາງອາດຈະຂາຍຕົວນາງເອງໃຫ້ເປັນທາດເພື່ອຄວາມຢູ່ລອດຂອງນາງ. ຈາກພຣະທັມຕອນນີ້ໄດ້ສ່ອນວ່າ ຄວາມຮັກຂອງພຣະຜູ້ເປັນເຈົ້າຈະບໍ່ເຊົາຕິດຕາມຜູ້ທີ່ພຣະອົງຊົງຮັກຈັກເທື່ອ.

ຄວາມຮັກທີ່ເກີດຈາກມະນຸດແລະຄວາມຮັກທີ່ເກີດຈາກພຣະເຈົ້າມີຄວາມແຕກຕ່າງກັນ. ຄວາມຮັກທີ່ເກີດຈາກມະນຸດ

ນັ້ນກໍຕໍ່ເມື່ອຜູ້ທີ່ໄດ້ຮັບຄວາມຮັກຈະຕ້ອງເປັນຕາໜ້າຮັກຫລືວ່າຄົນຜູ້ນັ້ນມີຄຸນຄ່າຕໍ່ຜູ້ທີ່ມາຮັກ. ມະນຸດຖືກສ້າງຂື້ນມາຕາມພຣະລັກສະນະຂອງພຣະເຈົ້າ ສະນັ້ນພວກເຂົາຈະຕ້ອງມີຄວາມຮັກທີ່ສະແດງອອກມາ. ມະນຸດຮັກກັນກໍຕໍ່ເມື່ອຜູ້ທີ່ໄດ້ຮັບຄວາມຮັກສະແດງອອກໃນສິ່ງທີ່ພໍໃຈຂອງຜູ້ທີ່ມາຮັກ. ແຕ່ກົງກັນຂ້າມ ຄວາມຮັກຂອງອົງພຣະຜູ້ເປັນເຈົ້າບໍ່ເປັນຢ່າງນັ້ນ. ພຣະອົງຊົງຮັກຜູ້ທີ່ໜ້າຮັກແລະຜູ້ທີ່ບໍ່ໜ້າຮັກ. ພຣະເຈົ້າຊົງມີຄວາມຮັກຕໍ່ຜູ້ທີ່ມີຄວາມແຕກຕ່າງກັນກັບຄົນອື່ນ, ຜູ້ມີຄວາມສາມາດຈຳກັດ, ຜູ້ທີ່ມີຄວາມຜິດພາດ, ແລະຜູ້ທີ່ມີຄວາມບໍ່ສົມບູນ.

ສຳລັບໂຣເຊອາແລ້ວ ເພື່ອໃຫ້ລາວສະແດງຄວາມຮັກຕໍ່ນາງໂກເມຫລັງຈາກນາງນອກໃຈລາວເປັນເວລາຫລາຍປີ, ນາງສູນເສັຽຄວາມງາມຂອງນາງແລ້ວ ແລະໃນຂະນະນາງເປັນຂ້າທາດຢູ່ນັ້ນ ລາວຕ້ອງການຄວາມຜັກດັນທີ່ແຮງເໜືອກວ່າແຮງຂອງມະນຸດຈຶ່ງຈະເປັນໄປໄດ້. ຕໍ່ມາອີກ ພຣະຄຳຂອງພຣະຜູ້ເປັນເຈົ້າໄດ້ຕັດຕໍ່ລາວ. ລາວເປີດໃຈຮັບເອົາພຣະຄຳນັ້ນ. ເພາະວ່າລາວເປີດໃຈຮັບເອົາພຣະຄຳນັ້ນ ລາວຈຶ່ງສາມາດຮັບເອົານາງໂກເມໄດ້ ລາວເບິ່ງກວມຄວາມບາບຂອງນາງ, ຄວາມຜິດພາດຂອງນາງ, ແລະຄວາມໜ້າກຽດໜ້າຊັງຂອງນາງ. ລາວຈຶ່ງເຫັນວ່ານາງຕ້ອງການຄວາມຮັກ. ຖ້າຫາກວ່າ ລາວບໍ່ຖືກຜັກດັນຈາກຄວາມຮັກທີ່ມາຈາກພຣະເຈົ້າແລ້ວ ລາວຈະບໍ່ສາມາດສລະເພື່ອນາງໄດ້ເລີຍ.

ພຣະທັມໂຮເຊອາບົດທີ 3 ເປັນພາບພົດໃຫ້ເຫັນເຖິງການຊົງໄຖ່. ເພື່ອໃຫ້ເຂົ້າໃຈວ່າ ພຣະຜູ້ເປັນເຈົ້າຊົງໄຖ່ເອົາຜູ້ທີ່ເຄີຍເປັນຂອງພຣະອົງດ້ວຍຣາຄາສູງ. ໃນພຣະທັມຕອນນີ້ ຄຣິສຕຽນສາມາດເຫັນໄດ້ທັນທີລະຫວ່າງໂຮເຊອາແລະພຣະເຢຊູ, ຜູ້ຊົງເປັນພຣະຄຣິດ. ແນວທາງຂອງການຊົງທົນທຸກທໍຣະມານສະແດງໃຫ້ເຫັນໃນບົດນີ້. ພຣະຄຸນທີ່ໄດ້ລິເລີ້ມໃຫ້ເຫັນຢ່າງແຈ່ມແຈ້ງ. ຄວາມຮັກທີ່ເປັນຣາຄາສູງໄດ້ເຮັດໃຫ້ເຫັນ. ການໄຖ່ໂທດຂອງຄວາມບາບເປັນຫລັກຖານ. ໃນພຣະທັມອັນສັ້ນໆນີ້ໄດ້ທອນຄວາມຈຳໃຫ້ນຶກເຖິງຂໍ້ຄວາມຂອງອັຄສາວົກໂປໂລໃນພຣະທັມໂຣມ, "ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂະນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ" (ໂຣມ 5:8).

ເປັນຫຍັງນາງໂກເມຈຶ່ງຖືກໄຖ່ຄືນມາ? ມີຈຸດປະສົງອັນໃດສຳລັບຊີວິດຂອງລາວ? ລາວຖືກໄຖ່ອອກມາຈາກການເປັນທາດເພື່ອໃຫ້ມີຄວາມສັມພັນ, ແຕ່ເປັນຫຍັງ?

## <u>ໄດ້ຮັບຄວາມພົ້ນຈາກ, ໄປສູ່, ແລະເພື່ອ</u> (3:3-5)

ມີຄຣິສຕຽນຫລາຍຄົນບໍ່ເຄີຍເຂົ້າໃຈເລີຍວ່າ ເປັນຫຍັງພວກເຂົາຈຶ່ງຖືກໄຖ່ຈາກຄວາມບາບ ນຳມາສູ່ຄວາມສັມພັນກັບພຣະເຈົ້າຜ່ານທາງພຣະເຢຊູຄຣິດ. ບາງຄົນເຊື່ອຜິດໄປວ່າ ພວກເຂົາຖືກໄຖ່ໃຫ້ມາເປັນສະມາຊິກທີ່ດີຂອງຄຣິສຕະຈັກ-ຖວາຍສິບລົດ, ເຂົາເປັນສະມາຊິກເພື່ອຈະຊ່ອຍນຳພາລູກຫລານໃຫ້ເປັນສະມາຊິກທີ່ດີຂອງຄຣິສຕະຈັກ, ແລະອື່ນໆ. ບາງຄົນເຊື່ອຜິດໄປອີກວ່າ ພວກເຂົາຖືກໄຖ່ເພື່ອມີເປົ້າໝາຍໃຫ້ໄດ້ຮັບຫລັກຄຳສອນທີ່ຖືກຕ້ອງ ຫລືວ່າ ໄດ້ຮັບພາບພົດຂອງຫລັກສາສນາສາດ-ເວົ້າຈາຖືກຕ້ອງ, ຈົງຮັກພັກດີຕໍ່ເອກສານອັນຖືກຕ້ອງ, ແລະອື່ນໆ. ຍັງມີບາງຄົນເຊື່ອຜິດໄປວ່າ ພວກເຂົາຖືກໄຖ່ເພື່ອມີເປົ້າໝາຍໃຫ້ໄປຖົກຖຽງເຣື່ອງຂອງສັງຄົມ, ປົກປ້ອງຄວາມເປັນທັມໃນເຣື່ອງຂອງການເມືອງຕ່າງໆ, ແລະອື່ນໆ.

ຄຣິສຕຽນແຕ່ລະຄົນມີເປົ້າໝາຍອັນດີໄປກວ່ານັ້ນອີກ. ຄຣິສຕຽນແຕ່ລະຄົນຈະຕ້ອງທຳກິຈການທີ່ມອບໝາຍໃຫ້ກັບພຣະເຈົ້າທີ່ສືບເນື່ອງໃນພາຣະກິດຂອງພຣະເຢຊູຄຣິດ. ທ່ານໄດ້ຖືກໄຖ່<u>ຈາກ</u>ຄວາມບາບ <u>ນຳ</u>ມາສູ່ຄວາມສັມພັນກັບພຣະເຈົ້າຜ່ານທາງພຣະເຢຊູຄຣິດ<u>ເພື່ອ</u>ພາຣະກິດການຮັບໃຊ້ຜ່ານທາງກິຈການທີ່ມອບໝາຍໃຫ້ຂອງພຣະເຈົ້າໃນຊີວິດປະຈຳວັນຂອງທ່ານ.

ຊົນຊາດອິສຣາເອນຈະຕ້ອງມີການປ່ຽນແປງໃນການໃຊ້ຊີວິດຂອງພວກເຂົາ ເຫມືອນກັບນາງໂກເມຈະຕ້ອງມີການປ່ຽນແປງໃນການໃຊ້ຊີວິດຂອງນາງ (3:3). ຊົນຊາດອິສຣາເອນຈະຢູ່ຢ່າງບໍ່ມີກະສັດຫລືຜູ້ນໍາໃນເວລາເຫີງນານ ແລະບໍ່ມີເຄື່ອງເຜົາບູຊາຫລືຫີນສັກສິດ ບໍ່ມີຮູບໂຄຣົບຫລືຮູບບູຊາເຣື່ອງອະນາຄົດ (3:4). ເຄື່ອງເຜົາບູຊາແມ່ນພິທີການຂອງນະມັສການ. ຫີນສັກສິດຕັ້ງຢູ່ບ່ອນນະມັສການເປັນສັນຍາລັກຂອງການຊົງມາປາກົດຂອງພຣະເຈົ້າຢູ່ທີ່ນັ້ນ. ເຣື່ອງຂອງຮູບໂຄຣົບ (Teraphim) ຫລືຮູບບູຊາເຣື່ອງອານາຄົດ (Ephod) ເປັນການເຊື່ອຖືຂອງສ່ວນບຸກຄົນຝ່າຍຈິດວິນຍານຊຶ່ງເປັນການເຊື່ອຖືແບບງົມງາຍ (Superstition). ຮູບໂຄຣົບແມ່ນການນະມັສການຮູບປູ່ຍ່າຕາຍາຍ. ຮູບບູຊາເຣື່ອງອະນາຄົດແມ່ນໃຊ້ຖາມພຣະຫລືເຈົ້າເຖິງເຣື່ອງວັນຫລືຍາມຂອງອະນາຄົດ. ຊົນຊາດອິສຣາເອນຈະຕ້ອງມີການປ່ຽນແປງໃນການໃຊ້ຊີວິດຂອງພວກເຂົາ.

ຖ້າຫາກວ່າ ຄວາມສັມພັນລະຫວ່າງຄົນນັ້ນແລະພຣະເຈົ້າມີການສ້າງຂຶ້ນໃຫມ່, ຊີວິດຂອງຄົນນັ້ນຈະຕ້ອງມີການປ່ຽນແປງໃຫມ່. ພວກເຮົາບໍ່ສາມາດຈະໃຊ້ຊີວິດເຫມືອນດັ່ງກັບຄົນທີ່ບໍ່ມີການປ່ຽນແປງ ໃນຂນະທີ່ພວກເຮົາຕິດຕາມພຣະເຈົ້າຜູ້ຊົງໄຖ່ພວກເຮົາອອກຈາກການເປັນຂ້າທາດຂອງຄວາມບາບດ້ວຍຣາຄາອັນແພງ. ພວກເຮົາຈະຕ້ອງມີຄວາມຕັ້ງໃຈແລະຟັງພຣະຄໍາຂອງພຣະອົງ. ພວກເຮົາຈະຕ້ອງຊອກສແວງໃຫ້ຮູ້ແລະຕິດຕາມພຣະປະສົງຂອງພຣະອົງ.

ພວກເຮົາໄດ້ຮັບຄວາມພົ້ນ, ຖືກຊື້ດ້ວຍຣາຄາອັນແພງ, ເປົ້າຫມາຍກໍເພື່ອໃຫ້ເຂົ້າມາມີພາກສ່ວນກັບພຣະເຈົ້າໃນພາຣະທີ່ມອບຫມາຍໃຫ້. ການສ້າງຄວາມສັມພັນຂຶ້ນໃຫມ່ກັບພຣະເຈົ້າໄດ້ຊົງຮຽກຮ້ອງໃຫ້ພວກເຮົາຕັ້ງຄວາມຄິດໃຫມ່ ແລະປ່ຽນທິດທາງຂອງຊີວິດພວກເຮົາ.

<u>ຄໍາຖາມ</u>

1. ເຫດໃດຊີວິດທີ່ຜ່ານຜ່າຄວາມເຈັບປວດຍ້ອນວ່າ ເກີດຈາກອຸປະຕິເຫດຫລືຍ້ອນການບໍ່ເຊື່ອຟັງຈຶ່ງເຮັດໃຫ້ຄົນນັ້ນມີຄວາມຮູ້ສຶກເຖິງຄວາມເຈັບປວດຫລືຄວາມຕ້ອງການຂອງຄົນອື່ນ?

2. ພຣະເຈົ້າຜັນປ່ຽນຄວາມເປັນໄປຂອງຊີວິດທ່ານໃຫ້ດີຂຶ້ນຢ່າງໃດ? ທ່ານຮູ້ໄດ້ຢ່າງໃດວ່າ ແມ່ນພຣະເຈົ້າ ແລະບໍ່ແມ່ນຍ້ອນເປັນໄປຕາມກາລະເວລາຂອງມັນ?

3. ຖ້າຫາກວ່າ ຊີວິດທີ່ມີຄວາມສັດຊື່ຕໍ່ພຣະເຈົ້ານັ້ນມັນງ່າຍກວ່າແລະຕື່ນເຕັ້ນກວ່າຕາມຄວາມຮູ້ສຶກຂອງມະນຸດນັ້ນຈະເປັນຢ່າງໃດ?

4. ທ່ານຄິດວ່າມີເຫດຜົນອັນໃດບໍ່ ທີ່ຈະຊອກສແວງເພື່ອສ້າງຄວາມສັມພັນຂຶ້ນໃຫມ່ນີ້ບໍ່ກຸ້ມຄ່າເລີຍ?

5. ມີໂອກາດໃດບໍ່ ທີ່ຜ່ານມານັ້ນເມື່ອທ່ານຮູ້ສຶກວ່າ ພຣະເຈົ້າຊົງຢູ່ບ່ອນຕາເປົ່າຫລຽວບໍ່ເຫັນ ພຣະອົງຊົງທໍາພາຣະກິດເພື່ອທ່ານ ຫລືຜູ້ທີ່ທ່ານຮັກ ແລະພຣະອົງຊົງຊຸບລ້ຽງທ່ານ ຫລືຜູ້ທີ່ທ່ານຮັກໃຫ້ກັບຄືນມາມີຄວາມສັດຊື່ທາງຈິດວິນຍານຂອງຄວາມສັມພັນ.

6. ຄວາມຮັກທີ່ເກີດຈາກຄວາມຮູ້ສຶກຂອງມະນຸດແລະຄວາມຮັກທີ່ເກີດຈາກພຣະເຈົ້າມີຄວາມກົງກັນຂ້າມຢ່າງໃດ ແລະສົມທຽບກັນເບິ່ງ? (ໃຫ້ອ່ານ1 ໂກຣິນໂທ 13 ເພື່ອຈະຊ່ອຍໃຫ້ເຫັນ)

# ບົດຮຽນບົດທີ 8
# ພຣະເຈົ້າຊົງກ່າວໂທດຊາວອິສຣາເອັນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຮເຊອາ 4:1-12; 8:1-10, 14

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ໂຮເຊອາ 4-8

**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມເຊື່ອຖືແລະປະເພນີທາງສາສນາສາມາດປ່ຽນແປງສັງຄົມ ຫລືນໍາສັງຄົມໄປສູ່ຄວາມຊົ່ວຊ້າໄດ້.

**ຄໍາຖາມເພື່ອການສໍາຣວດ:** ພວກເຮົາຈະສະແດງຄວາມສັດຊື່ຕໍ່ພຣະເຈົ້າໄດ້ວິທີໃດໃນສມັຍນີ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອເບິ່ງຄວາມຄ້າຍຄືກັນລະຫວ່າງປະເພນີຂອງພວກເຮົາ ແລະຄໍາກ່າວໂທດທີ່ພຣະເຈົ້າຊົງມີຕໍ່ຊາວອິສຣາເອັນ ແລະເພື່ອຈະໄດ້ຮູ້ວິທີແກ້ໃຂ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສໍາຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄໍານໍາ

ຄໍາກ່າວໂທດຂອງພຣະເຈົ້າໃນສມັຍຂອງຜູ້ປະກາດພຣະທັມໂຮເຊອາອາດຈະກົງກັບສະພາບຂອງຄຣິສຕະຈັກໃນສມັຍນີ້. ເນື່ອງຈາກວ່າຄວາມເຊື່ອຖືແລະປະເພນີທາງສາສນາສາມາດປ່ຽນແປງສັງຄົມ ຫລືສາມາດນໍາສັງຄົມໄປສູ່ຄວາມຊົ່ວຊ້າໄດ້, ພວກເຮົາຈະເຮັດແນວໃດກ່ຽວກັບສະພາບການໃນປັດຈຸບັນ?

ພຣະຜູ້ເປັນເຈົ້າຜູ້ຊົງຢູ່ເທິງບັນລັງກໍາລັງຈີ້ໜ້າພວກເຮົາພ້ອມດ້ວຍຊົງກ່າວໂທດວ່າ:

> ຄວາມສັດຊື່ຫລືຄວາມຮັກບໍ່ມີຢູ່ໃນແດນນີ້...ເຂົາຂີ້ຄ້ານ, ເປັນຄາດຕະກອນ, ຂີ້ລັກ, ແລະຫລິ້ນຊູ້ສູ່ຜົວເມັຽຄົນອື່ນ. ອາຊຍາກັມເພີ້ມຂຶ້ນແລະການຂ້າຟັນກັນກໍມີຢູ່ຄູ່ມື້ຄູ່ວັນ. ສະນັ້ນດິນແດນຈະແຫ້ງແລ້ງ ທຸກສິ່ງທີ່ມີຊີວິດຢູ່ໃນນັ້ນຈະຕາຍໄປໝົດ. ສັດແລະນົກທັງປວງແມ່ນແຕ່ປາກໍຈະຕາຍ...ປະຊາຊົນຂອງເຮົາຖືກທໍາລາຍ ເພາະຂາດຄວາມຮູ້...ເພາະເຈົ້າຫລົງລືມພຣະບັນຍັດແຫ່ງພຣະເຈົ້າຂອງພວກເຈົ້າ ເຮົາກໍຈະລືມພົງພັນຂອງເຈົ້າເຊັ່ນກັນ (ໂຮເຊອາ 4: 1, 3, 6).

## ຄະດີຂອງຊົນຊາດອິສຣາເອັນ (4:1-12)

ຄະດີຂໍ້ທີນຶ່ງ: ເຈົ້າບໍ່ຮູ້ເຮົາ. ພຣະເຈົ້າຊົງຈົ່ມວ່າ, ພວກເຈົ້າບໍ່ສະແດງຄວາມສັດຊື່ຕໍ່ເຮົາ, ພວກເຈົ້າບໍ່ສະແດງຄວາມຈົງຮັກພັກດີຕໍ່ເຮົາ ເພາະເຮົາເປັນເຣື່ອງບໍ່ຈິງສໍາລັບເຈົ້າ (4:1).

ໄພ່ພົນຂອງພຣະເຈົ້າພາກັນວຸ້ນວາຍກັບຊີວິດປະຈຳວັນຈົນລືມຄວາມສຳພັນກັບພຣະອົງ. ພວກເຂົາເຊື່ອວ່າພຣະເຈົ້າມີຈິງ, ເໝືອນກັບຜີມານທີ່ເຊື່ອວ່າມີພຣະເຈົ້າ. ພວກເຂົາເຮັດພິທີທາງສາສນາ ແລະນັບຖືຫລັກການຕ່າງໆ ແຕ່ພວກເຂົາບໍ່ໄດ້ມີຄວາມສັມພັນແບບໃກ້ຊິດກັບພຣະເຈົ້າ. ຂໍ້ຄິດ: ທ່ານຄິດວ່າຈະເປັນໄປໄດ້ບໍ່ ທີ່ຄຣິສຕະຈັກໃນສມັຍນີ້ເຕັມໄປດ້ວຍຂ່າວສານທາງສາສນາ ແຕ່ພວກເຮົາອາດຈະຂາດປະສົບການສ່ວນຕົວກັບພຣະເຈົ້າ? ການເວົ້າເຣື່ອງສາສນາ, ການເຮັດພິທີທາງສາສນາ, ແລະການໂຄສະນາເຣື່ອງສາສນາບໍ່ສາມາດຈະທົດແທນການຮູ້ຈັກພຣະເຈົ້າເປັນທາງສ່ວນຕົວ.

ຄະດີຂໍ້ທີສອງ: ອາຊະຍາກັມມີເພີ້ມຂຶ້ນ. ພຣະເຈົ້າຊົງຈົ່ມວ່າ, ພວກເຈົ້າບໍ່ໄດ້ນັບຖືພຣະສັນຍາແລະຄຳສັ່ງສອນ, ແມ່ນແຕ່ເຣື່ອງຄຸນງາມຄວາມດີເລັກນ້ອຍ ຈົນເຖິງເຣື່ອງອາຊະຍາກັມ (4:2).

ສາສນາແລະວັທນະທັມຂອງຊົນຊາດອິສຣາເອັນມີຄວາມກ່ຽວພັນກັນຢ່າງແໜ້ນແຟ້ນ, ເວລາໃດປະຊາຊົນພາກັນເຫີນຫ່າງຈາກຄວາມເຊື່ອ ສັງຄົມກໍຄ່ອຍຊຸດໂຊມໄປຕາມໆກັນ. ໄພ່ພົນຂອງພຣະເຈົ້າພາກັນເມີນເສີຍ ແລະລະເມີດພຣະບັນຍັດຂອງພຣະເຈົ້າທຸກໆຂໍ້. ພວກເຂົາສອນເຣື່ອງພຣະບັນຍັດແລະພຣະສັນຍາໃນວິຫານ ແຕ່ພວກເຂົາບໍ່ໄດ້ປະຕິບັດຕາມໃນຊີວິດປະຈຳວັນຂອງຕົນ. ພວກເຂົາຂີ້ຕົວະ, ຂີ້ລັກ, ແລະຫລິ້ນຊູ້ສູ່ຜົວເມັຽຄົນອື່ນ ເພາະສນັ້ນສັງຄົມຈຶ່ງຊຸດໂຊມລົງ.

ຄະດີຂໍ້ທີສາມ: ພວກເຈົ້າທຳລາຍສິ່ງທີ່ເຮົາໄດ້ສ້າງໄວ້. ພຣະເຈົ້າຊົງຈົ່ມວ່າ, ຂີ້ດິນຮ້ອງໄຫ້ກັບເຮົາວ່າທຸກຢ່າງທີ່ມີຊີວິດໄດ້ຮັບຄວາມລຳບາກ; ສັດ, ນົກ, ແລະປາກໍກຳລັງຈະຕາຍ (4:3).

ຊົນຊາອິສຣາເອັນລືມຄວາມສຳພັນລະຫວ່າງພວກເຂົາແລະດິນແດນທີ່ເຂົາອາສັຍຢູ່. ຄວາມຜິດບາບຂອງພວກເຂົານຳຄວາມຈິບຫາຍໄປເຖິງທຸກຢ່າງທີ່ພຣະເຈົ້າໄດ້ສ້າງໄວ້ ເຊິ່ງໝາຍເຖິງດິນດອນຕ່ອນຫຍ້າທຸກຢ່າງ. ຄວາມບໍ່ຮັບຜິດຊອບ ແລະຄວາມບໍ່ສັດຊື່ຂອງພວກເຂົາມີຜົນສະທ້ອນໄປເຖິງສັດ, ນົກ, ແລະປາ. ຄຣິສຕະຈັກໃນສມັຍນີ້ກໍບໍ່ໄດ້ເອົາໃຈໃສ່ສັ່ງສອນເຣື່ອງການຮັກສາບົວຣະບັດທັມມະຊາດ. ຄຣິສຕຽນຫລາຍຄົນຍັງໄດ້ລະເມີດກົດໝາຍຕ່າງໆທີ່ມີຢູ່ ເພື່ອປົກປັກຮັກສາທັມມະຊາດ.

ຄະດີຂໍ້ທີສີ່: ພວກເຈົ້າຖືວ່າຄວາມຈິງຂອງເຮົາເປັນຂອງຫລິ້ນ. ພຣະເຈົ້າຊົງຈົ່ມວ່າ, ຜູ້ທີ່ເປັນຜູ້ນຳໄພ່ພົນຂອງເຮົາ ແລະຜູ້ທີ່ຕິດຕາມໄພ່ພົນຂອງເຮົາລ້ວນແຕ່ມີຄວາມຜິດເພາະຄວາມບໍ່ສັດຊື່ ແລະການແກ້ງເຮັດ.

ພວກປະໂລຫິດພາກັນສໍ້ໂກງ. ຄວາມຈິງຂອງພຣະເຈົ້າບໍ່ໄດ້ຢູ່ນຳພວກເຂົາ. ພວກເຂົາປະສົບກັບຄວາມຜິດພາດ ເພາະເຂົາບໍ່ຍອມໃຫ້ແສງສວ່າງຂອງພຣະເຈົ້ານຳທາງ. ຜູ້ທີ່ຕິດຕາມພວກເຂົາກໍບໍ່ຜິດຫຍັງກັບຄົນຕາບອດທີ່ເດີນຕາມຄົນຕາບອດ. ໄພ່ພົນຂອງພຣະເຈົ້າບໍ່ສາມາດແຈກແຍກລະຫວ່າງຄວາມສັດຊື່ແລະການນະມັສການພຣະເຈົ້າ ກັບການໄຫວ້ພຣະທຽມແລະການເຊື່ອໂຊກລາງ. ຜູ້ນຳຄຣິສຕະຈັກໃນສມັຍນີ້ຈະຕ້ອງຮັບຜິດຊອບໃນຄວາມຊື່ສັດ, ຄວາມຖ່ອມຕົວ, ຄວາມອ່ອນແອ, ຄວາມແທ້ຈິງ, ແລະຄວາມໝັ້ນຄົງຂອງຕົນ ໃນການເປັນຜູ້ຮັບໃຊ້. ແຕ່ 4:13 ເຖິງ 7:16, ຜູ້ປະກາດພຣະທັມໂຮເຊອາຍັງໄດ້ປະກາດລົງໂທດປະຊາຊົນອິສຣາເອັນແລະພວກຜູ້ນຳຂອງ ພວກເຂົາອີກຫລາຍໆຢ່າງ.

## ນົກອິນຊີ ບັ້ງເທິງປີກແຮ້ງ (8:1-10, 14)

ຜູ້ປະກາດພຣະທັມໂຮເຊອາໄດ້ສັ່ງໃຫ້ຄົນເປົ່າແກສິ່ງສັນຍານເຕືອນພັຍ ເພາະຊົນຊາດອິສຣາເອັນບໍ່ໄດ້ຢູ່ເທິງປີກນົກອິນຊີ (ອຊຍ 40:31); ໂຕແຮ້ງກຳລັງບິນຢູ່ເທິງຊົນຊາດອິສຣາເອັນ. ໂຕແຮ້ງໝາຍເຖິງຄວາມພິນາດທີ່ກຳລັງຈະມາເຖິງ ເພາະອິສຣາເອັນໄດ້ລະເມີດຄຳໝັ້ນສັນຍາ (8:1). ໄພ່ພົນຂອງພຣະເຈົ້າບອກວ່າພວກເຂົາຮູ້ຈັກພຣະອົງ ແຕ່ການປະພຶດຂອງພວກເຂົາບໍ່ໄດ້ກົງກັບຄຳເວົ້າ (8:2-3). ອິສຣາເອັນຕັດສິນໃຈເຣື່ອງຕ່າງໆໂດຍບໍ່ໄດ້ປຶກສາກັບພຣະເຈົ້າ.

ພຣະອົງຈຶ່ງໄດ້ປະຕິເສດແນວທາງຂອງພວກເຂົາ (8:4). ພຣະເຈົ້າກຽດຊັງຮູບໂຄຣົບທີ່ພວກເຂົາຂາບໄຫວ້. ງົວຄຳທີ່ອິສຣາເອັນໄດ້ສ້າງຂຶ້ນເຮັດໃຫ້ພຣະເຈົ້າຊົງພຣະພິໂຣດ (8:5-6). ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເມື່ອພວກເຂົາຫວ່ານລົມ ເຂົາກໍຈະເກັບກ່ຽວລົມພະຍຸ, ຕົ້ນເຂົ້າບໍ່ມີຮວງ ຈະບໍ່ເກີດເຂົ້າສຳລັບເຮັດແປ້ງ..." (8:7). ຊົນຊາດອິສຣາເອັນຈະຖືກກືນກິນຈົນໝົດກ້ຽງ ແລະພວກເຂົາຈະບໍ່ເປັນປະໂຍດຫຍັງເໝືອນດັ່ງໄຫແຕກ. ພວກເຂົາຈະເລາະໄປເລາະມາຢ່າງໂດດດ່ຽວ ເໝືອນກັບລໍປ່າ (8:8-9). "ອິສຣາເອັນໄດ້ຫລົງລືມພຣະຜູ້ສ້າງຂອງພວກເຂົາ," ພວກເຂົາໄດ້ໃຊ້ຊັບສິນບັດເພື່ອສ້າງວັງໄວ້ຫລາຍໆແຫ່ງ. ປະຊາຊົນຢູດາໄດ້ສ້າງເມືອງທີ່ມີປ້ອມປ້ອງກັນຕົວເອງ ແຕ່ສິ່ງເຫລົ່ານີ້ຈະບໍ່ສາມາດປ້ອງກັນພວກເຂົາເລີຍ (8:10, 14).

## <u>ຄຳສອນສຳລັບຄົນໃນສມັຍນີ້:</u>

ບໍ່ມີຜູ້ໃດໃນພວກເຮົາທີ່ຈະບໍ່ຢ້ານເວລາໄດ້ຮັບໃບສັ່ງຈັບຈາກຂຸນສານ; ໃນບົດຮຽນນີ້, ພຣະຜູ້ເປັນເຈົ້າຊົງກ່າວໂທດກັບຊົນຊາດອິສຣາເອັນ. ອິສຣາເອັນມີຄວາມຜິດແທ້ຈິງ ແລະຈະຖືກໂທດໜັກ. ພຣະເຈົ້າມີຂໍ້ຫາແລະຂໍ້ມູນພຽງພໍທຸກຢ່າງເພື່ອຈະພິພາກສາພວກເຂົາ. ສຳລັບທ່ານເອງ ທ່ານມີຫຍັງຜິດບໍ່? ທ່ານຮູ້ຈັກພຣະເຈົ້າແລະມີຄວາມສຳພັນທາງສ່ວນຕົວກັບພຣະອົງບໍ່? ທ່ານໄດ້ຕັ້ງໃຈເຊື່ອຟັງຄຳສັ່ງສອນຂອງພຣະອົງ ແລະໄດ້ເຮັດຕາມພຣະປະສົງຂອງພຣະເຈົ້າສຳລັບຊີວິດທ່ານບໍ່? ທ່ານໄດ້ຍິນຄວາມຈິງຈາກພຣະເຈົ້າ ແຕ່ກັບຖືວ່າເປັນຂອງເຫລັ້ນບໍ່? ທ່ານໄດ້ເປັນຜູ້ຮັບໃຊ້ທີ່ມີຄວາມຊື່ສັດ, ຄວາມຖ່ອມຕົວ, ຄວາມອ່ອນແອ, ຄວາມແທ້ຈິງ, ແລະຄວາມໝັ້ນຄົງບໍ່?

ຖ້າທ່ານຮູ້ວ່າຕົນເອງໄດ້ເຮັດຜິດແທ້ ຈົ່ງເຮັດຕາມຄຳແນະນຳຕໍ່ໄປນີ້:

ກ. ຍອມຮັບຄວາມຜິດ.
ຂ. ເຊື່ອໃນຄວາມເມດຕາຂອງພຣະເຈົ້າ.
ຄ. ສາຣະພາບຄວາມຜິດບາບທັງໝົດ.
ງ. ຖວາຍຕົວເພື່ອຈະເປັນສາວົກທີ່ແທ້ຈິງ.
ຈ. ມອບຕົວເພື່ອຈະເຮັດຕາມພຣະປະສົງຂອງພຣະເຈົ້າ.
ສ. ຕິດຕາມພຣະເຈົ້າຕາມການເປີດເຜີຍໄວ້ຂອງພຣະເຢຊູ.

## <u>ຄຳຖາມ:</u>

1. ທ່ານໄດ້ເຮັດແນວໃດແດ່ ເພື່ອບໍ່ໃຫ້ພຣະຄັມພີກາຍເປັນພຽງຂ່າວສານ ແຕ່ໃຫ້ເປັນສົມບັດເຣື່ອງຈິດວິນຍານສຳລັບຊີ ວິດຂອງທ່ານແລະໃນຄອບຄົວ? ທ່ານຊ່ວຍແນະນຳຄົນອື່ນໆໃນຄຣິສຕະຈັກໄດ້ບໍ່?

2. ທ່ານກຳລັງເຮັດຫຍັງແດ່ເພື່ອຊ່ວຍພັທນາຄວາມສັມພັນຂອງທ່ານກັບພຣະເຈົ້າໃຫ້ດີຂຶ້ນ?

3. ຈາກຂໍ້ຄວາມຕໍ່ໄປນີ້ ມີຂໍ້ໃດທີ່ຖືກກັບທັສນະຂອງທ່ານ?

   ກ. ຄຣິສຕະຈັກຈະຕ້ອງເນັ້ນເຣື່ອງການຖືກປ່ຽນແປງໂດຍພຣະວິນຍານບໍຣິສຸດຂອງພຣະເຈົ້າ ເພື່ອຄຣິສຕຽນຈະໄດ້ເປັນເກືອແລະແສງສວ່າງສຳລັບປະເທດນີ້.
   ຂ. ຖ້າຢາກແກ້ໄຂບັນຫາໃນປະເທດນີ້ ພວກເຮົາຈະຕ້ອງສ້າງປະເທດນີ້ໃຫ້ເປັນປະເທດຄຣິສຕຽນ ແລະເລືອກຄົນທີ່ເປັນຄຣິສຕຽນໄວ້ສຳລັບຫ້ອງການຕ່າງໆ.

ຄ. ຄຣິສຕຽນຈະຕ້ອງຄວບຄຸມດ້ານການເມືອງ, ການສັງຄົມ, ຕຸລາການ, ແລະການເສດຖະກິດ ເພື່ອຈະນຳປະເທດຊາດຄືນໄປຫາພຣະເຈົ້າ.

ງ. ຄຣິສຕະຈັກໃນສະຫາຣັຖຈະຕ້ອງຢູ່ຢ່າງຖ່ອມຕົວໃນພຣະເຈົ້າ, ໃຊ້ຊີວິດໃນພຣະທັມຄຳສອນ, ສ້າງຕົວໃຫ້ເປັນເໝືອນພຣະເຢຊູຄຣິດ, ເຮັດພັນທະກິດຂອງພຣະເຈົ້າ ຕາມທີ່ພຣະເຢຊູໄດ້ເປີດເຜີຍໄວ້.

4. ຄຣິສຕະຈັກສາມາດເຮັດຫຍັງໄດ້ແດ່ເພື່ອຜູ້ນຳໃນຄຣິສຕະຈັກບໍ່ຊື່ສັດ, ຜູ້ນຳໃຊ້ຄົນເພື່ອປະໂຍດສ່ວນຕົວ, ແລະຜູ້ນຳໃຊ້ສິດອຳນາດສ່ວນຕົວໃນການບໍຣິຫານ?

5. ຈາກຄຳກ່າວຫາຂອງພຣະເຈົ້າໃນບົດຮຽນນີ້ ທ່ານມີຄວາມຫ່ວງໃຍຂໍ້ໃດຫລາຍທີ່ສຸດ?

## ບົດຮຽນທີ 9
## ຄວາມຮັກຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຮເຊອາ 11:1-11
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ໂຮເຊອາ 9:1--11:11
**ຈຸດສໍາຄັນຂອງບົດຮຽນນີ້:** ເຖິງພວກເຂົາຈະເຮັດຄວາມຜິດບາບຕໍ່ພຣະອົງ, ພຣະເຈົ້າກໍບໍ່ໄດ້ປະຖິ້ມໄພ່ພົນຂອງພຣະອົງ ແລະພຣະອົງຕຽມພ້ອມທີ່ຈະສະແດງຄວາມເມດຕາກັບພວກເຂົາ.
**ຄໍາຖາມເພື່ອການສໍາຣວດ:** ເວລາພວກເຮົາເຮັດຄວາມຜິດບາບ, ພຣະເຈົ້າຕ້ອງການຢາກໄດ້ພວກເຮົາຄືນດີບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວ່າພຣະເຈົ້າບໍ່ໄດ້ປະຖິ້ມຊາວອິສຣາເອັນ ເຖິງພວກເຂົາຈະເຮັດບາບຕໍ່ພຣະອົງ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສໍາຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

### ຄໍານໍາ

ພຣະທັມຂອງພຣະເຈົ້າຈາກຜູ້ປະກາດພຣະທັມໂຮເຊອາເຕືອນໃຫ້ພວກເຮົາຮູ້ວ່າຈິດໃຈຂອງພຣະເຈົ້າໄດ້ເຕັມໄປດ້ວຍຄວາມຮັກແລະຄວາມເອັນດູສໍາລັບໄພ່ພົນຂອງພຣະອົງ.

### ຄວາມຜິດບາບຈະຕິດຕາມພວກເຈົ້າ (9:1-10:15)

ຊົນຊາດອິສຣາເອັນພາກັນສເລີມສລອງພິທີທາງສາສນາຕ່າງໆ ແຕ່ພວກເຂົາບໍ່ໄດ້ມີຄວາມຊົມຊື່ນຍິນດີທີ່ແທ້ຈິງ. ທຸກຢ່າງທີ່ພວກເຂົາໄດ້ເຮັດເປັນພຽງແຕ່ພິທີ ເພາະເຂົາເຄີຍເຮັດກັນມາເປັນປະຈໍາ. ຜູ້ປະກາດພຣະທັມໂຮເຊອາໄດ້ເຕືອນຊົນຊາດອິສຣາເອັນວ່າ ການເຮັດພິທີທາງສາສນາຈະບໍ່ຊ່ວຍຢຸດຢັ້ງການລົງໂທດຈາກພຣະເຈົ້າທີ່ກໍາລັງຈະມາເຖິງພວກເຂົາ. ໂທດທີ່ຈະມາເຖິງພວກເຂົາມີດັ່ງນີ້: ການປູກຝັງຈະບໍ່ສໍາເຣັດ (9:2). ການໄຫວ້ພຣະບາອານຈະບໍ່ມີຜົນດີຫຍັງ ແຕ່ຈະນໍາຄວາມພິນາດມາໃຫ້ ເພາະອິສຣາເອັນຈະຖືກກະຈັດກະຈາຍໄປທົ່ວປະເທດເອຢິບ (9:3,6). ພວກເຂົາກໍາລັງຈະໄດ້ເຫັນລູກເຕົ້າຂອງພວກຕົນຖືກຕາມລ້າແລະຖືກຂ້າຖິ້ມ (9:11-14).
ຄວາມສນຸກສຸກສະບາຍຂອງພວກ ເຂົາຈະໝົດສິ້ນໄປ (10:1-2). ກະສັດກໍຈະບໍ່ມີອີກຕໍ່ໄປ (10:3). ພວກເຂົາຈະຂາດຄວາມໄວ້ເນື້ອເຊື່ອໃຈກັນ ແລະການ ຕົກລົງຕ່າງໆກໍຈະບໍ່ມີປໂຍດ (10:4). ໂຮເຊອາໄດ້ຮຽກຮ້ອງຊົນຊາດອິສຣາເອັນໃຫ້ສແວງຫາພຣະຜູ້ເປັນເຈົ້າໂດຍຫວ່ານຄວາມຊອບທັມເພື່ອພວກເຂົາຈະໄດ້ ເກັບກ່ຽວພຣະພອນ (10:12). ຊົນຊາດອິສຣາເອັນເຄີຍປະຕິເສດຄໍາເຕືອນຂອງຜູ້ປະກາດພຣະທັມ ແລະໄດ້ເຄີຍເອີ້ນ ໂຮເຊອາວ່າເປັນຄົນໂງ່ຈ້າ (9:7). ແຕ່ມາບັດນີ້ຄວາມຜິດບາບຂອງອິສຣາເອັນກໍໄດ້ຕິດຕາມພວກເຂົາມາ. ການທໍຣະຍົດຕໍ່ພຣະເຈົ້າຈະນໍາຜົນຮ້າຍມາ

ເຖິງພວກເຮົາສເມີ.

**ຄວາມຊົງຈຳຂອງພໍ່ແມ່ (11:1-4)**

ໂຮເຊອາໄດ້ໃຊ້ຄວາມສຳພັນລະຫວ່າງມະນຸດເພື່ອວາດພາບເຣື່ອງຄວາມສຳພັນລະຫວ່າງອິສຣາເອັນແລະພຣະເຈົ້າ. ຄວາມສຳພັນຂອງອິສຣາເອັນກັບພຣະເຈົ້າໄດ້ຈືດຈາງໄປຈົນພວກເຂົາບໍ່ຮູ້ຈະກັບຄືນມີຄວາມສຳພັນໄດ້ອີກຢ່າງໃດ. ໃນພຣະທັມຕອນນີ້, ໂຮເຊອາໄດ້ວາດພາບພໍ່ຜູ້ທີ່ກຳລັງລໍຖ້າລູກທີ່ຫລົງຫາຍໄປ. ພຣະເຈົ້າຄິດເຖິງຄວາມຮັກຄວາມສຳພັນທີ່ພຣະອົງເຄີຍມີກັບຊົນຊາດອິສຣາເອັນໃນຫລາຍຮ້ອຍປີທີ່ຜ່ານມາ. ພຣະອົງໄດ້ເອີ້ນພວກເຂົາ ແລະພາເຂົາຢ່າງອອກຈາກເອຢິບ (11:1). ພວກເຂົາໄດ້ຕິດຕາມພຣະເຈົ້າ ແລະໄດ້ມີອິສຣະຈາກການເປັນທາດ. ແຕ່ດຽວນີ້ພວກເຂົາໄດ້ໄປສ້າງຄວາມສຳພັນໃໝ່ກັບພະບາອານ ແລະໄດ້ໜີໄປຈາກພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງກ່າວວ່າ "ເຮົາໄດ້ເອີ້ນລາວຫລາຍເທົ່າໃດ ລາວກໍຍິ່ງຫັນໜີຈາກເຮົາໄປຫລາຍເທົ່ານັ້ນ (11:2).

ອິສຣາເອັນໄດ້ລືມຜູ້ທີ່ເຄີຍສັ່ງສອນແລະດູແລພວກເຂົາ. ພຣະເຈົ້າໄດ້ໃຊ້ຄວາມຮັກແລະຄວາມອ່ອນຫວານທຸກຢ່າງເພື່ອຊັກຈູງພວກເຂົາໃຫ້ກັບຄືນມາຫາພຣະອົງອີກ, ແຕ່ເໝືອນວ່າອິສຣາເອັນບໍ່ໄດ້ຍິນ (11:3-4). ຄວາມທຸກທໍຣະມານຂອງພໍ່ແມ່ຄືການເຫັນລູກທັງຫລາຍທີ່ກຳລັງຈະຈິບຫາຍ ແຕ່ເຂົາເຈົ້າບໍ່ຍອມທີ່ຈະກັບມາຫາຄວາມຮັກຂອງພໍ່ແມ່ອີກ. ເໝືອນພໍ່ແມ່ທີ່ຮັກລູກທັງຫລາຍ, ພຣະເຈົ້າຈຶ່ງເຫລືອພຽງແຕ່ຄວາມຊົງຈຳເຣື່ອງຊົນຊາດອິສຣາເອັນ.

**ຄວາມເຫລືອໃຈຂອງພໍ່ແມ່ (11:5-7)**

ຖ້າພີ່ນ້ອງເຄີຍລ້ຽງຊາວໜຸ່ມ ຫລືກຳລັງມີຊາວໜຸ່ມຢູ່ບ້ານ, ພີ່ນ້ອງອາດຈະເຂົ້າໃຈການປ່ຽນແປງອາຣົມໃນພຣະທັມຂໍ້ 11:4-5 ນີ້ດີ. ພວກເຮົາໄດ້ເຫັນຄວາມເຫລືອໃຈຂອງພຣະເຈົ້າເມື່ອຊົນຊາດອິສຣາເອັນບໍ່ຍອມຕອບຮັບການເຊື້ອເຊີນໃຫ້ກັບບ້ານ. ການທຸກທໍຣະມານທີ່ຈະມາເຖິງອິສຣາເອັນບໍ່ໄດ້ແມ່ນການລົງໂທດຂອງພຣະເຈົ້າ ແຕ່ແມ່ນຜົນຂອງການຕັດສິນໃຈຂອງພວກເຂົາ. ເພາະອິສຣາເອັນບໍ່ເຊື່ອຟັງພຣະເຈົ້າ, ພວກເຂົາຈະຖືກກະສັດແຫ່ງອັດຊີເຣັຽມາທຳລາຍປະເທດຊາດ ພ້ອມຈະມາປົກຄອງພວກເຂົາ. (ກະສັດທິກແລກ ປີລະເສີ ທີ 3 ແຫ່ງອັດຊີເຣັຽໄດ້ນຳກອງທັບມາຕີເສິກກັບອິສຣາເອັນ. ອັດຊີເຣັຽໄດ້ທຳລາຍປະຊາຊົນ ແລະຍຶດຄອງປະເທດອິສຣາເອັນທັງໝົດໃນປີ 733 ກ່ອນຄຣິສຕະສັກຣາດ ເນື່ອງຈາກອິສຣາເອັນໄດ້ສ້າງພັນທະມິດກັບ ເອຢິບ ແລະໄດ້ເຊົາເສັຽຊ່ວຍປະຈຳປີໃຫ້ແກ່ອັດຊີເຣັຽໃນສມັຍຂອງກະສັດໂຮເຊຢາ ແຫ່ງອິສຣາເອັນ).

ຊົນຊາດອິສຣາເອັນໄດ້ຮັບຄວາມທຸກທໍຣະມານອີກເທື່ອນຶ່ງເພາະການບໍ່ເຊື່ອຟັງພຣະຜູ້ເປັນເຈົ້າຂອງພວກເຂົາ. ຄວາມດື້ດ້ານຂອງອິສຣາເອັນເຮັດໃຫ້ພຣະເຈົ້າໝົດຄວາມອົດທົນ; ພຣະອົງອະນຸຍາດໃຫ້ຄວາມລຳບາກມາເຖິງພວກເຂົາ. ພຣະບາອານທີ່ພວກເຂົາກາບໄຫວ້ບໍ່ສາມາດຈະຊ່ວຍພວກເຂົາໄດ້.

**ຄວາມຮັກຂອງພຣະເຈົ້າ (11:8-9)**

ເຖິງຊົນຊາດອິສຣາເອັນຈະທໍຣະຍົດຕໍ່ພຣະເຈົ້າຕໍ່ໄປ, ພຣະອົງກໍບໍ່ຊົງປະສົງທີ່ຈະລົງໂທດພວກເຂົາ. ພຣະຜູ້ເປັນເຈົ້າຊົງ ກ່າວວ່າ "ເຮົາຈະທຳລາຍເຈົ້າດັ່ງເຮົາທຳລາຍອັດມາກໍບໍ່ໄດ້ດີ?" ຜູ້ປະກາດພຣະທັມຫລາຍໆຄົນໄດ້ເຕືອນຊົນຊາດອິສ ຣາເອັນ ທັງໄດ້ເອີ້ນໃຫ້ພວກເຂົາກັບຄືນມາຫາພຣະເຈົ້າດ້ວຍການສແດງຫາຄວາມຊອບທັມແລະຄວາມສັດຊື່. ແຕ່ອິສຣາເອັນບໍ່ຍອມເຊື່ອຟັງ ແລະບໍ່ຍອມຖ່ອມຕົວໃຫ້ກັບພຣະອົງ. ຄວາມຮັກຂອງພໍ່ແມ່ຕໍ່ລູກຜູ້ທໍຣະຍົດກໍຍ່ອມມີຂອບເຂດ. ພໍ່ແມ່ຫລາຍຄົນເຄີຍຄິດທີ່ຈະຍອມແພ້ ແລະປະປ່ອຍລູກຜູ້ທໍຣະຍົດຂອງຕົນໃຫ້ໄປຕາມໃຈເຂົາ. ພຣະເຈົ້າກໍຊົງມີຄວາມຮູ້ສຶກເຊັ່ນດຽວກັນສຳລັບອິສຣາເອັນໃນສມັຍນັ້ນ. ພຣະເຈົ້າຊົງອິດເມື່ອຍເພາະຄວາມດື້ດ້ານຂອງອິສຣາເອັນ ແຕ່ຍ້ອນວ່າພຣະເຈົ້າເປັນຄວາມຮັກ ແລະພຣະອົງຊົງສັດຊື່, ພຣະອົງຈຶ່ງບໍ່ຍອມປະຖິ້ມໄພ່ພົນຂອງພຣະອົງ.

ໃນພຣະທັມ 11:9, ພຣະເຈົ້າຊົງສແດງພຣະປະສົງວ່າ:

- "ເຮົາຈະບໍ່ລົງໂທດເຈົ້າຢ່າງຄຽດແຄ້ນໜັກດອກ"
- "ເຮົາຈະບໍ່ທໍາລາຍອິສຣາເອັນຕໍ່ໄປອີກ"
- "ເຮົາຈະມາຫາເຈົ້າແລະອີດູເຈົ້າ"

ທຸກຢ່າງຂ້າງເທິງນີ້ສະແດງໃຫ້ພວກເຮົາເຫັນອີກເທື່ອນຶ່ງວ່າພຣະເຈົ້າເປັນຄວາມຮັກ. ພຣະເຈົ້າບໍ່ແມ່ນພຣະຜູ້ທໍາລາຍ. ຄວາມຮັກຄືທັມມະຊາດທີ່ແທ້ຂອງພຣະເຈົ້າ.

## ການກັບຄືນບ້ານເກົ່າ (11:10-11)

ທ່ານອາດຈະເຄີຍເຫັນແລະເຄີຍໄດ້ຍິນ "ການກັບຄືນບ້ານເກົ່າ" ໃນພາບພະຍົນ, ລະຄອນ, ເພງ, ຫລືວັນນະຄະດີ. ທ່ານເຄີຍໄດ້ເຫັນສາກຫລືພາບພົດຊຶ່ງເຕັມໄປດ້ວຍຄວາມຊົມຊື່ນຍິນດີຂອງແຕ່ລະຄົນເພາະໄດ້ພົບກັນອີກ. ສໍາລັບລູກຜູ້ທໍຣະຍົດ, ຄວາມຮູ້ສຶກເວລາກັບຄືນບ້ານເກົ່າອາດຈະເຕັມໄປດ້ວຍຄວາມສົງສັຍແລະຄວາມກັງວົນໃຈ. ຄວາມຈິງແລ້ວ, ພວກເຮົາທັງຫລາຍຮູ້ດີວ່າບ້ານເປັນບ່ອນສ້າງຄວາມສໍາພັນ, ເປັນບ່ອນທີ່ທຸກຄົນບໍ່ຖືຄວາມຜິດທີ່ຜ່ານມາ, ແລະເປັນບ່ອນທີ່ພວກເຮົາຕຽມຕົວເພື່ອອະນາຄົດ. ສະນັ້ນລູກຜູ້ທໍຣະຍົດທັງຫລາຍຄວນຈະຫັນໜ້າກັບຄືນມາບ້ານເກົ່າຂອງຕົນ.

ຫລັງຈາກການຖືກລົງໂທດແຕ່ລະຄັ້ງ, ຊາວອິສຣາເອັນຈະໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າຢູ່ສເມີ. ອີງຕາມປະວັດຕິສາດຂອງຊົນຊາດອິສຣາເອັນ, ພວກເຂົາຈະເປັນຜູ້ທີ່ເລີ້ມໜີຈາກພຣະເຈົ້າ ແລະພຣະເຈົ້າຈະເປັນຜູ້ຊົງເອີ້ນພວກເຂົາໃຫ້ກັບຄືນບ້ານ. ໃນສມັຍຂອງຜູ້ປະກາດພຣະທັມໂຮເຊອາ ພຣະເຈົ້າກໍຈະຊົງເປັນຜູ້ນໍາໄພ່ພົນຂອງພຣະອົງເໝືອນກັນ. ພຣະອົງຊົງກ່າວວ່າ "ເຮົາຈະນໍາພວກເຂົາມາຍັງບ້ານເຮືອນຂອງເຂົາອີກ" (11:11).

## ຄວາມໝາຍສໍາລັບພວກເຮົາ:

ພຣະເຈົ້າຊົງກຽດຊັງຄວາມຜິດບາບ ແຕ່ພຣະອົງບໍ່ໄດ້ຊົງກຽດຊັງຄົນທີ່ເຮັດບາບ. ພຣະເຈົ້າຊົງເສັຽນໍ້າພຣະທັຍເມື່ອເຫັນພວກເຮົາເດີນທາງຜິດ. ພຣະອົງອາດຈະສແດງພຣະພິໂຣດ ແລະອາດຈະອະນຸຍາດໃຫ້ພັຍອັນຕະຣາຍເກີດຂຶ້ນກັບພວກເຮົາເມື່ອພວກເຮົາບໍ່ເຊື່ອຟັງພຣະອົງ; ແຕ່ພຣະຜູ້ເປັນເຈົ້າຈະບໍ່ປະຖິ້ມພວກເຮົາຈັກເທື່ອ.

ພຣະເຈົ້າເປັນພຣະເຈົ້າແຫ່ງຄວາມຮັກແລະພຣະເຈົ້າແຫ່ງຄວາມເມດຕາ. ເຖິງພວກເຮົາຈະຊົ່ວຮ້າຍປານໃດ, ເຖິງພວກເຮົາຈະທໍຣະຍົດຕໍ່ພຣະອົງຫລາຍເທົ່າໃດ, ຫລື ເຖິງພວກເຮົາຈະເຮັດຄວາມຜິດບາບຫລາຍເທົ່າໃດ ພຣະອົງຍັງຊົງຮັກພວກເຮົາຢູ່ສເມີ. ພີ່ນ້ອງທີ່ຮັກຂອງພຣະເຈົ້າ, ພຣະອົງຈະບໍ່ປະຖິ້ມທ່ານບໍ່ວ່າທ່ານຈະຊົ່ວຫລາຍເທົ່າໃດ. ພຣະອົງຍັງຊົງລໍຄອຍໃຫ້ທ່ານກັບຄືນມາບ້ານຫາພຣະອົງຢູ່ຕລອດເວລາ.

## ຄໍາຖາມ:

1. ທ່ານຮູ້ຈັກກັບພຣະເຈົ້າເພາະການທໍຣະຍົດຂອງທ່ານບໍ? ທ່ານໄດ້ຮັບບົດຮຽນຫຍັງແດ່ ເມື່ອທ່ານເອງໄດ້ເຫັນການທໍຣະຍົດຂອງຜູ້ອື່ນໃນຊີວິດຂອງທ່ານ?

2. ທ່ານສາມາດຮູ້ໄດ້ແນວໃດເວລາທ່ານບໍ່ໄດ້ຊື່ສັດຕໍ່ພຣະເຈົ້າ? ທ່ານເຮັດແນວໃດເມື່ອທ່ານຮູ້ວ່າຕົນເອງໄດ້ຜິດແທ້?

3. ທ່ານຄິດວ່າຄວາມສໍາພັນຂອງທ່ານກັບພຣະເຈົ້າຈະຢູ່ໃນສະພາບໃດ ຖ້າພຣະເຢຊູຄຣິດບໍ່ໄດ້ລົງມາຍັງໂລກມະນຸດ

ເພື່ອເປີດເຜີຍເຣື່ອງພຣະເຈົ້າ?

4. ທ່ານຄິດວ່າຄຣິສຕະຈັກຂອງພຣະເຈົ້າໄດ້ເພິ່ງໂລກຂ້າງນອກເພື່ອຄວາມຢູ່ລອດ ຫລາຍກ່ວາເພິ່ງພຣະເຈົ້າຫລືບໍ່?

5. ຄວາມຮັກແລະຄວາມຫ່ວງໃຍຂອງພຣະເຈົ້າໄດ້ຖືກສແດງຜ່ານຄຣິສຕະຈັກສຳລັບຄົນທີ່ກຳລັງຫລົງຫາຍ ແລະທໍຣະຍົດຕໍ່ພຣະເຈົ້າແນວໃດແດ່?

# ບົດຮຽນທີ 10
# ຈົ່ງກັບຄືນມາຫາພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຮເຊອາ 14
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຮເຊອາ 11:12--14:9
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງປະທານຊີວິດໃໝ່ໃຫ້ແກ່ຜູ້ທີ່ກັບຄືນມາຫາພຣະອົງ.
**ຄຳຖາມເພື່ອການສຳຣວດ:** ເຮົາຈະມີຄວາມຫວັງອັນໃດ ຖ້າຄຳພິພາກສາບອກວ່າ "ຜິດຕາມຂໍ້ກ່າວຫາທຸກຢ່າງ?"
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວິທີທີ່ຈະຕອບຮັບຄຳເຊີນຂອງພຣະເຈົ້າໃຫ້ກັບຄືນມາຫາພຣະອົງ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ການວາງເປົ້າໝາຍ ຫລືການປ່ຽນແປງນິສັຍກໍເຫັນວ່າເປັນສິ່ງທີ່ດີເລີດ ແຕ່ສິ່ງເຫລົ່ານີ້ຈະບໍ່ຊ່ວຍຊີວິດຝ່າຍຈິດວິນຍານຂອງທ່ານໃຫ້ຟື້ນຄືນຂຶ້ນມາໃໝ່. ການຟື້ນຟູຝ່າຍຈິດວິນຍານຈະເກີດຂຶ້ນຖ້າທ່ານຫາກມີການກັບໃຈ ຫລືການຖິ້ມໃຈເກົ່າແລະເອົາໃຈໃໝ່ ແລະຍອມໃຫ້ພຣະເຈົ້າທຳງານໃນຊີວິດ.

## ປ້າຍເຕືອນຕາມຫົນທາງ (11:12--13:13:16)

ຊົນຊາດອິສຣາເອັນບໍ່ໄດ້ເອົາໃຈໃສ່ກັບສັນຍານ ຫລືປ້າຍເຕືອນຕາມຫົນທາງເມື່ອພວກເຂົາກຳລັງຫັນໜ້າອອກໜີຈາກພຣະເຈົ້າ. ຈາກການສຶກສາພຣະທັມໂຮເຊອາ ພວກເຮົາໄດ້ເຫັນວ່າ ອິສຣາເອັນບໍ່ຫົວຊາຕໍ່ຄຳຕັກເຕືອນ ແລະໝາຍສຳຄັນຈາກພຣະເຈົ້າ. ທ່ານຜູ້ອ່ານອາດຈະຖາມຕົວເອງວ່າອິສຣາເອັນເບິ່ງຂ້າມເຄື່ອງໝາຍຕັກເຕືອນຕ່າງໆເຫລົ່ານັ້ນໄດ້ຢ່າງໃດ. ແຕ່ຄວາມຈິງແລ້ວ, ພວກເຮົາໃນສມັຍນີ້ກໍບໍ່ໄດ້ແຕກຕ່າງກັບຊົນຊາດອິສຣາເອັນໃນສມັຍຂອງໂຮເຊອາເລີຍ. ພວກເຮົາຫລາຍຄົນກໍບໍ່ຄ່ອຍຈະເອົາໃຈໃສ່ຕໍ່ປ້າຍຕັກເຕືອນຕ່າງໆໃນຊີວິດເຊັ່ນດຽວກັນ.

ໃນພຣະທັມໂຮເຊອາ 11:12--13:16, ພວກເຮົາໄດ້ເຫັນພຣະທັມທັງໝົດ 31 ຂໍ້ທີ່ເວົ້າເຖິງການເມີນເສີຍຂອງອິສຣາເອັນ ຕໍ່ເຄື່ອງໝາຍຕັກເຕືອນຂອງພຣະເຈົ້າ. ເນື່ອງຈາກວ່າອິສຣາເອັນບໍ່ໄດ້ເອົາໃຈໃສ່ກັບການຕັກເຕືອນ, ພວກເຂົາຈຶ່ງພາກັນເດີນທາງຫ່າງອອກຈາກພຣະຜູ້ເປັນເຈົ້າຂອງພວກເຂົາ. ພຣະເຈົ້າໄດ້ໃຊ້ເຫດຮ້າຍ, ຜູ້ປະກາດພຣະທັມ, ນິມິດ, ແລະເຣື່ອງສົມມຸດເພື່ອຕັກເຕືອນຊົນຊາດອິສຣາເອັນ ແຕ່ພວກເຂົາບໍ່ຍອມເຂົ້າໃຈ ຫລືກັບໃຈຄືນມາຫາພຣະອົງ. ການສແວງຫາຊັບສົມບັດ, ການປິດເບືອນຄວາມຈິງ, ການສ້າງພັນທະມິດກັບຕ່າງຊາດ, ແລະພິທີທາງສາສນາຕ່າງໆ ບໍ່ໄດ້ຊ່ວຍຊົນຊາດອິສຣາເອັນໃຫ້ລົມຄວາມຜິດບາບຂອງພວກເຂົາ.

## ການກັບຄືນແລະການສາຣະພາບ (14:1-3)

ຜູ້ປະກາດພຣະທັມໂຮເຊອາໄດ້ເອີ້ນອິສຣາເອັນໃຫ້ກັບຄືນມາຫາພຣະເຈົ້າ. ໂຮເຊເອຊັກຊວນໃຫ້ອິສຣາເອັນກັບໃຈເພາະພວກເຂົາກຳລັງເດີນທາງຜິດ ແລະຄວາມພິນາດກຳລັງຈະມາເຖິງພວກເຂົາ. ທຸກຄົນທີ່ເຫັນຄວາມທຸກລຳບາກຂອງອິສຣາເອັນໃນສມັຍນັ້ນ ຄົງຈະຖາມຕົວເອງວ່າ "ເປັນຫຍັງຄົນພວກນັ້ນບໍ່ພາກັນກັບໃຈ?" ແຕ່ກົງກັນຂ້າມອິສຣາເອັນພາກັນສືບຕໍ່ເຮັດບາບຕໍ່ໄປໂດຍການຂາບໄຫວ້ພຣະບາອານ ແລະການຖວາຍເຄື່ອງບູຊາແກ່ຮູບໂຄຣົບ.

ອິສຣາເອັນເຄີຍໄດ້ນຳເຄື່ອງຖວາຍບູຊາໄປໃຫ້ພຣະບາອານເພື່ອຂໍຄວາມເມດຕາ. ໂຮເຊອາໄດ້ອ້ອນວອນໃຫ້ອິສຣາເອັນກັບມາຫາພຣະຜູ້ເປັນເຈົ້າ, ບໍ່ແມ່ນໃຫ້ນຳເຄື່ອງຖວາຍມາ ແຕ່ໃຫ້ນຳຄຳສາຣະພາບທີ່ໝາຍເຖິງການກັບໃຈທີ່ແທ້ຈິງ. ການກັບໃຈແລະການກັບຄືນມາຫາພຣະເຈົ້າສະແດງເຖິງການກັບໃຈອັນແທ້ຈິງ. ພຣະເຈົ້າຊົງເບິ່ງເຫັນຄວາມຈິງໃຈ ຂອງມະນຸດ ແລະພຣະອົງຊົງຮູ້ຈັກຄວາມຕ້ອງການ ຫລືຈຸດປະສົງທີ່ແທ້ຈິງຂອງທຸກໆຄົນ. ທ່ານເຄີຍໄດ້ສຳຣວດເບິ່ງຄວາມສຳພັນຂອງທ່ານກັບພຣະເຈົ້າບໍ່? ຂໍຢ່າໃຫ້ຄວາມສັດຊື່ຂອງທ່ານຕໍ່ຄຣິສຕະຈັກ, ການຮັບໃຊ້ຢ່າງດູໝັ່ນ, ຫລືສິ່ງໃດໆມາເປັນອຸປສັກຣະຫວ່າງຄວາມສຳພັນຂອງທ່ານກັບພຣະເຈົ້າ. ທຸກຢ່າງທີ່ທ່ານເຮັດເພື່ອພຣະເຈົ້ານັ້ນກໍເປັນສິ່ງທີ່ປະເສີດແທ້, ແຕ່ສິ່ງເຫລົ່ານັ້ນບໍ່ສາມາດຈະແທນຄວາມສຳພັນທາງສ່ວນຕົວກັບພຣະເຈົ້າໄດ້.

## <u>ພຣະເຈົ້າຊົງຕອບ (14:4-5)</u>

ພຣະທັມໃນຕອນນີ້ໄດ້ເປີດເຜີຍພຣະລັກສະນະຂອງພຣະເຈົ້າສາມຢ່າງ. ຮູບພາບແຕ່ລະຕອນມີຄວາມໝາຍສຳລັບອິສຣາເອັນໃນສມັຍຂອງຜູ້ປະກາດພຣະທັມໂຮເຊອາ ແລະສຳລັບຄຣິສຕຽນທຸກໆຄົນໃນສມັຍນີ້ ກ່ຽວກັບພຣະລັກສະນະແລະພຣະປະສົງຂອງພຣະເຈົ້າ. <u>ນຶ່ງ</u>, ຮູບພາບຂອງພຣະເຈົ້າໃນຖານະແພດຜູ້ປະເສີດ (ຂໍ້ 4). ພຣະເຈົ້າຜູ້ດຽວເທົ່ານັ້ນທີ່ສາມາດປິ່ນປົວຈິດວິນຍານທີ່ແຕກຫັກ. ພຣະອົງອາດຈະປົວໃຫ້ດີໃນທັນທີທັນໃດຫລືອາດຈະປ່ອຍໄປຕາມເວລາ. ເວລາເປັນຂອງພຣະເຈົ້າ. <u>ສອງ</u>, ຮູບພາບຂອງພຣະເຈົ້າໃນຖານະຄົນຮັກ (ຂໍ້ 4). ພຣະເຈົ້າຊົງພໍພຣະທັຍກັບຄົນທີ່ຕ້ອງການກັບໃຈ ແລະຄືນມາຫາພຣະອົງ. ພຣະເຈົ້າປະທານຄວາມຮັກໃຫ້ທຸກຄົນທີ່ກັບໃຈໂດຍບໍ່ຄິດຣາຄາ. ຄວາມຮັກຂອງພຣະເຈົ້າໄດ້ຖືກເປີດເຜີຍຜ່ານທາງພຣະຄຣິດ. ພຣະເຈົ້າເປັນຄວາມຮັກ (1 ໂຢຮັນ 4:16). <u>ສາມ</u>, ຮູບພາບຂອງພຣະເຈົ້າໃນຖານະຜູ້ປະທານຊີວິດ (ຂໍ້ 5). ຄົນໃນສມັຍຂອງໂຮເຊອາບໍ່ມີນ້ຳກ໊ອກຢູ່ໃນບ້ານເໝືອນກັບຄົນສມັຍນີ້; ພວກເຂົາໃຊ້ນ້ຳສ້າງ, ນ້ຳຝົນ, ແລະນ້ຳຈາກຮ່ອງ. ນ້ຳໝອກໃນຕອນເຊົ້າ ຊ່ວຍພວກເຂົາໃຫ້ໄດ້ຮັບຊີວິດຊີວາຂຶ້ນມາໃໝ່.

ພຣະຜູ້ເປັນເຈົ້າຈະຊົງຕອບສນອງທຸກໆຄົນທີ່ເຂົ້າມາຫາພຣະອົງ. ພຣະເຈົ້າຜູ້ຊົງເປັນແພດຜູ້ປະເສີດ, ຜູ້ຊົງເປັນຄວາມຮັກ, ແລະຜູ້ຊົງເປັນຜູ້ໃຫ້ຊີວິດ ຈະຊ່ວຍປິ່ນປົວຊີວິດຝ່າຍຈິດວິນຍານຂອງພວກເຮົາ, ພຣະອົງຈະໃຫ້ຄວາມຮັກແກ່ພວກເຮົາ, ແລະພຣະອົງຈະເປັນຜູ້ຊ່ວຍໃຫ້ເຮົາໄດ້ຮັບຄວາມຊົມຊື່ນຍິນດີ.

## <u>ຜົນຂອງການກັບໃຈ (14:5-7)</u>

ທຸກຄົນທີ່ກັບໃຈຄືນມາຫາພຣະເຈົ້າຈະໄດ້ຮັບການປ່ຽນແປງໃໝ່. ຊີວິດຈະເກີດດອກອອກຜົນ. *"ເຂົາຈະມີຊີວິດຈະເຣີນແບບໃໝ່ຂຶ້ນມາ ຈະສວຍງາມດັ່ງກົກໝາກກອກເທດ. ເຂົາຈະມີກິ່ນຫອມຫວນຊວນໃຈດັ່ງຕົ້ນສົນຊີດາໃນເລບານອນພຸ້ນ"* (14:6). ຫລັງຈາກການກັບໃຈຄືນມາຫາພຣະເຈົ້າ, ຊີວິດຂອງທ່ານຈະເປັນຊີວິດທີ່ມີປໂຍດຫລາຍຂຶ້ນ ແລະຄົນທັງຫລາຍຈະນັບຖືແລະຢຳເກງທ່ານ. ເມື່ອທ່ານຕັ້ງໝັ້ນຢູ່ໃນພຣະເຈົ້າ, ຄວາມສຳພັນຂອງທ່ານກັບພຣະອົງຈະຈະເຣີນຂຶ້ນ. ການເຕີບໃຫຍ່ດ້ານຈິດວິນຍານກໍຈະຕິດຕາມມາ; ແລ້ວທ່ານຈະຮູ້ພຣະປະສົງຂອງພຣະເຈົ້າສຳລັບຊີວິດ. ຄຳອະທິຖານຂອງພຣະເຢຊູຄືຕົວຢ່າງສຳລັບຊີວິດຂອງຜູ້ເຊື່ອ, *"ແຕ່ຢ່າງໃດກໍດີ ຂໍຢ່າໃຫ້ເປັນໄປຕາມຄວາມປະສົງຂອງລູກແຕ່ຂໍໃຫ້ເປັນໄປຕາມຄວາມປະສົງຂອງພໍ່ເຖີດ "* (ລູກາ 22:42).

ເວລາໃດທ່ານມອບຊີວິດໃຫ້ຢູ່ໃນການຄຸ້ມຄອງຂອງພຣະເຈົ້າ, ຄົນທັງຫລາຍຈະໄດ້ເຫັນຜົນຂອງຊີວິດນັ້ນ. ພຣະທັມຂອງພຣະເຈົ້າກ່າວວ່າ, *"ເຂົາຈະປູກເຂົ້າແລະຮັບຜົນຫລາຍດັ່ງສວນເຫລົ້າອະງຸ່ນ ເຂົາຈະມີຊື່ສຽງດັ່ງເຫລົ້າອະງຸ່ນທີ່*

*ເລບານອນນັ້ນ* "14:7). ຈົ່ງກັບໃຈແລະກັບຄືນຫາພຣະເຈົ້າ; ພຣະອົງຊົງຮັກທ່ານແລະມີແຜນການທີ່ດີສຳລັບທ່ານ.

**<u>ຄຳເຊີນຂອງພຣະເຈົ້າ (14:8-9)</u>**

ໃນພຣະທັມສອງຂໍ້ສຸດທ້າຍນີ້, ໂຮເຊອາໄດ້ເປີດເຜີຍໃຫ້ອິສຣາເອັນຮູ້ວ່າ ພຣະເຈົ້າຊົງລໍຄອຍພວກເຂົາດ້ວຍຄວາມຮັກ ເຖິງພວກເຂົາຈະບໍ່ຊື່ສັດຕໍ່ພຣະອົງກໍຕາມ. ພຣະເຈົ້າຊົງກ່າວໂທດສຳລັບຄວາມຜິດບາບຂອງພວກເຂົາ; ພຣະອົງຊົງເປີດເຜີຍຄວາມຮັກທີ່ພຣະອົງຊົງມີກັບພວກເຂົາ; ແລະພຣະອົງໄດ້ຊົງເຊື້ອເຊີນໃຫ້ພວກເຂົາກັບຄືນມາຫາຄວາມສຳພັນອັນສັດຊື່ທີ່ພວກເຂົາເຄີຍມີໃນອະດີດ.

ໃນສມັຍນີ້, ພວກເຮົາບໍ່ໄດ້ອາສັຍເຄື່ອງຖວາຍບູຊາ ຫລືພິທີການຕ່າງໆເພື່ອຈະເຂົ້າມາຫາພຣະຜູ້ເປັນເຈົ້າ ຫລືເພື່ອຈະສ້າງຄວາມສຳພັນກັບພຣະອົງ. ພຣະເຢຊູໄດ້ຊົງເອີ້ນຫາຊົນຊາດອິສຣາເອັນຜູ້ທີ່ກຳລັງອິດເມື່ອຍເພາະພິທີການຕ່າງໆທາງສາສນາທີ່ມະນຸດໄດ້ສ້າງຂຶ້ນເອງວ່າ, "*ຈົ່ງມາຫາເຮົາທຸກຄົນທີ່ອິດເມື່ອຍຈາກການແບກພາຣະໜັກ ແລະເຮົາຈະໃຫ້ທ່ານໄດ້ພັກຜ່ອນ*" (ມັດທາຍ 11:28).

**<u>ຄວາມໝາຍສຳລັບພວກເຮົາ:</u>**

ຄວາມຈເຣີນດ້ານວັດຖຸບໍ່ໄດ້ເຮັດໃຫ້ຊີວິດຂອງມະນຸດໃນສມັຍນີ້ງ່າຍຂຶ້ນ. ແຕ່ກົງກັນຂ້າມ, ພວກເຮົາທັງຫລາຍໄດ້ພາກັນເຮັດຫລາຍໆຢ່າງທີ່ພາໃຫ້ຊີວິດປະຈຳວັນກາຍມາເປັນພາຣະໜັກ. ການສແວງຫາຊັບສົມບັດ, ການບິດເບືອນຄວາມຈິງ, ການທ່ຽວເຫລັ້ນຫລາຍກວ່າທຳງານ, ການສ້າງພັນທະມິດກັບຕ່າງຊາດ, ແລະການປ່ຽນແປງພິທີທາງສາສນາຕ່າງໆໃຫ້ເປັນງານສັງຄົມ, ແລະຕໍ່ໆໄປ ໄດ້ເຮັດໃຫ້ຊົນຊາດອິສຣາເອັນເບິ່ງຂ້າມປ້າຍເຕືອນຈາກພຣະເຈົ້າ. ພວກເຂົາບໍ່ໄດ້ເຫັນຄຳເຕືອນທັງໝົດຂອງພຣະອົງ. ສິ່ງເຫລົ່ານີ້ເປັນໄປໄດ້ຢ່າງໃດ? ພວກເຮົາເຄີຍເບິ່ງຂ້າມປ້າຍເຕືອນຈາກພຣະເຈົ້າສຳລັບຊີວິດຂອງເຮົາບໍ່? ມີຈັກເທື່ອທີ່ພວກເຮົາໄດ້ຍິນພຣະເຈົ້າເອີ້ນວ່າ "ຈົ່ງກັບມາຫາເຮົາ?"

**<u>ຄຳຖາມ:</u>**

1. ທ່ານເຫັນປ້າຍເຕືອນໃນສມັຍຂອງຜູ້ປະກາດພຣະທັມໂຮເຊອາ ຢູ່ໃນສມັຍປັດຈຸບັນນີ້ບໍ່? ຖ້າທ່ານເຫັນ, ພວກເຮົາຄວນຈະເຮັດແນວໃດດີ?

2. ທ່ານຈະອະທິບາຍຄຳວ່າ "ການກັບໃຈ" ໄດ້ຢ່າງໃດ?

3. ແມ່ນຫຍັງທີ່ເຮັດໃຫ້ການກັບໃຈກາຍເປັນເຣື່ອງທີ່ຍາກລຳບາກສຳລັບຄຣິສຕຽນ? ມີຫຍັງບໍ່ທີ່ແຕກຕ່າງສຳລັບຄົນທີ່ບໍ່ເປັນຄຣິສຕຽນ?

4. ຄວາມຈະເຣີນດ້ານເທກໂນໂລຢີເຮັດໃຫ້ພວກເຮົາບໍ່ສາມາດມີຄວາມສຳພັນແບບໃກ້ຊິດກັບພຣະເຈົ້າແນວໃດ? ການກັບໃຈມີຄວາມສຳຄັນແນວໃດກັບຄວາມສຳພັນແບບໃກ້ຊິດກັບພຣະເຈົ້າ?

5. ໃນປະສົບການຂອງທ່ານ, ມີຫຍັງແດ່ທີ່ແຕກຕ່າງ ຫລືປ່ຽນແປງຫລັງຈາກການກັບໃຈຄືນມາຫາພຣະເຈົ້າ?

6. ພວກເຮົາທັງຫລາຍມີສ່ວນໃນການເຮັດໃຫ້ຊີວິດຂອງຕົນເອງມີຄວາມຫຍຸ້ງຍາກ; ການກັບໃຈຄືນຫາພຣະເຈົ້າຈະຊ່ວຍນຳການປິ່ນປົວ, ພຣະຄຸນ, ແລະຊີວິດໃໝ່ມາໃຫ້ພວກເຮົາໄດ້ຢ່າງໃດ?

## ບົດຮຽນທີ 11

## ຄວາມໂລບມາກນຳພາໄປເຖິງການລົງໂທດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 1:1-16; 2:1-9

**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ມີກາ 1-2

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນເຂົ້າໃຈວ່າພຣະເຈົ້າຊົງລົງໂທດຄົນກົດຂີ່ຍ້ອນຄວາມຢາກໄດ້.

**ຄຳຖາມເພື່ອການສຳຣວດ:** ໃນຊີວິດຂອງທ່ານຢາກໄດ້ຫຍັງຫລາຍກວ່າຫມູ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊີ້ໃຫ້ເຫັນວ່າພຣະເຈົ້າຊົງລົງໂທດຜູ້ໂລບມາກ ແລະຊ່ອຍຜູ້ຟັງຄວາມ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສິພຣະທັດຂອງພຣະອົງໃນລັກສະນະຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

ຂໍແນະນຳຜູ້ທຳນວາຍມີກາດັ່ງນີ້, ຜູ້ທຳນວາຍມີກາເປັນຜູ້ຮັບໃຊ້ພຣະເຈົ້າໃນສມັຍດຽວກັນກັບຜູ້ທຳນວາຍເອຊາຢາ. ແຕ່ສ່ວນຫລາຍເຮົາຈະໄດ້ຍິນແຕ່ຊື່ຂອງເອຊາຢາເທົ່ານັ້ນ. ວັນນີ້ເຮົາຈະເວົ້າກັນເຖິງຜູ້ທຳນວາຍມີກາຊຶ່ງທ່ານເອງໄດ້ຮັບໃຊ້ພຣະເຈົ້າໃນປີ ຄ.ສ 750 ເຖິງ 680 ຊຶ່ງເປັນສມັຍດຽວກັນກັບເອຊາຢາ. ຜູ້ທຳນວາຍມີກາມີຫນ້າທີ່ຮັບຜິດຊອບທີ່ແຂວງຢູດາຍເມືອງເອກເຢຣູຊາເລັມນັ້ນເອງ.

**ຄຳທຳນວາຍຂອງມີກາ** 1: 1-7

ພຣະຜູ້ເປັນເຈົ້າໄດ້ເປີດເຜີຍເຣື່ອງທີ່ຈະເກີດຂຶ້ນກັບຊາມາເຣັຽແລະກຸງເຢຣູຊາເລັມໃຫ້ແກ່ຜູ້ທຳນວາຍມີກາຢ່າງລະອຽດ. ຊຶ່ງໃນເວລານັ້ນແມ່ນສມັຍຂອງໂຢທາມ, ອາຮາດ ແລະເຮເສກີຢາ ເປັນກະສັດແຫ່ງຢູດາ ຄົນລະສາມປີ ສ່ວນມີກາເປັນຜູ້ທຳນວາຍໃນຍຸກນັ້ນເປັນເວລາ 40 ເຖິງ 50ປີ ແຕ່ບໍ່ມີໃຜແນ່ໃຈວ່າຈັກປີແທ້ ແຕ່ຮູ້ວ່າໃນຣະວ່າງ 40 ເຖິງ 50 ປີທີ່ຜູ້ທຳນວາຍມີກາໃຊ້ຊີວິດທຳນວາຍພຣະດຳຣັດຂອງອົງພຣະຜູ້ເປັນເຈົ້າ.

ປະຊາຊົນເຮັດຊົ່ວມົວຫມອງພາກັນຂາບໄຫວ້ພຣະທຽມ ພ້ອມທັງມີໂສເພນີກໍເກີດຂຶ້ນໃນທຸກບ່ອນຈຶ່ງເປັນເຫດໃຫ້ອົງພຣະຜູ້ເປັນເຈົ້າພຣະພິໂຣດ (ໃຈຮ້າຍ). ດັ່ງນັ້ນພຣະອົງຈຶ່ງບອກເຣື່ອງທີ່ພຣະອົງຈະເຮັດກັບຊາວເມືອງຢູດາໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງຄືທ່ານມີກາ ຊຶ່ງເຮົາຮ້ອງເພິ່ນວ່າຜູ້ທຳນວາຍນ້ອຍມີກາ ເພາະເພິ່ນໄດ້ກ່າວເຖິງເຫດການທີ່ຈະເກີດຂຶ້ນໃນພາຍຫນ້າ.

ມີຫລາຍຄົນເຄີຍຖາມຂ້າພະເຈົ້າວ່າ "ເປັນຫຍັງພຣະເຈົ້າຈຶ່ງບໍ່ເວົ້າກັບຜູ້ກະທຳຜິດໂດຍກົງ, ເປັນຫຍັງຈຶ່ງໃຊ້ຄົນຂອງພຣະອົງໃຫ້ເວົ້າກັບຜູ້ກະທຳຜິດ?" ເຣື່ອງນີ້ຂ້າພະເຈົ້າກໍຕອບເພິ່ນຍາກ ແຕ່ພໍທີ່ຈະຕອບເພິ່ນໄດ້ໂດຍອີງໃສ່ນັກເທດຊື່ດັ່ງຜູ້ນຶ່ງໄດ້ກ່າວວ່າ ພຣະເຈົ້າບໍ່ຟັງຄົນບາບແລະຈະບໍ່ເວົ້ານຳຄົນບາບ ແລະເພິ່ນອ້າງເຖິງພຣະທັມທີ່ກ່າວວ່າ *"ພວກເຮົາຮູ້ຈັກວ່າພຣະເຈົ້າບໍ່ຟັງຄົນບາບ ແຕ່ພຣະອົງຊົງຟັງຜູ້ທີ່ນັບຖືພຣະເຈົ້າ ແລະປະຕິບັດຕາມຄຳປະສົງຂອງພຣະອົງ"* (ໂຢຮັນ) ດ້ວຍເຫດນີ້ເອງພຣະເຈົ້າຈຶ່ງໃຊ້ໃຫ້ມີກາໄປເວົ້າກັບປະຊາຊົນໃຫ້ເຂົາເຊົາເຮັດຊົ່ວເພື່ອຈະບໍ່ຖືກລົງໂທດ.

ຜູ້ທຳນວາຍມີກາກ່າວວ່າ *"ຈົ່ງຟັງເຣື່ອງນີ້ ຊົນຊາດທັງຫລາຍເອີຍ ຈົ່ງຟັງເຣື່ອງນີ້ປວງຊົນທີ່ອາສັຍຢູ່ເທິງແຜ່ນດິນໂລກ ພຣະຜູ້ເປັນເຈົ້າຈະເປັນພະຍານຕໍ່ສູ້ເຈົ້າ ຈົ່ງຟັງແມ! ສຽງຂອງພຣະອົງລົງມາຈາກພຣະວິຫານບ່ອນສັກສິດຂອງພຣະອົງ"* (ມີກາ 1:2ກ). ມີກາໄດ້ຮ້ອງດ້ວຍສຽງດັງຕາມລັກສະນະຂອງຜູ້ທຳນວາຍຊຶ່ງມີຄວາມໝາຍວ່າ ໃຫ້ທຸກຄົນຟັງທີ່ຂ້າພະເຈົ້າຈະກ່າວຄວາມຈິງ ພຣະຜູ້ເປັນເຈົ້າເປັນພະຍານໃນການກ່າວຂອງຂ້າພະເຈົ້າວ່າເປັນຄວາມຈິງທຸກຢ່າງ. ເມື່ອພຣະເຈົ້າເປັນພະຍານໃນການກ່າວຂອງຂ້າພະເຈົ້າແລ້ວພຣະອົງນັ້ນແຫລະຈະເປັນຜູ້ຈັດການກັບພວກເຈົ້າຫາກພວກເຈົ້າບໍ່ຍອມຟັງສິ່ງທີ່ຂ້າພະເຈົ້າຈະກ່າວ.

*"ສຽງຂອງພຣະອົງລົງມາຈາກພຣະວິຫານບ່ອນສັກສິດຂອງພຣະອົງ"* (2ຂ). ມີຄວາມໝາຍວ່າວິຫານສັກສິດທີ່ກຸງເຢຣູຊາເລັມຍັງເປັນບ່ອນສັກສິດທີ່ປະຊາຊົນຄວນຈະຂາບໄຫວ້ເປັນຫຍັງປະຊາຊົນຈຶ່ງໄປຂາບໄຫວ້ພະທຽມ. *"ພຣະຜູ້ເປັນເຈົ້າກຳລັງສະເດັດມາແຕ່ເບື້ອງເທິງ"* (3ກ). ມີຄວາມໝາຍວ່າພຣະອົງຊົງໃຊ້ຂ້າພະເຈົ້າມາເພື່ອເຕືອນພວກທ່ານຫລືເວົ້າອີກຢ່າງນຶ່ງວ່າມີກາໄດ້ມາຕາງໜ້າອົງພຣະຜູ້ເປັນເຈົ້າເພື່ອເວົ້າກັບປະຊາຊົນ ດັ່ງນັ້ນຈົ່ງຟັງໃຫ້ດີ.

*ພຣະອົງຈະສເດັດລົງມາຢ່າງເທິງຈອມພູທັງຫລາຍ* (ຂໍ້ 3ຂ). *ແລ້ວພູທັງຫລາຍຈະເປື່ອຍລະລາຍໄປໃຕ້ພຣະບາດຂອງພຣະອົງ ເໝືອນດັ່ງຂີ້ເຜີ້ງຖືກໄຟມັນຈະໄຫລລົງສູ່ຮ່ອມພູເໝືອນດັ່ງນ້ຳໄຫລລົງມາແຕ່ພູ ເຫດການທັງປວງນີ້ບັງເກີດຂຶ້ນກໍເພາະວ່າປະຊາຊົນອິສຣາເອນໄດ້ກະທຳບາບ ແລະກະບົດຕໍ່ສູ້ພຣະເຈົ້າ"* (ຂໍ້ 4 -5). ຄຳທີ່ມີກາກ່າວນັ້ນມີຄວາມໝາຍວ່າ ພຣະເຈົ້າຈະຊົງສຳແດງອາຣິດອຳນາດດ້ວຍພຣະພິໂຣດ ຢຽບພູເຂົາທີ່ສູງບ່ອນທີ່ເຂົານະມັສການພຣະທຽມ, ບ່ອນທີ່ພວກທະຫານຍຶດຄອງເພື່ອປ້ອງກັນຂ້າເສິກ ພູເຂົາສູງທີ່ເຂົານະມັສການພຣະທຽມພ້ອມທັງພຣະທຽມນັ້ນຈະເປື່ອຍລະລາຍເໝືອນດັ່ງຂີ້ເຜີ້ງ ແລະພຣະທຽມເຫລົ່ານັ້ນກໍຈະຖືກທຸບໃຫ້ມຸ່ນ ແລະຖືກທຳລາຍດ້ວຍໄຟ (ຂໍ້ 7).

ສິ່ງທີ່ປະທັບໃຈຂ້າພະເຈົ້າຄື ພຣະເຈົ້າຈະທຳລາຍບ່ອນທີ່ມະນຸດຖືວ່າສັກສິດແລະບ່ອນສູງ ຄືພູເຂົາຕ່າງໆ ທີ່ເຂົາເອົາພຣະ ທຽມໄປຕັ້ງໄວ້ເພື່ອຂາບໄຫວ້ບູຊາ ກໍຈະຖືກທຳລາຍຈົນເປັນໜ້າດິນຮາບພຽງ ສ່ວນພຣະທຽມທີ່ເຂົາຂາບໄຫວ້ບູຊານັ້ນ ກໍຈະຖືກທຸບໃຫ້ມຸ່ນ ແລະໄຟກໍຈະໄໝ້ໂດຍພຣະພິໂຣດຂອງພຣະເຈົ້າ ແລະຂ້າພະເຈົ້າບໍ່ເຫັນວ່າມີຮູບໂຄຣົບໃດໆ ຍັບຍັ້ງພຣະພິໂຣດຂອງພຣະເຈົ້າໄວ້ໄດ້, ແມ່ນແຕ່ກ້ອນຫີນຕາມພູເຂົາກໍຈະເປື່ອຍເໝືອນຂີ້ເຜີ້ງ (ມີກາ 1:4).

<u>**ຊົງລົງໂທດຢູດາ**</u> (1:8-16)

ເຫດການທີ່ຈະເກີດຂຶ້ນນັ້ນເຮັດໃຫ້ຜູ້ທຳນວາຍມີກາຄ່ຳຄວນດ້ວຍຄວາມໂສກເສົ້າວ່າ *"ກໍເພາະເຫດການເຫຼົ່ານີ້ແຫຼະຂ້ອຍຈຶ່ງເສົ້າໃຈຄ່ຳຄວນ ຂ້ອຍຍ່າງຕີນເປົ່າແລະເປືອຍກາຍ ເພື່ອສະແດງຄວາມໂສກເສົ້າໝອງໃຈ ຂ້ອຍຈະຫອນເໝືອນໝາປ່າເພາະວ່າບາດແຜຂອງເມືອງສະມາເຣັຽຮັກສາໃຫ້ດີບໍ່ໄດ້ ເມືອງຢູດາກໍກຳລັງຈະເປັນບາດແຜຄືກັນເພາະການທຳລາຍໄດ້ມາຮອດປະຕູເມືອງເຢຣູຊາເລັມບ່ອນທີ່ປະຊາຊົນໄດ້ອາສັຍຢູ່ແລ້ວ"* (ມີກາ 1:8-9).

ຜູ້ທຳນວາຍມີກາສະແດງຄວາມທຸກທີ່ຈະເຫັນປະຊາຊົນຈະຕ້ອງຖືກລົງໂທດ. ທ່ານກ່າວອອກມາເປັນສາຣະຄະດີຂອງຊາວເຮັບເຣີ. ທ່ານກ່າວວ່າທ່ານຈະຍ່າງຕີນເປົ່າແລະເປືອຍກາຍ (ເປືອຍກາຍແປວ່າບໍ່ນຸ່ງເສື້ອ) ຮ້ອງໄຫ້ໄປຕາມຖນົນຫົນທາງ. ທ່ານເສັຽໃຈທີ່ປະຊາຊົນຂອງທ່ານບໍ່ກັບໃຈຫັນໜີຈາກທາງຊົ່ວຮ້າຍ. ທ່ານກ່າວຕໍ່ໄປວ່າ *"ຂ້ອຍຈະຫອນເໝືອນໝາປ່າ"* ຊຶ່ງໝາປ່າໄດ້ຮ້ອງໃນເວລາກາງຄືນແມ່ນໃຜແດ່ຟັງສຽງຂອງມັນ. ພຣະເຈົ້າຈະທຳລາຍບໍ່ແມ່ນແຕ່ສະມາເຣັຽເທົ່ານັ້ນ ພຣະອົງຍັງຈະທຳລາຍໄປຮອດເຢຣູຊາເລັມອີກ ຫາກປະຊາຊົນບໍ່ຍອມຫັນໜີຈາກທາງຊົ່ວທີ່ເຂົາພາກັນເຮັດຢູ່.

ຜູ້ທຳນວາຍມີກາກ່າວເປັນສາຣະຄະດີຊຶ່ງສມັຍນີ້ອາຈຮ້ອງວ່າຮ້ອງອອກມາເປັນບົດເພງ, ຫລືບົດກອນ ຫລືຂັບລຳຕ່າງໆ ທ່ານກ່າວວ່າພຣະຜູ້ເປັນເຈົ້າຊົງກ່າວວ່າ *"ຊາວຊະມາເຣັຽເອີຍ ເຮົາຈະມອບເຈົ້າໃຫ້ສັດຕຣູທີ່ກຳລັງຈະຍຶດເອົາເມືອງຂອງພວກເຈົ້າສ່ວນກະສັດອິສຣາເອນຈະປົບໄປລີ້ຢູ່ຖ້ຳອາດູລັມ* (1:15) (ເປັນຖ້ຳທີ່ກະສັດດາວິດຫລົບໜີຊາອູນ (2ຊາມູເອນ 1-2). *ຊາວຢູດາເອີຍ ຈົ່ງແຖຫົວຂອງພວກເຈົ້າເພື່ອໄວ້ທຸກໃຫ້ແກ່ລູກທີ່ຮັກຂອງພວກເຈົ້າສາຈົ່ງແຖ ຫົວໂລ້ນເໝືອນແຮ້ງກໍເພາະວ່າລູກຂອງພວກເຈົ້າຈະຖືກເອົາໜີໄປ* (1:15-16).

<u>**ທັຣມໂຫດຍິ່ງກວ່າໂຈນ**</u> (ມີກາ 2:1-5).

ນັກຂຽນຜູ້ນຶ່ງໄດ້ໃຫ້ຊື່ພຣະທັມມີກາບົດ 2 ນີ້ວ່າຮ້າຍກວ່າໂຈນ. ເພາະວ່າໃນເວລາກາງຄືນລາວຄຶດວາງແຜນກະທຳການຊົ່ວ ພໍ່ຕື່ນເຊົ້າມາລາວກໍກະທຳການຊົ່ວຕາມແຜນການທີ່ໄດ້ວາງໄວ້ແລ້ວ. ດັ່ງນັ້ນຜູ້ທີ່ນອນຄຶດວາງແຜນການກະທຳຄວາມຊົ່ວໃນເວລາກາງຄືນ ແລະເຮັດການຊົ່ວໃນເວລາກາງວັນຈຶ່ງບໍ່ແມ່ນໂຈນທັມມະດາສາມັນ ເພາະໂຈນທັມມະດາສາມັນນັ້ນຈະວາງແຜນການໃນເວລາກາງວັນແລະໄປລັກໃນເວລາກາງຄືນ, ສ່ວນໂຈນທີ່ມີກາກ່າວນີ້ຈຶ່ງໂຫດຮ້າຍໄປກວ່າໂຈນທົ່ວໄປ ເພາະລາວບໍ່ແມ່ນແຕ່ລັກເທົ່ານັ້ນລາວຍັງຍຶດເອົາທົ່ງນາແລະບ້ານເຮືອນຄົນອື່ນອີກ ໂດຍໃຊ້ກຳລັງແລະເລ້ຫລ່ຽມຫຼອກເອົາເຮືອນແລະທີ່ດິນຂອງຄົນອື່ນໃນເວລາກາງວັນແສດໆ.

ການວາງແຜນຊົ່ວນີ້ຂ້າພະເຈົ້າຍັງຈຳນິທານທີ່ພໍ່ເຄີຽເລົ່າໃຫ້ຟັງເວລາຍັງເປັນເດັກຢູ່. ພໍ່ເລົ່າວ່າ ມີຄວາຍໃຫຍ່ໂຕໜຶ່ງບໍ່ຕ້ອງການໃຫ້ມີຄວາຍຜູ້ອີກ ແລະຄວາຍແມ່ທຸກຕົວຈະຕ້ອງເປັນເມັຽຂອງຄວາຍໂຕນັ້ນໝົດ. ໃນຄວາມຄຶດຂອງລາວຄຶດວ່າຫາກມີຄວາຍຜູ້ໂຕອື່ນແລ້ວ ເມັຽຂອງລາວອາດຈະນອກໃຈເພາະລາວເອງກໍເປັນຄວາຍແກ່ແດ່ແລ້ວ. ດັ່ງນັ້ນເມື່ອ ລູກເກີດມາເປັນຄວາຍຜູ້ລາວຈຳຕ້ອງຂ້າຖິ້ມ. ຕໍ່ມາມີຄວາຍແມ່ຕົວນຶ່ງໃກ້ຈະເກີດລູກກໍເລີຽລັກໄປເກີດລູກຕົວຜູ້ທີ່ຖ້ຳ. ນັບຕັ້ງແຕ່ມື້ເກີດມາແມ່ຂອງຄວາຍຜູ້ໂຕນັ້ນກໍເວົ້າເຣື່ອງທຸກຢ່າງໃຫ້ລູກຟັງ ແລະສອນໃຫ້ລູກຝຶກຫັດການຕໍ່ສູ້ທຸກວັນ ເພື່ອຕໍ່ສູ້ພໍ່. ທຸກຄັ້ງທີ່ຄວາຍຜູ້ໂຕເປັນພໍ່ຜ່ານກາຍໄປຄວາຍຜູ້ໂຕລູກກໍສັງເກດການໂດຍລັກລີ້ເບິ່ງຢູ່ຫ່າງໄກ. ພໍເມື່ອ ຄວາຍຜູ້ໂຕພໍ່ຜ່ານໄປແລ້ວລາວກໍເອົາຕີນຂອງລາວໄປແທກໃສ່ຮອຍຕີນຂອງພໍ່ ເພື່ອຢາກຮູ້ວ່າຕົວເອງກັບພໍ່ມີຕີນໂຕທຽບເທົ່າກັນຢ່າງໃດ. ວັນນຶ່ງຮອຍຕີນຂອງລາວກໍມີຂນາດດຽວກັບຮອຍຕີນພໍ່ ລາວກໍປາກົດຕົວຕໍ່ສູ້ຄວາຍຜູ້ເປັນພໍ່ໂດຍບໍ່ຢ້ານກົວ ເພາະໄດ້ຝຶກຫັດມາພໍແລ້ວ. ດັ່ງນັ້ນທັງສອງຈຶ່ງປະທະກັນເປັນເວລາສົມຄວນ ເນື່ອງຈາກວ່າຄວາຍໂຕພໍ່ຂາດການຝຶກຫັດແລະບໍ່ຮູ້ວ່າຈະມີສັດຕຣູແຖມຍັງເປັນຄວາຍເຖົ້າແກ່ຊະຣາອີກ ດັ່ງນັ້ນຄວາຍຕົວລູກທີ່ວາງແຜນການຝຶກຫັດການຕໍ່ສູ້ທຸກວັນຈຶ່ງຂ້າຄວາຍໂຕພໍ່ຂອງຕົນເອງຕາຍຄາທີ່.

ຜູ້ທຳນວາຍມີກາໄດ້ທຳນວາຍເຖິງຜູ້ກັບໃຈແລະຜູ້ທີ່ເຊື່ອໄວ້ວາງໃຈໃນພຣະເຈົ້າວ່າພຣະເຈົ້າ *"ເຮົາຈະທ້ອນໂຮມພວກເຈົ້າໃຫ້ຢູ່ນຳກັນເໝືອນຝູງແກະຢູ່ໃນຄອກ ແລະເໝືອນຝູງສັດຢູ່ໃນທົ່ງຫຍ້າດິນແດນຂອງພວກເຈົ້າຈະເຕັມໄປດ້ວຍສຽງຂອງຂອງຝູງຊົນທັງຫລາຍ ພຣະເຈົ້າຈະໄຂຫົນທາງສຳລັບນຳເຂົາອອກໄປ ພວກເຂົາຈະທະລຸອອກໄປທາງປະຕູເມືອງ ແລະໄປຢ່າງມີອິສະລະ ພຣະຜູ້ເປັນເຈົ້າຈະເປັນເຈົ້າຊີວິດຂອງພວກເຂົາ ຈະນຳພາອອກໄປ* (ຂໍ້ 12-13). ນີ້

ແມ່ນຄຳສັນຍາຂອງພຣະເຈົ້າຫາກໃຜກັບໃຈພຣະອົງຈະຊ່ອຍໃຫ້ພົ້ນແລະໄປຢູ່ບ່ອນສຸຂເສີມ. ພຣະອົງປຽບຄົນກັບໃຈໃສ່ແກະໃນຄອກ ແລະເໝືອນສັດໃນທົ່ງຫຍ້າ, ມີຄວາມໝາຍວ່າມີຄວາມປອດພັຍແລະມີຫາອານການກິນຢ່າງດີ ພຣະອົງຈະເປັນພຣະເຈົ້າຂອງເຂົາ, ປົກປ້ອງຄຸ້ມຄອງເຂົາ ທັງເປັນຜູ້ນຳພາເຂົາໃນການດຳຣົງຊີວິດປະຈຳວັນດ້ວຍ.

<u>ຄຳຖາມ</u>

1. ປະຊາຊົນເຮັດການຊົ່ວຢ່າງໃດແດ່?

2. ພຣະເຈົ້າໃຊ້ໃຫ້ໃຜໄປຕັກເຕືອນ? ເພິ່ນຕັກເຕືອນຢ່າງໃດ?

3. ຜູ້ຕັກເຕືອນມີຄວາມຮູ້ສຶກຢ່າງໃດ?

4. ພຣະເຈົ້າຈະທຳລາຍບ່ອນທີ່ເຂົາໄຫວ້ພຣະທຽມແນວໃດ?

5. ຄົນທີ່ເຮັດການຊົ່ວຫ້ຽມໂຫດກວ່າໂຈນແນວໃດ?

6. ຜູ້ທີ່ກັບໃຈເຊົາເຮັດຊົ່ວພຣະເຈົ້າຈະເຮັດແນວໃດ?

# ບົດຮຽນທີ 12
# ນຳໄປໃນທາງຜິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 3
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 3
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນຮູ້ວ່າຜູ້ນຳສົມຄວນຈະນຳໄພ່ພົນຂອງພຣະເຈົ້າໄປທາງທີ່ຖືກ
**ຄຳຖາມເພື່ອການສຳຣວດ:** ທ່ານເປັນຜູ້ນຳແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕັດສິນໃຈໃຫ້ກາຍເປັນຜູ້ນຳທີ່ເຫມາະສົມກັບພຣະເຈົ້າຊົງເລືອກ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສິພຣະຫັດຂອງພຣະອົງໃນຮູບຮ່າງຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

ພຣະເຈົ້າມີພຣະປະສົງໃຫ້ຜູ້ປົກຄອງປະເທດຊາດບ້ານເມືອງມີຄວາມເປັນຫ່ວງເປັນໃຍຕໍ່ໄພ່ຟ້າຣາສດອນຫລາຍກວ່າ ບ້າອຳນາດແລະຊື່ສຽງ. ຜູ້ປົກຄອງເຫຼົ່ານີ້ຕ້ອງເພິ່ງພຣະເຈົ້າໃນການນຳປະເທດຊາດເພື່ອຄວາມຢູ່ເຢັນເປັນສຸກແລະຖືກຕ້ອງຕາມພຣະປະສົງຂອງພຣະອົງ ເມື່ອຜູ້ປົກຄອງນອກເສັ້ນທາງຂອງພຣະເຈົ້າຜົນຮັບກໍຄືຄວາມພິນາດມາສູ່ຕົນເອງ ແລະມາສູ່ປະເທດຊາດບ້ານເມືອງອີກດ້ວຍ.

ມີຍິງແກ່ຜິວດຳຄົນນຶ່ງເຄີຽເປັນຂ້າທາດຂອງຊາວຜິວຂາວໃນສມັຍຂ້າທາດ ແມ່ເຖົ້າຜິວດຳນີ້ມັກອ່ານພຣະກິດຕິຄຸນຫລາຍກວ່າມັກອ່ານບ່ອນອື່ນໃນພຣະຄັມພີໃຫມ່ ສ່ວນທີ່ລາວບໍ່ມັກອ່ານນັ້ນແມ່ນບັນດາ ຈ.ມ. ຂອງທ່ານ ອາຈານໂປໂລ ແລະຈະອ່ານ 1ໂກຣິນໂທ 13 ໃນບາງໂອກາດເທົ່ານັ້ນ. ທັງນີ້ເນື່ອງຈາກວ່າໃນເວລາລາວຍັງເປັນສາວຢູ່ນັ້ນໃນປະເທດອາເມຣິກາມີການແບ່ງແຍກຜິວພັນ ຄືຄົນຜິວດຳຕ້ອງເປັນຂ້າທາດສເມີ. ອາຈານຊາວຜິວດຳຈະບໍ່ມີໜ້າທີ່ເທສນາໃຫ້ຊາວຜິວຂາວຟັງ. ທຸກເທື່ອທີ່ນາຍຂອງລາວເລືອກເຊີນນັກເທດມາເທສນາຈະຕ້ອງແມ່ນອາຈານຄົນຂາວເທົ່ານັ້ນ ແລະສ່ວນຫລາຍອາຈານຜິວຂາວມັກຈະເອົາ ຈ.ມ. ຂອງໂປໂລມາເທດ ໂດຍສເພາະຢ່າງຍິ່ງແມ່ນ ເອເຟໂຊ *"ຝ່າຍ ພວກຂ້ອຍຂ້າ, ຈົ່ງເຊື່ອຟັງຄວາມນາຍຝ່າຍໂລກດ້ວຍຄວາມຢຳເກງຈົນຕົວສັ່ນ ດ້ວຍນໍ້າໃສໃຈຈິງເຫມືອນດັ່ງຟັງພຣະຄຣິດ "*(ເອເຟໂຊ 6:5). ຊຶ່ງບົດເທດສ່ວນຫລາຍແມ່ນແນໃສ່ຄົນຜິວດຳທີ່ເປັນຂ້າທາດໃຫ້ຍອມຟັງຜູ້ເປັນນາຍຊາວຜິວຂາວດ້ວຍນໍ້າໃສໃຈຈິງແລະຢຳເກງຈົນຕົວສັ່ນນັ້ນແມ່ນນໍ້າພຣະທັຍພຣະເຈົ້າ ແລະຂ້າທາດນັ້ນຈະໄດ້ຮັບພຣະພອນຫາກຍອມເຊື່ອຟັງແລະປະຕິບັດຕາມເຈົ້ານາຍຝ່າຍໂລກ.

**ນາຍປົກຄອງແບບຂົ່ມເຫັງຂ້າທາດ** (3:1-4)

ມີກາກ່າວຄຳທຳນວາຍເຖິງຜູ້ປົກຄອງແລະຜູ້ເປັນນາຍຊົນຊາດອິສຣາເອນໂດຍສະເພາະຢ່າງຍິ່ງແມ່ນກ່າວເຕືອນເຊື້ອສາຍຂອງຢາໂຄບຊຶ່ງເປັນຜູ້ປົກຄອງອິສຣາເອນຊຶ່ງອົງພຣະຜູ້ເປັນເຈົ້າໄດ້ແຕ່ງຕັ້ງໄວ້ເພື່ອປົກຄອງດ້ວຍຄວາມຍຸຕິທັມ ແຕ່ພວກເຂົາບໍ່ໄດ້ເຮັດຕາມທີ່ພຣະເຈົ້າຊົງສັ່ງ. ດ້ວຍເຫດນີ້ພຣະເຈົ້າຈຶ່ງສັ່ງໃຫ້ມີກາໄປກ່າວເຕືອນວ່າ *"ແຕ່ພວກເຈົ້າກຽດຊັງຄວາມດີ ແລະຮັກຄວາມຊົ່ວ ພວກເຈົ້າຂູດຣີດແລະທໍຣະມານໄພ່ພົນຂອງເຮົາຢ່າງທາຣຸນ ພວກເຈົ້າກັດກິນ ເນື້ອແລະລອກໜັງຂອງພວກເຂົາອອກ ຫັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆເໝືອນຊີ້ນຢູ່ໃນໝໍ້"* (ຂໍ້ 1-3). ຕາມທັມມະດາບຸກຄົນໃດທີ່ບໍ່ເຮັດຄວາມດີແລ້ວບຸກຄົນນັ້ນຈະຕ້ອງຖືກຮ້ອງວ່າຄົນບໍ່ມັກດີ ເມື່ອບໍ່ມັກດີກໍສະແດງ ວ່າບຸກຄົນນັ້ນຮັກຄວາມຊົ່ວເໝືອນດັ່ງມີກາໄດ້ກ່າວ.

ມີກາກ່າວວ່າ *ພວກເຈົ້າກັດກິນເນື້ອ ແລະລອກໜັງຂອງພວກເຂົາອອກ ຫັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆເໝືອນຊີ້ນຢູ່ໃນໝໍ້"* ນັ້ນມີຄຳປຽບທຽບໃນຣະຫວ່າງຄົນລ້ຽງແກະຄືຜູ້ລ້ຽງທີ່ດີຈະຫາຫຍ້າອ່ອນຫລືພາຝູງແກະໄປຍັງບ່ອນຫຍ້າຂຽວສົດ, ໄປບ່ອນທີ່ປອດພັຍແລະຍັງເຝົ້າເບິ່ງຝູງແກະໃຫ້ຢູ່ໂດຍປາສຈາກໝາປ່າມາກັດກິນ ແຕ່ຄົນລ້ຽງແກະຂຸມນີ້ບໍ່ເປັນເຊັ່ນນັ້ນຄືພວກເຂົາກັບກາຍເປັນໝາໃນໃຈໂຫດ ກັດກິນເນື້ອ ແລະລອກໜັງຂອງພວກເຂົາອອກຫັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆເໝືອນຊີ້ນຢູ່ໃນໝໍ້ທີ່ບໍ່ສາມາດຫລີກລ້ຽງຈາກປາກຂອງຜູ້ທີ່ຈະກິນຊີ້ນຕ່ອນນັ້ນໄດ້.

ມີກາປຽບທຽບປະຊົນເປັນເໝືອນຕົວແກະຂອງພຣະເຈົ້າທີ່ພຣະເຈົ້າມອບໃຫ້ເຊື້ອສາຍຂອງຢາໂຄບເປັນຜູ້ລ້ຽງດູເບິ່ງແຍງ ໃຫ້ເຂົາຢູ່ດ້ວຍກັນຢ່າງສງົບສຸກ ຫາກຕົວໃດກະທຳຜິດພຣະເຈົ້າກໍຊົງອານຸຍາດໃຫ້ລົງໂທດຕາມຜິດຂອງຄົນນັ້ນ. ດັ່ງນັ້ນໄພ່ພົນຂອງພຣະເຈົ້າຈຳຕ້ອງເຊື່ອຟັງຜູ້ປົກຄອງດ້ວຍຄວາມຢຳເກງຈົນຕົວສັ່ນເໝືອນດັ່ງ ຈ.ມ. ຂອງໂປໂລທີ່ໄດ້ກ່າວມາແລ້ວນັ້ນ. ຄຳວ່າຢຳເກງຈົນຕົວສັ່ນມີຄວາມໝາຍວ່າ ເຊື່ອຟັງ, ບໍ່ຖຽງຄວາມ ບໍ່ຕໍ່ສູ້ຫລືມີທ່າທີໃດໆ ດັ່ງນັ້ນແຫລະເມື່ອພຣະເຈົ້າແຕ່ງຕັ້ງເຊື້ອສາຍຢາໂຄບໃຫ້ປົກຄອງອິສຣາເອນ ປະຊາຊົນຈຶ່ງເຊື່ອຟັງແລະຢຳເກງຈົນຕົວສັ່ນຊຶ່ງເປັນການຖືກຕ້ອງ ສ່ວນຜູ້ເປັນນາຍປົກຄອງເມື່ອໄດ້ທ່າກໍປະຕິບັດກັບຂ້າທາດຈົນເກີນໄປຈົນເປັນເຫດໃຫ້ພຣະເຈົ້າຕ້ອງລົງໂທດ. ໃນບົດຮຽນນີ້ເຮົາເຂົ້າໃຈວ່າພຣະເຈົ້າຈະເປັນຜູ້ຈັດການກັບນາຍປົກຄອງແທນປະຊາຊົນບໍ່ມີກຳລັງທີ່ຈະໂຕ້ຕອບເຈົ້ານາຍປົກຄອງໄດ້. ແລະເມື່ອນັ້ນແຫລະພວກເຈົ້ານາຍປົກຄອງຈະຮ້ອງຫາພຣະເຈົ້າ ແຕ່ພຣະອົງຈະບໍ່ຟັງເຂົາ. *"ແລ້ວມີເວລານຶ່ງທີ່ພວກເຈົ້າຈະຮ້ອງຫາພຣະຜູ້ເປັນເຈົ້າ ແຕ່ພຣະອົງຈະບໍ່ຕອບພວກເຈົ້າ ພຣະອົງຈະບໍ່ຟັງການອ້ອນວອນຂອງພວກເຈົ້າ ກໍເພາະວ່າພວກເຈົ້າໄດ້ປະພຶດຊົ່ວ.* (ຂໍ້ 4).

## <u>ປະໃຫ້ເຂົາຢູ່ໃນຄວາມມືດ</u> (3:5-8).

ທ່ານມີກາກ່າວອອກມາຄ້າຍກັບວ່າທີ່ເປັນຜູ້ພິພາກສາທີ່ສານປະຊາຊົນຂອງອົງພຣະຜູ້ເປັນເຈົ້າ, ທ່ານກ່າວໃນລັກສະນະຜູ້ຮັບໃຊ້ພຣະເຈົ້າທີ່ເຕັມໄປດ້ວຍຣິດອຳນາດຊຶ່ງມາຈາກພຣະເຈົ້າໃນການນຳແລະຕັດສິນຄວາມໄພ່ພົນຂອງພຣະເຈົ້າ. ຄວາມຈິງແລ້ວຜູ້ຮັບໃຊ້ ພຣະເຈົ້າຍັງມີອຳນາດຈົນເຖິງປັດຈຸບັນນີ້ ແຕ່ອຳນາດທີ່ພຣະເຈົ້າໃຫ້ແກ່ຜູ້ຮັບໃຊ້ນັ້ນ ປະຊາຊົນຂອງພຣະອົງບໍ່ແນ່ໃຈເທົ່າໃດໃນການໃຊ້ອຳນາດຂອງຜູ້ຮັບໃຊ້ ເພາະມີຜູ້ຮັບໃຊ້ບາງຄົນກໍໃຊ້ອຳນາດຜິດຕໍ່ຫລັກພຣະຄັມພີ, ຜູ້ຮັບໃຊ້ຫລາຍທ່ານກໍໃຊ້ອຳນາດຖືກຫຼັກພຣະຄັມພີແທ້ ແຕ່ສະມາຊິກຮັບອາຫານແຂງບໍ່ໄດ້. ທ່ານອາດຈະສັງເກດເຫັນສິດຍາພິບານຂອງທ່ານເທສນາແຕ່ລະວັນອາທິດເພິ່ນເທສນາຢ່າງປະນີປະນອມຢ້ານວ່າເປັນການຮຸນແຮງຕໍ່ຜູ້ຟັງທີ່ຍັງອ່ອນຕໍ່ຄວາມເຊື່ອຢູ່.

ສ່ວນຜູ້ທຳນວາຍມີກາກ້າກ່າວສິນກັບຜູ້ທີ່ພຣະເຈົ້າຊົງເລືອກແທ້ໆ ເພິ່ນກ່າວປະນາມຜູ້ປົກຄອງ ແລະປະນາມຜູ້ປະກາດ ຈອມປອມທີ່ຄອຍຖ້າແຕ່ນາບຂູ່ເອົາເສິກສົງຄາມມາສູ່ຜູ້ທີ່ບໍ່ຟັງຄວາມພວກເຂົາ. *"ປະຊາຊົນໄດ້ຖືກຜູ້ປະກາດພຣະທັມ ຫຼອກລວງ ຄືພວກສັນຍາໃຫ້ຄວາມສງົບແກ່ຜູ້ທີ່ລ້ຽງພວກເຂົາ ແຕ່ນາບຂູ່ເອົາເສິກສົງຄາມມາສູ່ຜູ້ທີ່ບໍ່ຍອມປະຕິບັດ ຕາມ ສຳລັບພວກຜູ້ປະກາດພຣະທັມເຫຼົ່ານັ້ນ ພຣະຜູ້ເປັນເຈົ້າຊົງກ່າວແກ່ເຂົາວ່າ ກໍຍ້ອນພວກເຈົ້າໄດ້ນຳໄພ່ພົນຂອງ ເຮົາໄປໃນທາງຜິດ ພວກເຈົ້າຈະບໍ່ມີນິມິດຕໍ່ໄປ ແລະພວກເຈົ້າບໍ່ສາມາດທຳນວາຍເຣື່ອງໃດໆໄດ້ເລີຽ ພວກຜູ້ປະກາດ ພຣະທັມເອີຽ ຄວາມສຳຄັນພວກເຈົ້າກໍໃກ້ຈະໝົດແລ້ວ "* (ຂໍ້ 5-7).

ມີກາໄດ້ກ່າວປະນາມຜູ້ປະກາດພຣະທັມທີ່ນຳປະຊາຊົນໄປທາງທີ່ຜິດ ຫລາຍກວ່າປະນາມພວກເຈົ້ານາຍປົກຄອງ ປະເທດຊາດບ້ານເມືອງ. ທ່ານບໍ່ໄດ້ກ່າວວ່າພວກຜູ້ປະກາດພຣະທັມເຫຼົ່ານັ້ນບໍ່ໄດ້ຮັບນິມິດຊື່ງມາຈາກພຣະເຈົ້າ ພວກ ເຂົາໄດ້ຮັບນິມິດເຊັ່ນດຽວກັນກັບທ່ານມີກາ ແຕ່ພວກຜູ້ປະກາດພຣະທັມເຫຼົ່ານັ້ນບໍ່ໄດ້ປະກາດເຣື່ອງນິມິດໃຫ້ປະຊາຊົນ ຟັງ ພວກເຂົາຟັງຄວາມເຈົ້ານາຍຝ່າຍໂລກຫລາຍກວ່າ ແລະເກັບນິມິດໄວ້ກັບເຂົາເອງ ແລະປະປ່ອຍໃຫ້ໄພ່ພົນຂອງ ພຣະ ເຈົ້າຢູ່ໃນຄວາມມືດ ດັ່ງນັ້ນແຫລະມີກາຈຶ່ງທຳນວາຍວ່າ *ພວກເຈົ້າຈະບໍ່ມີນິມິດຕໍ່ໄປ ແລະພວກເຈົ້າບໍ່ສາມາດທຳ ນວາຍເຣື່ອງໃດໆໄດ້ເລີຽ* (ຂໍ້ 6). ມີຄວາມໝາຍວ່າອຳນາດໃນການທຳນວາຍຂອງຜູ້ທຳນວາຍທີ່ບໍ່ກ່າວໃຫ້ປະຊາ ຊົນຟັງນັ້ນຈະບໍ່ໄດ້ຮັບນິມິດໃຫ້ທຳນວາຍອີກຕໍ່ໄປ ເພາະຜູ້ທຳນວາຍເຫຼົ່ານັ້ນບໍ່ໃຊ້ອຳນາດໃນການປະກາດເຣື່ອງທີ່ພຣະ ເຈົ້າໃຫ້ນິມິດແກ່ເຂົາ.

ມີກາກ່າວໃນຂໍ້ 8 ວ່າ *"ແຕ່ສຳລັບຂ້າພະເຈົ້າແລ້ວ ຂ້າພະເຈົ້າເຕັມໄປດ້ວຍພຣະວິນຍານຂອງອົງພຣະຜູ້ເປັນເຈົ້າ "* ມີຄວາມໝາຍວ່າຂ້າພະເຈົ້າໄດ້ຮັບການຊົງເປີດເຜີຽໂດຍພຣະວິນຍານອົງດຽວກັນ ແຕ່ມີກາໄດ້ກ່າວຕາມທີ່ພຣະເຈົ້າ ຊົງສັ່ງໃຫ້ກ່າວ, ສ່ວນພວກຜູ້ປະກາດຜູ້ອື່ນບໍ່ໄດ້ກ່າວເພາະພວກເຂົາອາສັຍກຳລັງເຫື່ອແຮງ ແລະຄວາມຮູ້ຂອງຕົນ ແລະການຢູ່ກິນເພື່ອລ້ຽງປາກຂອງຕົນຈຶ່ງບໍ່ກ້າກ່າວສິ່ງພຣະເຈົ້າຊົງສັ່ງ.

**<u>ນຳປະຊົນໄປສູ່ທາງຫາຍຍະນະ</u>** ( 3: 9-12).

ຫລັງຈາກມີກາກ່າວກັບຜູ້ປະກາດພຣະທັມແລ້ວທ່ານກໍກັບໄປກ່າວກັບຜູ້ປົກຄອງບ້ານເມືອງອີກ. *"ບັນດາຜູ້ປົກຄອງ ອິສຣາເອນເອີຍ ຈົ່ງຟັງຂ້າພະເຈົ້າເຖີ້ນ ພວກເຈົ້າກຽດຊັງຄວາຍຸຕິທັມແລະບ່ຽນຄວາມຊອບທັມມາເປັນອະທັມ ພວກ ເຈົ້າສ້າງເຢຣູຊາເລັມ ເມືອງຂອງພຣະເຈົ້າຂື້ນມາດ້ວຍການຄາດຕະກັມແລະດ້ວຍຄວາມອະທັມ, ບັນດາຜູ້ປົກຄອງ ເມືອງກໍປົກຄອງເຫັນແກ່ສິນບົນ ບັນດາພວກປະໂລຫິດກໍໃຊ້ກົດໝາຍເພື່ອເຫັນແກ່ສິນຈ້າງຣາງວັນ ບັນດາຜູ້ປະ ກາດພຣະທັມກໍຖວາຍດ້ວຍເຫັນແກ່ເງິນ "* (ຂໍ້ 9-11). ມີກາເຕືອນບັນດາຜູ້ປົກຄອງເມືອງ, ເຕືອນພວກປະໂລຫິດ ໃຊ້ກົດຫໝາຍບີບບັງຄັບປະຊາຊົນເພື່ອຈະໄດ້ຮັບຄ່າຈ້າງຣາງວັນ, ແລະເຕືອນບັນດາຜູ້ປະກາດພຣະທັມທີ່ນຳເຄື່ອງ ຖວາຍຂອງຜູ້ມີເງິນເທົ່ານັ້ນໄປຖວາຍອົງພຣະຜູ້ເປັນເຈົ້າ. ຄືພວກເຂົາປະປ່ອຍໃຫ້ຄົນຮັ່ງມີກາຍເປັນຜູ້ໃຊ້ສິດອຳນາດ ໃນພຣະວິຫານຂອງພຣະເຈົ້າ. ດ້ວຍເຫດນີ້ເວລານີ້ສິດຍາພິບານທັງຫລາຍຄວນຣະມັດຣະວັງຢ່າປ່ອຍໃຫ້ຜູ້ຖວາຍ ຫລາຍຫລືຄົນຮັ່ງມີໃນໂລກນີ້ເປັນຜູ້ໃຊ້ສິດໃນພຣະວິຫານພຣະເຈົ້າ. ບັນດາຜູ້ຮັບໃຊ້ພຣະເຈົ້າສົມຄວນຈະໃຊ້ສິດຢ່າງ ຖືກຕ້ອງຕາມຫລັກພຣະຄັມພີເຕັມສ່ວນໃນການນຳພາປະຊາຊົນຂອງພຣະເຈົ້າໃຫ້ປະຕິບັດທຸກຢ່າງຕາມພຣະເຈົ້າ ຊົງສັ່ງ.

ພວກເຈົ້ານາຍປົກຄອງເຢຣູຊາເລັມ ໄດ້ພາກັນສົມທົບຮ່ວມແຮງກັນກົດຂີ່ຂົ່ມເຫັງປະຊາຊົນໂດຍການນາບຂູ່ເຣື່ອງຂອງ ກົດຣະບຽບບ້ານເມືອງ, ພວກເຂົາຮ່ວມມືກັບພວກຜູ້ປະກາດພຣະທັມ ແລະພວກປະໂລຫິດເຮັດຜິດຕໍ່ຄຳສັ່ງຂອງພຣະ

ເຈົ້າ, ມີກາກ່າວວ່າພວກຜູ້ນຳເຫຼົ່ານີ້ໄດ້ນຳພາປະຊາຊົນໄປຍັງບ່ອນທາຍຍະນະນັ້ນເອງ. ເຂົາພາກັນອ້າງວ່າພຣະຜູ້ເປັນເຈົ້າຢູ່ກັບເຂົາແລະນຳພາເຂົາ ພວກເຂົາຈະບໍ່ຢ້ານພັຍອັນຕະຣາຍໃດໆ *"ພຣະຜູ້ເປັນເຈົ້າໄດ້ສະຖິດຢູ່ນຳເຣົາແມ່ນບໍ່? ບໍ່ມີພັຍອັນຕະລາຍໃດໆຈະມາເຖິງພວກເຣົາດອກ"* (ຂໍ້ 11).

ພວກເຂົາພາກັນຕົວະປະຊາຊົນວ່າພວກເຂົາມີພຣະເຈົ້າແລ້ວຈະບໍ່ມີອັນຕະລາຍໃດໆ ຄວາມຈິງແລ້ວພຣະເຈົ້າໄດ້ໃຊ້ເຂົາແທ້ ແຕ່ເມື່ອເຂົາບໍ່ປະຕິບັດຕາມຄຳສັ່ງແລະຍັງພາປະຊາຊົນຂອງພຣະອົງໃຫ້ຫລົງອີກ ພຣະເຈົ້າຈຶ່ງບໍ່ຊ່ອຍເຂົາ ແລະຍັງປ່ອຍປະເຂົາດັ່ງມີກາກ່າວວ່າ *"ຍ້ອນພວກເຈົ້າ ເມືອງຊີໂອນຈະຖືກໄຖເໝືອນດັ່ງໄຖນາ ເຢຣູຊາເລັມຈະກາຍເປັນກອງສິ່ງຫັກເພພັງແລະພູເຂົາທີ່ວິຫານຈະເປັນປ່າ* (ຂໍ້ 12). ເຣົາທັງຫລາຍຄວນພິຈະຣະນາຄຳເວົ້າຂອງມີກາທີ່ກ່າວແກ່ເຈົ້ານາຍປົກຄອງພວກຜູ້ປະກາດພຣະທັມ ແລະພວກປະໂລຫິດໃນເວລານັ້ນມາທຽບໃສ່ໂບດຂອງເຣົາໃນເວລານີ້ເບິ່ງມີສິ່ງໃດແດ່ເຣົາສົມຄວນຈະແກ້ໄຂແລະປັບປຸງໂບດຂອງເຣົາ.

<u>ຄຳຖາມ:</u>

1. ເຮັດແນວໃດໂບດຂອງເຣົາຈະຈະເຣີນກວ່ານີ້ ? ຫລືເຮັດແນວໃດຈຶ່ງຈະສາມາດຮັບຄຳເທສນາທີ່ໜັກແໜ້ນໄດ້?

2. ຖານະທີ່ເຣົາເປັນຜູ້ປະກາດພຣະທັມກັນທຸກຄົນເຣົາໄດ້ປະກາດຕາມທີ່ພຣະເຈົ້າຊົງສັ່ງບໍ່? ຫລືເຣົາເກັບໄວ້ເໝືອນຜູ້ປະກາດທີ່ມີກາໄດ້ກ່າວປະນາມນັ້ນ

3. ຄຳເວົ້າຂອງມີກາສອນຫຍັງເຣົາແດ່?

4. ຍາມໃດເຣົາຈະເປັນຄືມີກາໄດ້?

## ບົດຮຽນທີ 13
## ສັນຕິສຸກທີ່ມາຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 4:1-8; 5:2-5

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 4-5

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນຮູ້ວ່າພຣະເຈົ້າເປັນຜູ້ໂຜດປະທານສັນຕິສຸກ.

**ຄຳຖາມເພື່ອການສຳຣວດ:** ສັນຕິສຸກມີແທ້ບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າສັນຕິສຸກທີ່ພຣະເຈົ້າໂປດປະທານນັ້ນຂ້າພະເຈົ້າຈຳຕ້ອງວາງໃນໃຈພຣະອົງກ່ອນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະຫັດຂອງພຣະອົງໃນລັກສະນະຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

**ຄຳນຳ**

ພຣະເຈົ້າມີພຣະປະສົງໃຫ້ໄພ່ພົນຂອງພຣະອົງທຸກຄົນຢູ່ດ້ວຍກັນໂດຍສັນຕິສຸກ, ແລະເຊື່ອຟັງຄຳສັ່ງສອນຂອງພຣະອົງທຸກປະການເພື່ອສັນຕິສຸກຊຶ່ງມາຈາກພຣະອົງນັ້ນຈະຄຸ້ມຄອງຈິດໃຈຜູ້ທີ່ເຊື່ອຟັງພຣະອົງສເມີໄປ. ອີກປະການນຶ່ງການຢູ່ດ້ວຍກັນໂດຍຄວາມສງົບສຸກຍັງເປັນຄວາມປາຖນາຂອງມະນຸດທັງປວງ ເຖິງປານນັ້ນກໍຍັງມີເສິກສົງຄາມ ແລະຄວາມບໍ່ຖືກຕ້ອງປອງດອງກັນຢູ່ ເພາະຕ່າງຄົນຕ່າງອາສັຍກຳລັງສະຕິປັນຍາຂອງຕົນເອງ. ແມ່ນແຕ່ຄົນໃນໂບດດຽວກັນກໍບໍ່ໄດ້ຢູ່ດ້ວຍກັນຢ່າງສັນຕິສຸກ, ຄຳຖາມມີຢູ່ວ່າເປັນດ້ວຍເຫດໃດຄຣິສຕຽນຈຶ່ງບໍ່ຢູ່ດ້ວຍກັນຕາມພຣະປະສົງພຣະເຈົ້າ?.

**ການຕັດສິນລົງໂທດບໍ່ແມ່ນສິ່ງທີ່ພໍພຣະທັຍ?** (4:1-8).

ພຣະເຈົ້າບໍ່ຢາກຕັດສິນລົງໂທດມະນຸດແຕ່ປະການໃດເລີຽແລະພຣະອົງຊົງໂຜດປະທານຄວາມລອດພົ້ນເປັນການສຳຄັນກວ່າການລົງໂທດ ດ້ວຍເຫດນີ້ພຣະອົງຈຶ່ງໃຫ້ໂອກາດແກ່ມະນຸດເຮົາໄດ້ກັບໃຈເຊື່ອໃນພຣະອົງກ່ອນວັນພິພາກສາມາເຖິງ, ດັ່ງນັ້ນໃຜກໍຕາມຫາກກັບໃຈເຊື່ອໃນພຣະອົງການຕັດສິນລົງໂທດກໍຈະບໍ່ມີສຳລັບຄົນນັ້ນ. ຜູ້ທຳນວາຍມີກາໄດ້ກ່າວເຖິງໃນອານາຄົດພຣະວິຫານກໍຈະເຣີນຮຸ່ງເຮືອງ ທ່ານກ່າວວ່າ *"ພູເຂົາບ່ອນພຣະວິຫານ ຕັ້ງຢູ່ຈະເປັນພູເຂົາທີ່ສູງສຸດ ໃນຈຳນວນພູເຂົາທັງຫລາຍຊົນຊາດຈະຫຼັ່ງໄຫຼມາຫາທີ່ນັ້ນ ແລະປະຊາຊົນຂອງຊົນຊາດ ເຫຼົ່ານັ້ນຈະເວົ້າວ່າ ມາເທາະເຮົາ ພາກັນໄປຍັງພູເຂົາຂອງພຣະຜູ້ເປັນເຈົ້າ ຂຶ້ນໄປຍັງພຣະວິຫານຂອງພຣະເຈົ້າອິສຣາເອນພວກເຮົາ*

*ຈະໄດ້ຮູ້ສິ່ງທີ່ພຣະອົງຕ້ອງການໃຫ້ພວກເຮົາເຮັດ ພວກເຮົາຈະເດີນໄປຕາມຫົນທາງທີ່ພຣະອົງໄດ້ຊົງ ເລືອກໄວ້"* (ຂໍ້ 1-2ກ). ການທຳນວາຍຂອງມີກາເປັນຫນ້າຊົມຊື່ນຍິນດີຫລາຍ (ຄຳວ່າໃນຄາວສຸດທ້າຍພຣະຄັມພີ ລາວເຮົາ ຂຽນໄວ້ວ່າ *"ໃນຍຸກຕໍ່ມາ "*) ແປວ່າຄາວສຸດທ້າຍທີ່ພູເຂົາຊີໂອນທີ່ສູງຈະມີຜູ້ຄົນຫລັ່ງໄຫຼມາຫາທີ່ນັ້ນເຫມືອນດັ່ງ ສາຍນ້ຳທີ່ໄຫຼມາໂຮມໃນບ່ອນດຽວ.

ສິ່ງທີ່ຫນ້າຄິດນັ້ນຄື; ສາຍນ້ຳທີ່ແທ້ຈິງຈະບໍ່ໄຫລຈາກຕ່ຳໄປຫາສູງຈັກເທື່ອນອກຈາກມັນຈະໄຫລຈາກສູງໄປຫາຕ່ຳ ສ່ວນຄົນຜູ້ທີ່ພຣະເຈົ້າເມດຕາປານີນັ້ນຈະພາກັນຫຼັ່ງໄຫຼຈາກທີ່ຕ່ຳໄປຫາສູງຄືພຣະວິຫານຂອງພຣະອົງເທິງພູເຂົາ. ພວກເຂົາຈະຊັກຊວນກັນໄປຍັງພູເຂົາເອງເຂົາຈະກ່າວວ່າ *"ມາເທາະເຮົາພາກັນໄປຍັງພູເຂົາຂອງພຣະຜູ້ເປັນເຈົ້າຂຶ້ນ ໄປຍັງພຣະວິຫານຂອງພຣະເຈົ້າອິສຣາເອນ "* (ຂໍ້ 2ກ). ບາງເທື່ອເຮົາອາດຈະແປກໃຈວ່າຄົນພວກນັ້ນພາກັນຫຼັ່ງໄຫຼ ໄປເຮັດຫຍັງຢູ່ທີ່ພູສູງນັ້ນ? ໃນຂໍ້ 2ຂ ບອກວ່າພວກເຂົາພາກັນຊອກສແວງຫາຄຳສອນຂອງອົງພຣະຜູ້ເປັນເຈົ້າ *"ພວກ ເຮົາຈະໄດ້ຮູ້ສິ່ງທີ່ພະອົງຕ້ອງການໃຫ້ພວກເຮົາເຮັດ ພວກເຮົາຈະເດີນໄປໃນຫົນທາງທີ່ພຣະອົງຊົງເລືອກໄວ້* (ຂໍ້ 2ຂ).

ສ່ວນຂໍ້ 3-5 ມີກາໄດ້ບອກວ່າພຣະເຈົ້າຈະນຳຄວາມສງົບສຸກມາສູ່ປະເທດຊາດບ້ານເມືອງຄື *"ພຣະອົງຈະໄກ່ເກັ່ຽ ການຜິດຖຽງກັນໃນຣະຫວ່າງຊົນຊາດ ແລະເປັນຜູ້ພິພາກສາຄະດີ; ພວກເຂົາຈະຕີດາບໃຫ້ເປັນຫນາກສິບໄຖແລະຈະ ຕີຫອກໃຫ້ເປັນມີດຕັດກິ່ງໄມ້ ຊົນຊາດທັງຫລາຍຈະບໍ່ເຮັດເສິກຕໍ່ສູ້ກັນອີກຕໍ່ໄປ; ທຸກຄົນຢູ່ໃນຄວາມສງົບສຸກ; ແຕ່ລະ ຊົນຊາດນະມັສການ ແລະເຊື່ອຟັງພຣະຜູ້ເປັນເຈົ້າຂອງພວກເຮົາຕະຫຼອດໄປເປັນນິດ.* (ຂໍ້ 3-5). ພຣະເຈົ້າຈະຊົງໄກ່ ເກັ່ຽຄວາມຂັດເຄືອງໃຈກັນແລະພຣະອົງຈະຕັດສິນນາງຊາດ ແລະເຂົາກໍຈະກັບໃຈຢູ່ດ້ວຍກັນໂດຍສັນຕິສຸກຈົນເອົາ ດາບທີ່ເປັນອາວຸດຂ້າຟັນກັນນັ້ນມາດັດແປງເປັນສິບໄຖເພື່ອທຳມາຫາກິນ ແຕ່ຊົນຊາດຈະນະມັສການ ພຣະເຈົ້າແຕ່ ພຽງອົງດຽວເທົ່ານັ້ນ.

*"ເມື່ອຍາມຂອງເຮົາມາຮອດແລ້ວເຮົາຈະທ້ອນໂຮມໄພ່ພົນຂອງເຮົາ "* (ຂໍ້ 6ກ) ຫມາຍເຖິງເວລາພຣະເຢຊູສະເດັດມາ ບັງ ເກີດໃນໂລກພ້ອມທັງຂ່າວປະເສີດຂອງພຣະອົງ ພຣະອົງຈະທ້ອນໂຮມຜູ້ທີ່ເຊື່ອແຕ່ລະປະເທດ, ແຕ່ລະເມືອງໃຫ້ ເປັນ ອັນນຶ່ງອັນດຽວກັນແລະຕັ້ງຜູ້ທີ່ເຊື່ອທັງຫມົດຂຶ້ນໃຫມ່ *"ແຕ່ເຮົາຈະຕັ້ງປະເທດໃຫມ່ ແລະຈະກາຍເປັນປະເທດ ທີ່ຍິ່ງໃຫຍ່ "* (ຂໍ້ 7ກ). ຫມາຍຄວາມວ່າຈະມີຜູ້ຄົນເຊື່ອຢ່າງຫລວງຫລາຍເຫມືອນດວງດາວໃນທ້ອງຟ້າ ແລະເຫມືອນ ເມັດຊາຍໃນທະເລຊາຍ ແລະພຣະອົງຈະປົກຄອງຕລອດການ. ຂໍ້ 6-8 ມີຄວາມຫມາຍວ່າການຊົງໄຖ່ນັ້ນຂຶ້ນຢູ່ກັບ ພຣະ ເຈົ້າເທົ່ານັ້ນ.

**<u>ການທຳນວາຍຕໍ່</u>** 4:9-5:1

ມີກາທຳນວາຍວ່າຊົນຊາດທັງຫລາຍຈະພາກັນຮ່ວມມືຕໍ່ສູ້ເຢຣູຊາເລັມ, ໃນຂະນະທີ່ເຂົາຕໍ່ສູ້ນັ້ນຄົນໃນເຢຣູຊາເລັມຈະ ພາກັນຮ້ອງໄຫ້ຄວນຄາງຊອກສແວງຫາກະສັດເປັນຜູ້ປຶກສາແລະສັ່ງການ ແຕ່ພວກເຂົາລືມຄິດໄປວ່າພຣະເຈົ້າຊົງ ເປັນຜູ້ເຝົ້າເບິ່ງໄພ່ພົນຂອງພຣະອົງຢູ່ສເມີ (ຂໍ້ 8). ພວກກະສັດໃນໂລກນີ້ບໍ່ສາມາດຢູ່ເປັນຜູ້ປົກຄອງພວກເຂົາຕລອດ ໄປ, ພວກອິສຣາເອນຈຳຕ້ອງຖືກຫນີໄປຢູ່ໃນທົ່ງນາ ແລະໄປຍັງກຸງບາບີໂລນ ເພາະວ່າໃນກຸງບາບີໂລນນັ້ນພຣະເຈົ້າ ຈະຊົງຊ່ອຍເຂົາໃຫ້ ພົ້ນຈາກອຳນາດຂອງສັດຕຣູ (ຂໍ້ 10).

ເມື່ອໄພ່ພົນຂອງພຣະເຈົ້າໄປເຖິງກຸງບາບີໂລນແລ້ວ *"ພຣະຜູ້ເປັນເຈົ້າຊົງກ່າວວ່າ ປະຊາຊົນເຢຣູຊາເລັມເອີຍ "* (ຂໍ້ 13ກ) (ພາສາເດີມຈະເວົ້າວ່າ ລູກຂອງຊີໂອນເອີຍ ມີຄວາມຫມາຍວ່າພູຊີໂອນແມ່ນເຢຣູຊາເລັມໃນເວລານີ້). *ຈົ່ງໄປ*

*ລົງໂທດສັດຕຣູຂອງເຈົ້າສາ ເຮົາຈະເຮັດໃຫ້ພວກເຈົ້າແຂງແຮງເຫມືອນດັ່ງງົວກະທິງທີ່ມີເຂົາເຫລັກແລະມີຕີນໂລຫະ ພວກເຈົ້າຈະປຣບທຳລາຍຫລາຍປະເທດໃຫ້ມຸ່ນ ແລະຊັບສົມບັດຂອງເຂົາຈະເປັນຂອງເຮົາ ສິ່ງເຫລົ່ານັ້ນຈະຖືກຖວາຍໃຫ້ແກ່ພຣະຜູ້ເປັນເຈົ້າ ແຫ່ງພິພົບທັງຫມົດ (ຂໍ້ 13ຂ).* ຄຳທີ່ມີກາກ່າວນັ້ນມີຄວາມໝາຍວ່າ ປະຊົນຊົນຂອງ ເຮົາເອີຍ ຈົ່ງລຸກຂຶ້ນ ເພາະພຣະເຈົ້າຈະເຮັດໃຫ້ເຂົາມີກຳລັງໃນຂະນະທີ່ພວກສັດຕຣູຫລາຍປະເທດກຳລັງຂົ່ມເຫັງຢູ່ ພຣະເຈົ້າຈະເຮັດໃຫ້ປະຊາຊົນຂອງພຣະອົງມີກຳລັງແຂງແຮງເຫມືອນງົວກະທິງ ແລະມີເຂົາເຫລັກທີ່ສາມາດທົນທານກວ່າເຂົາງົວທັມມະດາ, ແລະມີຕີນໂລຫະ ໝາຍຄວາມວ່າຕີນເປັນເຫມືອນທອງສຳຣິດ ເພື່ອຈະປຣບສັດຣູໃຫ້ແຕກມຸ່ນທະລາຍ. ໃນວັນສຸດທ້າຍຂອງຜູ້ທີ່ວາງໃຈໃນພຣະອົງ ກໍຈະເປັນເຫມືອນຊົນຊາດອິສຣາເອນນີ້ແທ້ຫາກເຮົາຍອມໃຫ້ພຣະເຈົ້າເປັນຜູ້ນຳພາເຮົາທຸກປະການ.

<u>ມີກາທຳນວາຍການສະເດັດມາຂອງພຣະເຢຊູຄຣິດ</u> (5:2-5)

ມີກາກ່າວວ່າ *"ເບັດເລເຮັມ ເອຟຣາທາເອີຍ "* (ຂໍ້ 5ກ) "<u>Bethlehem meaning "House of Bread"</u> and <u>Ephratah "fruitful."</u> (From Ryrie Commentary ) ເອຟຣາທາ ເປັນຊື່ເດີມຂອງເບັດເລເຮັມ

ເຮົາຈະເຫັນໃນ ປະຖົມມະການ 35:19 ແລະເມືອງນີ້ເປັນເມືອງທີ່ກະສັດດາວິດເກີດ (1ຊາມູເອນ 16:1). ທ່ານມີກາກ່າວຕໍ່ໄປວ່າ *"ເຈົ້າເປັນເມືອງນ້ອຍເມືອງນຶ່ງໃນເຂດຢູດາ ແຕ່ວ່າ ເຮົາຈະແຕ່ງໃຫ້ມີຜູ້ນຶ່ງມາປົກຄອງພວກອິສຣາເອນ ຫນໍ່ເຊື້ອສາຍຂອງເພິ່ນຈະມາຈາກສມັຍເດີມ "* (ຂໍ້ 2). ຄຳທີ່ມີກາໄດ້ກ່າວນັ້ນເປັນຄຳສັນຍາຂອງພຣະເຈົ້າຈະໂຜດປະທານພຣະບຸດຂອງພຣະອົງລົງມາເກີດເພື່ອໂຜດໄພ່ພົນຂອງພຣະອົງໃຫ້ພົ້ນ. ທ່ານມີກາໄດ້ບອກພວກປະຊາຊົນ ອີກວ່າ ພຣະເຈົ້າຈະປະໄພ່ພົນຂອງພຣະອົງໃຫ້ສັດຣູຂົ່ມເຫັງ ຈົນເຖິງເວລາພຣະເຢຊູຄຣິດມາບັງເກີດ. *"ພຣະເຈົ້າຈະປະໄພ່ພົນຂອງພຣະອົງໃຫ້ສັດຣູ ຈົນເຖິງເວລາທີ່ຍິງຖືພາອອກລູກໄດ້ຜູ້ຊາຍ "* (ຂໍ້ 3ກ). ດັ່ງໃນພຣະທັມເອຊາຢາໄດ້ກ່າວໄວ້ວ່າ *"ດ້ວຍເຫດນີ້ພຣະຜູ້ເປັນເຈົ້າຈຶ່ງຈະຊົງສະແດງຫມາຍສຳຄັນໃຫ້ເຈົ້າດັ່ງນີ້ ຄືຍິງສາວຜູ້ນຶ່ງຈະຖືພາແລະອອກລູກມາເປັນຜູ້ຊາຍ ນາງຈະຕັ້ງຊື່ລູກນີ້ວ່າ "ເອມານູເອນ "* (ເອຊາຢາ 7:14).

*"ເວລາຜູ້ນັ້ນມາ"* (ໝາຍເຖິງເວລາພຣະເຢຊູສະເດັດມາ) *ເພິ່ນຈະປົກຄອງປະຊາຊົນດ້ວຍຣິດອຳນາດທີ່ມາແຕ່ພຣະເຈົ້າ ແລະດ້ວຍສະງ່າຣາສີຂອງພຣະອົງ ປະຊາຊົນຂອງເພິ່ນຈະຢູ່ຢ່າງປອດພັຍ* (ຂໍ້ 4) ສັນຕິສຸກແລະຄວາມປອດພັຍທີ່ມີກາໄດ້ກ່າວນີ້ປອດພັຍກວ່າດາວິດນັກລ້ຽງແກະປົກປ້ອງແກະທຸກຕົວທີ່ເພິ່ນລ້ຽງ ແລະສັນຕິສຸກທີ່ມີກາກ່າວນີ້ບໍ່ເຄີຍມີມາກ່ອນເລີຍ. ພຣະເຢຊູຊົງກ່າວວ່າ *"ຄວາມສງົບສຸກຂອງເຮົາ ເຮົາປະທານໃຫ້ແກ່ທ່ານທັງຫລາຍ ຝ່າຍເຮົາໃຫ້ແກ່ທ່ານບໍ່ເຫມືອນໂລກໃຫ້ (ໂຢຮັນ 14:27).* ທັງນີ້ກໍເພາະວ່າເມື່ອພຣະອົງສະເດັດມາແລ້ວເຮົາທັງຫລາຍກໍຈະໄດ້ຮັບສັນຕິສຸກທີ່ມາຈາກພຣະເຈົ້າ ແລະການສະເດັດກັບມາຄັ້ງທີສອງຂອງພຣະເຢຊູນັ້ນພວກ ອາວຸດສົງຄາມທຸກຢ່າງກໍຈະຖືກທຳລາຍຈົນຫມົດກ້ຽງ ແລະໃນເວລານັ້ນແຫລະຜູ້ທີ່ຢູ່ໃນພຣະອົງກໍຈະພົບສັນຕິສຸກກັບພຣະເຈົ້າໃນເມືອງຟ້າ. ໃນພຣະທັມມັດທາຍກ່າວວ່າ *"ຜູ້ໃດສ້າງຄວາມສງົບສຸກກໍເປັນສຸກ ເພາະພຣະອົງຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ "* (ມັດທາຍ 5:9). ດ້ວຍເຫດນີ້ເຮົາທັງຫລາຍຈຶ່ງເປັນສຸກເພາະເຮົາເປັນຜູ້ສ້າງຄວາມສງົບສຸກໂດຍບໍ່ມີໃຈຂົ່ມຂີ່ແກ່ຜູ້ໃດ ແລະການທີ່ເຮົາມີໃຈເຊັ່ນນີ້ບໍ່ແມ່ນພວກເຮົາເຮັດເອົາເອງ ແຕ່ເປັນຍ້ອນການສະເດັດມາຂອງພຣະເຢຊູໃນໂລກຊຶ່ງນຳຄວາມສງົບສຸກມາສູ່ຈິດ ໃຈຂອງເຮົາທັງຫລາຍ. ດວງໃຈທຸກດວງທີ່ຍອມຮັບເອົາພຣະອົງມາເປັນພຣະຜູ້ຊ່ອຍໃຫ້ລອດໃນຊີວິດຂອງຕົນແລ້ວ ດວງໃຈນັ້ນກໍຈະພົບກັບຄວາມສຸກອັນແທ້ຈິງ.

<u>ຄຳຖາມ</u>

1. ພຣະເຈົ້າມີພຣະປະສົງຕໍ່ໄພ່ພົນຂອງພຣະອົງໃຫ້ຢູ່ດ້ວຍກັນຢ່າງໃດ?

2. ດ້ວຍເຫດໃດໄພ່ພົນຂອງພຣະອົງຈຶ່ງມີຄວາມຂັດແຍ່ງກັນ?

3. ໃນຣະຫວ່າງການຕັດສິນລົງໂທດແລະການຊົງໂຜດໃຫ້ພົ້ນພຣະເຈົ້າຊົງເຫັນອັນໃດສຳຄັນກວ່າ?

4. ໃນຄາວສຸດທ້າຍຄົນຈະລັ່ງໄຫຼເຂົ້າຫາພຣະອົງດັ່ງສາຍນໍ້າໄຫລ ແມ່ນພວກຄົນທັງຫລາຍລັ່ງໄຫຼໄປເຮັດຫຍັງ?

5. ໃນເວລານີ້ເຮົາທັງຫລາຍລັ່ງໄຫຼກັນມາໂບດແມ່ນເຮົາມາເຮັດຫຍັງ?

6. ເວລາພຣະເຍຊູສະເດັດມາເພິ່ນຈະເຮັດຫຍັງແດ່?

7. ເວລາພຣະເຢຊູສະເດັດມາປະຊາຊົນຈະຮັບຄວາມສງົບສຸກຢ່າງໃດ?

8. ພຣະເຢຊູຈະປົກຄອງໄພ່ພົນຂອງພຣະອົງຢ່າງໃດ?

# ບົດຮຽນທີ 14
# ພຣະເຈົ້າເອົາເຣື່ອງອິສຣາເອນ

---

**ພຣະຄັມພີສຳລັບບົດຮຽນນີ້:** ມີກາ 6:1-8

**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ມີກາ 6--7

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຕອບພຣະຄຸນຂອງພຣະອົງເຮົາທັງຫລາຍຄວນຈະສະແດງຄວາມເມດຕາກະຣຸນນາແກ່ຜູ້ອື່ນ

**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຫວັງສິ່ງໃດຈາກເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສັນຣະສູດຕົນເອງເປັນຄົນເມດຕາກະຣຸນນາແກ່ຜູ້ອື່ນ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສິພຣະທັດຂອງພຣະອົງໃນຮູບຮ່າງຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

## ຄຳນຳ

ໃນບົດ 6:1 ໃນພຣະຄັມພີລາວອາດຈະເຂົ້າໃຈຍາກແດ່ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍອະທິບາຍດັ່ງນີ້; ຈົ່ງຟັງສິ່ງອົງພຣະຜູ້ເປັນ ເຈົ້າຊົງກ່າວ ( ແມ່ນຄຳເວົ້າຂອງມີກາ ຊຶ່ງເປັນຄຳນຳກ່ອນຄຳເວົ້າຂອງພຣະເຈົ້າ ). ຕໍ່ໄປເປັນຄຳເວົ້າຂອງພຣະເຈົ້າ *"ຈົ່ງລຸກຂຶ້ນຖແລງຄະດີຂອງເຈົ້າຕໍ່ພູເຂົາທັງຫລາຍ "* ຫາກຈະເວົ້າຫມົດທັງຂໍ້ 1 ຈະເປັນດັ່ງນີ້: ຜູ້ທຳນວາຍມີກາກ່າວວ່າ *"ຈົ່ງຟັງທີ່ພຣະຜູ້ເປັນເຈົ້າຊົງກ່າວ <u>ຈົ່ງລຸກຂຶ້ນຖແລງຄະດີຂອງເຈົ້າຕໍ່ພູເຂົາທັງຫລາຍ ຂໍໃຫ້ເນີນພູໄດ້ຍິນສຽງຂອງ ເຈົ້າ</u> "* ຄຳຖາມມີຢູ່ວ່າ ເປັນຫຍັງພຣະເຈົ້າຈຶ່ງບອກເຂົາລຸກຂຶ້ນຖແລງຄະດີຂອງເຂົາກັບພູເຂົາ ເພາະພູເຂົາປາກບໍ່ເປັນ.

## ຄ້າຍຄືຢູ່ຕໍ່ຫນ້າສານ 6:1-5

ຜູ້ທຳນວາຍມີກາກ່າວກັບຊົນຊາດອິສຣາເອນຄ້າຍກັບວ່າທ່ານໄດ້ກ່າວຄະດີທີ່ສານແຫ່ງໃດແຫ່ງນຶ່ງ, ພຣະເຈົ້າຊົງຮຽກເອີ້ນເອົາພູເຂົາໃຫ້ເປັນພະຍານຫລືເປັນຄະນະຕຸລາການ (Jury duty) ເພື່ອສອບສວນຄະດີຄວາມຜິດຂອງໄພ່ພົນຂອງພຣະອົງ ແລະພູເຂົາເຫລົ່ານີ້ກໍຈະເປັນພະຍານຢ່າງສັດຊື່ຢ່າງທີ່ເຂົາບໍ່ສາມາດແກ້ຕົວໄດ້ເພາະເຂົາໄດ້ສ້າງແທ່ນບູຊາ ຮູບໂຄຣົບຕ່າງໆເທິງພູສູງເຫລົ່ານັ້ນ ແລະພູເຫລົ່ານັ້ນແຫລະຈະຟ້ອງຕໍ່ພຣະເຈົ້າວ່າພວກເຂົາໄດ້ເຮັດແທ່ນບູຊາພຣະທຽມ ທີ່ເທິງພູເຂົາເຫລົ່ານັ້ນ (ປະຫວັດກະສັດທີນຶ່ງ 14:13, ເຢເຣມີຢາ 17:2-3 ແລະ ເອເຊກຽນ 20:28).

ຜູ້ທຳນວາຍມີກາຮ້ອງເປັ່ງສຽງໃສ່ອິສຣາເອນວ່າ "*ຈົ່ງຟັງທີ່ພຣະຜູ້ເປັນເຈົ້າຊົງກ່າວ* "ມີຄວາມໝາຍວ່າເມື່ອກ່ອນຟັງຢູ່ແຕ່ບໍ່ໄດ້ປະຕິບັດຕາມສິ່ງທີ່ໄດ້ຍິນ ບັດນີ້ຈົ່ງຟັງໃຫ້ດີພຣະເຈົ້າກຳລັງຕຽມການລົງໂທດພວກເຈົ້າເນື່ອງຈາກຄວາມບາບຂອງພວກເຈົ້າໂດຍຊົງກ່າວຖາມເຂົາວ່າ "*ໄພ່ພົນຂອງເຮົາເອີຍ ເຮົາໄດ້ເຮັດຫຍັງແດ່ແກ່ເຈົ້າ? ເຮົາໄດ້ເຮັດຫຍັງໃຫ້ເຈົ້າລຳບາກຍາກແຄ້ນແດ່? ຈົ່ງຕອບເຮົາມາເບິ່ງດູ* (ຂໍ້ 3). ເປັນຄຳຖາມຕັກເຕືອນໃຫ້ພວກອິສຣາເອນໄດ້ຄຶດເຖິງຄາວທີ່ພຣະອົງຊົງນຳເຂົາອອກຈາການເປັນຂ້ອຍຂ້າໃນປະເທດເອຢິບ. ໃນຄາວນັ້ນພວກເຂົາມີຄວາມທຸກຍາກລຳບາກພວກເຂົາຖືກກົດຂີ່ຂົ່ມເຫັງຈາກຄົນຕ່າງຊາດຈົນພວກເຂົາຄິດວ່າຈະມີໃຜຊ່ອຍເຂົາໄດ້ ແຕ່ພຣະເຈົ້າມີພຣະທັຍເມຕາສົງສານຈຶ່ງໄດ້ປົດປ່ອຍເຂົາອອກຈາກການເປັນຂ້າທາດໃນປະເທດເອຢິບໂດຍສົ່ງ ຜູ້ຮັບໃຊ້ຂອງພຣະອົງໄປເປັນຜູ້ນຳພາເຂົາອອກຈາກການເປັນຂ້ອຍຂ້າ. ມາບັດນີ້ພວກເຂົາພາກັນລືມທີ່ມາຂອງເຂົາວ່າ ເປັນໃຜ? ມາຈາກໃສ? ພວກເຂົາພາກັນລືມໄປວ່າຄັ້ງນຶ່ງເຂົາບໍ່ເຄີຽມີຊີວິດເປັນຂອງຕົນເອງຫລືເວົ້າອີກຢ່າງນຶ່ງ ແມ່ນເຂົາລືມພຣະຄຸນພຣະເຈົ້າຈົນເຮັດໃຫ້ພຣະເຈົ້າຮ້າຍແລະລົງໂທດເຂົາ. ທີ່ພຣະອົງຊົງກ່າວວ່າ *ເຮົາໄດ້ເຮັດຫຍັງແດ່ແກ່ເຈົ້າ?* ຫາກເວົ້າຕາມພາສາບ້ານເຮົາອາດຈະໝາຍຄວາມວ່າ ຈື່ໄດ້ບໍ່ທີ່ເຮົາໄດ້ເຮັດແກ່ເຈົ້າໃນອະດີດ?.

ພຣະອົງຊົງກ່າວອີກ ວ່າ "*ເຮົາໄດ້ນຳພວກເຈົ້າອອກຈາກເອຢິບ ເຮົາໄດ້ໄຖ່ພວກເຈົ້າອອກຈາກການເປັນຂ້ອຍຂ້າເຮົາໄດ້ສົ່ງໂມເຊ, ອາໂຣນ ແລະນາງມີຣິອາມ* (ມີຣິອາມແມ່ນນ້ອງສາວຂອງໂມເຊແລະອາໂຣນ) *ເພື່ອເປັນຜູ້ນຳພວກເຈົ້າ* " (ຂໍ້ 4). ພຣະເຈົ້າຊົງທວງໄພ່ພົນຂອງພຣະອົງເໝືອນກ່າວທວງຕໍ່ໜ້າຄະນະຕຸລາການແລະຕຸລານັ້ນແມ່ນພູເຂົາຕ່າງໆ ແລະພູເຂົາເຫລົ່ານີ້ຈະເປັນພະຍານຝ່າຍພຣະເຈົ້າເພື່ອລົງໂທດອິສຣາເອນ. ອິສຣາເອນໄດ້ສ້າງແທ່ນພູຊາພຣະທຽມທີ່ພູເຂົາເຫລົ່ານັ້ນ. ພຣະອົງຊົງເຕື່ອນເຂົາວ່າ "*ຈົ່ງລະນຶກເຖິງສິ່ງທີ່ລຳບາກ ເຈົ້າຊີວິດແຫ່ງໂມອາບວາງແຜນຕໍ່ສູ້ພວກເຈົ້າ ຈົ່ງລະນຶກເຖິງຖ້ອຍຄຳທີ່ບາລາອາມ* (ບາລາອາມແມ່ນຜູ້ທຳນວາຍອີກຜູ້ນຶ່ງ ພະບັນຍັດສອງ 23:4). ພຣະເຈົ້າຊົງກ່າວດ້ວຍພຣະພິໂຣດ ເພາະວ່າເມື່ອພຣະເຈົ້າຊົງໃຈດີເມຕາປານີພວກເຂົາກໍບໍ່ຢຳເກງແລະຂອບພຣະຄຸນພຣະອົງ. ບົດຮຽນຕອນນີ້ສອນເຮົາວ່າ ເມື່ອພຣະເຈົ້າໃຈດີ ມີເມຕາເຮົາບໍ່ຄວນລະເລີຽໄປເຮັດຜິດຕໍ່ຄຳສອນຂອງພຣະອົງ ເຮົາຄວນຂອບພຣະຄຸນແຕ່ລະວັນໆ ເພື່ອເຮົາຈະບໍ່ຫລົງລືມພຣະຄຸນແລ້ວຖືກລົງໂທດຢ່າງມະຫັນ.

<u>ປະຊາຊົນຂໍຕໍ່ລອງ</u> 6:6-7

ຫລັງຈາກເຂົາໄດ້ຍິນພຣະເຈົ້າກ່າວແລ້ວມີຜູ້ນຶ່ງໃນພວກໄພ່ພົນຖາມມີກາວ່າ "*ເມື່ອຂ້ານ້ອຍມານະມັສການພຣະຜູ້ເປັນເຈົ້າແຫ່ງສວັນ ຂ້ານ້ອຍຈະນຳເອົາສິ່ງໃດເຂົ້າມາເຝົ້າພຣະອົງ? ຂ້ານ້ອຍຈະນຳເອົາລູກງົວຕົວຕຸ້ຍພີ ທີ່ສຸດມາເຜົາຖວາຍບູຊາພຣະອົງ? ພຣະເຈົ້າຈະພໍພຣະທັຍບໍ່? ຖ້າຂ້ານ້ອຍນຳແກະພັນໂຕ ຫລືນ້ຳມັນສົດອັນບໍ່ໝົດຈັກເທື່ອມາຖວາຍພຣະອົງ? ຂ້ານ້ອຍຄວນຖວາຍລູກກົກໃຫ້ພຣະອົງເພື່ອໄຖ່ຄວາມບາບຂອງຂ້ານ້ອຍບໍ່?* ເຂົາກ່າວເຊັ່ນນີ້ກໍເພາະວ່າເຂົາຮູ້ດີວ່າເຂົາໄດ້ຜິດຕໍ່ພຣະເຈົ້າແລ້ວ ແລະພຣະເຈົ້າພ້ອມທີ່ຈະລົງໂທດເຂົາ ດັ່ງນັ້ນເຂົາຈຶ່ງຕໍ່ລອງກັບມີກາຜູ້ຮັບໃຊ້ພຣະເຈົ້າ ໂດຍຂໍເອົາສິ່ງຂອງຕ່າງໆທີ່ກ່າວມານັ້ນມາທົດແທນຄວາມບາບຂອງເຂົາເພື່ອພຣະເຈົ້າຈະບໍ່ລົງໂທດເຂົາ.

ຕາມກົດຣະບຽບຂອງປູ່ຍ່າຕາຍາຍຂອງໄພ່ພົນພຣະເຈົ້າແລ້ວເຂົາຮູ້ດີວ່າພຣະເຈົ້າໄດ້ຊົງສັ່ງໃຫ້ເຮັດສອງຢ່າງຕໍ່ໄປນີ້ຄື;
1. ເຂົາຕ້ອງມາຂາບໄຫວ້ພຣະອົງ (ແປວ່າມານະມັສການພຣະອົງ ໃນພຣະທັມກົດຣະບຽບຂອງພວກເລວີບົດນຶ່ງ).
2. ເຂົາຕ້ອງນຳງົວນ້ອຍມາຖວາຍພຣະເຈົ້າ (ໝາຍຄວາມວ່າເວລານະມັສການຕ້ອງມີການຖວາຍໃນພຣະທັມກົດຣະບຽບຂອງພວກເລວີ 9:2-3).

ຜູ້ທີ່ຖາມຄຳຖາມນີ້ເປັນຄົນທີ່ຮູ້ກົດຣະບຽບຂອງຊາວເລວີດີ ເຫດທີ່ລາວຖາມເຊັ່ນນັ້ນ ເພາະລາວຮູ້ດີວ່າໄດ້ເຮັດຜິດຕໍ່ພຣະຜູ້ເປັນເຈົ້າແລ້ວ ລາວຈຶ່ງຫວັງໃຈວ່າໃຫ້ມີກາໄປຕໍ່ລອງກັບພຣະເຈົ້າຕາງໜ້າພວກເຂົາດ້ວຍສິ່ງຂອງທີ່ໄດ້ກ່າວມາໃນຂໍ້ 6-7 ນັ້ນ. ຄວາມຄິດນັ້ນເປັນຄວາມຄິດບໍ່ຖືກຕ້ອງທີ່ຄິດຈະເອົາສິ່ງຂອງເຫລົ່ານັ້ນມາຕໍ່ລອງກັບພຣະເຈົ້າ.

ພວກເຂົາຄິດວ່າພຣະເຈົ້າຢາກໄດ້ສິ່ງຂອງເຫລົ່ານັ້ນຈາກພວກເຂົາຈຶ່ງກ້າຕໍ່ຮ້ອງກັບມີກາ.

## <u>ຄໍາຕອບຂອງພຣະເຈົ້າ</u> 6:8

ມີກາຕອບເຂົາວ່າ *"ມະນຸດເອີຍ ພຣະຜູ້ເປັນເຈົ້າໄດ້ບອກພວກເຈົ້າແລ້ວວ່າແມ່ນຫຍັງດີ ສິ່ງພຣະອົງປະສົງຈາກເຈົ້າກໍຄື ໃຫ້ກະທໍາຄວາມຍຸຕິທໍາ ສະແດງຄວາມຮັກໝັ້ນຄົງ ແລະເຊື່ອຟັງພຣະຜູ້ເປັນເຈົ້າຂອງເຈົ້າຢ່າງອ່ອນນ້ອມ"* (ຂໍ້ 8). ມີກາບໍ່ໄດ້ຕອບຄໍາຖາມໃນຂໍ້ 6-7 ໂດຍກົງ ແຕ່ໄດ້ບອກເຂົາວ່າ *ພຣະຜູ້ເປັນເຈົ້າໄດ້ບອກພວກເຈົ້າແລ້ວ* ຈາກນັ້ນມີກາກໍບອກເຂົາສິ່ງທີ່ພຣະເຈົ້າໄດ້ບອກເຂົາມາກ່ອນແລ້ວຄື;

1. <u>ໃຫ້ກະທໍາຄວາມຍຸຕິທໍາ.</u> ແມ່ນຫລັກຈະຣິຍະທັມຂອງພຣະຄັມພີເດີມ ໝາຍເຖິງເຂົ້າຂອງເງິນທອງຕ່າງ ໆ ແລະການຢູ່ຮ່ວມກັນຢ່າງຖືກຕ້ອງປອງດອງ ບໍ່ໃຫ້ມີການເອົາປຽບເອົາລັດ ຫລືສໍ້ໂກງກັນແລະກັນ.

2. <u>ສະແດງຄວາມຮັກໝັ້ນຄົງ.</u> ໝາຍເຖິງການຮູ້ຈັກບຸນຄຸນ ຕົວຢ່າງນາງອາຣາບກ່າວວ່າ *"ບັດນີ້ຂໍພວກທ່ານຈົ່ງສາບານ* (ສັນຍາ) *ຊື່ອອງພຣະພັກຂອງພຣະເຈົ້າ ເນື່ອງຈາກຄວາມດີທີ່ຂ້ານ້ອຍໄດ້ເຮັດມາຕໍ່ພວກທ່ານນີ້ ຂໍໃຫ້ຄິດເຫັນຂ້ານ້ອຍ ແລະຂໍໃຫ້ສະແດງຫລັກຖານກ່ຽວກັບຄໍາສາບານນີ້ແກ່ຂ້ານ້ອຍ ເພື່ອຊ່ອຍພໍ່ແມ່ອ້າຍນ້ອງຕລອດທັງຄອບຄົວຂອງຂ້ານ້ອຍໃຫ້ພົ້ນຈາກຄວາມຕາຍ"* ເຂົາຕອບນາງວ່າ *"ພວກຂ້ອຍຈະຕອບສນອງຄຸນງາມຄວາມດີແລະຄວາມສັດຊື່ຂອງເຈົ້າໃນເວລາທີ່ພຣະຜູ້ເປັນເຈົ້າຊົງປະທານແຜ່ນດິນນີ້ໃຫ້ແກ່ພວກຂ້ອຍ* (ໂຢຊວຍ 2:12-14).

3. <u>ເຊື່ອຟັງພຣະຜູ້ເປັນເຈົ້າຂອງເຈົ້າຢ່າງອ່ອນນ້ອມ.</u> ນ້ອມໃຈເຊື່ອຟັງຄໍາສັ່ງສອນຂອງພຣະເຈົ້າດ້ວຍຄວາມຖ່ອມໃຈ. ທັງສາມຢ່າງທີ່ມີກາໄດ້ກ່າວມານີ້ເປັນນໍ້າພຣະທັຍພຣະເຈົ້າໃຫ້ໄພ່ພົນຂອງພຣະອົງໄດ້ປະຕິບັດຕາມ. ດັ່ງນັ້ນພວກອິສຣາເອນໃນສມັຍນັ້ນທີ່ໄດ້ເຮັດຜິດບາບຕໍ່ອົງພຣະຜູ້ເປັນເຈົ້າກາຍເປັນບົດຮຽນທີ່ດີສໍາລັບຄົນສມັຍນີ້. ຄວາມຜິດທີ່ເຂົາໄດ້ເຮັດ ນັ້ນໄດ້ນໍາພາເຂົາໄປເຖິງການລົງໂທດ. ດ້ວຍເຫດນີ້ເພື່ອເປັນການຫລີກເວັ້ນຈາກການລົງໂທດເຮົາທັງຫລາຍຄວນເອົາບົດຮຽນທີ່ອິສຣາເອນໄດ້ຮັບນັ້ນມາໃຊ້ໃນຊີວິດຂອງເຮົາ ແລ້ວເຮົາທັງຫລາຍກໍຈະບໍ່ຖືກໂທດ.

## <u>ຄໍາຖາມ</u>

1. ເປັນຫຍັງພຣະເຈົ້າຈຶ່ງເອົາເຣື່ອງກັບໄພ່ພົນຂອງພຣະອົງ?

2. ພຣະອົງເອົາພູເຂົາເປັນພະຍານຝ່າຍພຣະອົງ ທ່ານເຂົ້າໃຈແນວໃດ?

3. ພຣະອົງຊົງຖາມເຂົາວ່າ *ເຮົາໄດ້ເຮັດຫຍັງແດ່ແກ່ເຈົ້າ* ມີຄວາມໝາຍຢ່າງໃດ?

4. ພຣະອົງຊົງບອກເຂົາເຖິງສິ່ງໃດທີ່ພຣະອົງຊົງຊ່ອຍເຂົາ?

5. ເຂົາຕໍ່ລອງພຣະອົງແນວໃດເພື່ອບໍ່ໃຫ້ພຣະເຈົ້າລົງໂທດ?

6. ມີກາຕອບເຂົາວ່າແນວໃດ?

7. ບົດຮຽນວັນນີ້ສອນເຮົາຫຍັງແດ່?